رئاسة الشؤون الدينية
بالمسجد الحرام والمسجد النبوي

إِقَامَةُ البَرَاهِينِ عَلَى حُكْمِ مَنِ اسْتَغَاثَ بِغَيرِ اللَّهِ | لاو | ລາວ

ການສະແດງຫຼັກຖານຢ່າງ ຊັດເຈນ ກ່ຽວກັບຂໍ້ຕັດສິນ ຂອງຜູ້ທີ່ຂໍຄວາມຊ່ວຍເຫຼືອ ຈາກຜູ້ອື່ນນອກຈາກອັນລ່ອຮ໌

ຂຽນໂດຍ ສາດສະດາຈານຜູ້ຊົງຄຸນນະວຸດ
ອັບດຸລອະຊີຊ ບິນ ອັບດຸລລ່ຫ໌ ບິນ ບາຊ

إِقَامَةُ البَرَاهِينِ عَلَى
حُكْمِ مَنِ اسْتَغَاثَ بِغَيرِ اللهِ

ການສະແດງຫຼັກຖານຢ່າງຊັດເຈນ
ກ່ຽວກັບຂໍ້ຕັດສິນຂອງຜູ້ທີ່ຂໍຄວາມຊ່ວຍເຫຼືອ
ຈາກຜູ້ອື່ນນອກຈາກອັນລ໋ອຮ໌

لِسَمَاحَةِ الشَّيْخِ العَلَّامَةِ
عَبْدِ العَزِيزِ بْنِ عَبْدِ اللهِ بْنِ بَازٍ
رَحِمَهُ اللهُ

ຂຽນໂດຍ ສາດສະດາຈານຜູ້ຊົງຄຸນນະວຸດ
ອັບດຸລອະຊີຊ ບິນ ອັບດຸລລ໋ຫ໌ ບິນ ບາຊ

بِسْمِ اللهِ الرَّحْمَنِ الرَّحِيمِ

ສານສະບັບ ທີ່ສອງ:
ວ່າດ້ວຍຫຸກົ່ມຂອງການວິງວອນຂໍຄວາມຊ່ວຍເຫຼືອ ຕໍ່ທ່ານນະບີ ﷺ

ມວນການສັນລະເສີນເປັນສິດຂອງອັລລ໋ວ, ແລະ ຂໍສໍລະວາ ດ ແລະ ສະລາມຈົ່ງປະສົບແດ່ຣໍຊູລຂອງພຣະອົງ, ຕະຫຼອດຈົນ ວົງວານ, ບັນດາຊໍຮາບະຫ໌ ແລະ ບັນດາຜູ້ທີ່ຈະເດີນຮ່ອຍຕາມ ແນວທາງຂອງທ່ານ.

ສ່ວນຕໍ່ໄປນີ້: ໜັງສືພິມ ອັນ-ນຸຈຕະມະອ໌ ຂອງຊູເວດ ໄດ້ລົງພິມບົດກອນຫຼາຍບົດໃນສະບັບທີ 15, ລົງວັນທີ 19/4/1390 ຮຈ. ພາຍໃຕ້ຫົວຂໍ້: (ໃນການລະນຶກເຖິງວັນເກີດອັນຊົ່ງກຽດຂອງນະບີ), ເຊິ່ງບົດກອນເຫຼົ່ານີ້ມີເນື້ອໃນກ່ຽວກັບການຂໍຄວາມຊ່ວຍເຫຼືອ ແລະ ການຂໍໄຊຊະນະຈາກທ່ານນະບີ ﷺ; ເພື່ອໃຫ້ເພີ່ນຊ່ວຍເຫຼືອ, ປະທານໄຊຊະນະ ແລະ ປົດປ່ອຍປະຊາຊາດ (ອຸມມະຫ໌) ອອກຈາກຄວາມແຕກແຍກ ແລະ ຄວາມຂັດແຍ້ງ ທີ່ກຳລັງປະເຊີນຢູ່, ລົງນາມໂດຍຜູ້ທີ່ໃສ່ນາມຕົນເອງວ່າ: (ອາ ມີນະຫ໌), ແລະ ຕໍ່ໄປນີ້ແມ່ນເນື້ອໃນບາງສ່ວນຂອງບົດກອນທີ່ໄດ້ກ່າວເຖິງ:

(ໂອ້ ທ່ານຣໍຊູລຂອງອັລລ໋ວ, ໂປດຊ່ວຍໂລກທີ່ກຳລັງກໍ່ສົງຄາມ ແລະ ຖືກເຜົາຜານຈາກແປວໄຟຂອງມັນດ້ວຍເຖີດ).

(ໂອ້ ທ່ານສາສະນະທູດຂອງອັລລ໋ວ໌ເອີຍ ໂປດຊ່ວຍເຫຼືອປະຊາຊາດ... ທີ່ຫຼົງທາງໃນຄວາມມືດມົນແຫ່ງຄວາມສົງໄສມາເປັນເວລາຍາວນານ).

(ໂອ້ ສາສະນະທູດຂອງອັລລໍ່ຫ໌, ຈົ່ງຊ່ວຍກູ້ປະຊາຊາດ... ທີ່ໃນ ຄວາມສັບສົນຂອງຄວາມໂສກເສົ້າ ວິໄສທັດຂອງພວກເຂົາໄດ້ ສູນຫາຍໄປ).

ແລະ ກ່າວຕໍ່ອີກວ່າ:

(ຂໍໂປດເລັ່ງໄຊຊະນະ ດັ່ງທີ່ພຣະອົງໄດ້ຊົງເລັ່ງມັນ... ໃນອັນບ ະດັຣ ເມື່ອທ່ານໄດ້ວິງວອນຕໍ່ອັລລໍ່ຫ໌).

(ຄວາມຕ່ຳຕ້ອຍຈຶ່ງໄດ້ຫັນປ່ຽນເປັນໄຊຊະນະອັນສະຫງ່າງາ ມ... ແທ້ຈິງ ອັລລໍ່ຫ໌ຊົງມີກອງທັບທີ່ສາຍຕາບໍ່ສາມາດເຫັນໄ ດ້).

ໃນລັກສະນະນີ້ ນັກຂຽນຍິງຜູ້ນີ້ໄດ້ມຸ້ງການຮຽກຮ້ອງ ແລະ ການຂໍຄວາມຊ່ວຍເຫຼືອຂອງນາງໄປຍັງທ່ານນະບີ ຊ່ລລັລລ໋ຮຸ ອະໄລຮິ ອະສັລລ໋ຳ, ໂດຍຂໍຈາກທ່ານໃຫ້ເລັ່ງນຳເອົາໄຊຊະນະມາ ຊ່ວຍເຫຼືອປະຊາຊາດ, ໂດຍທີ່ນາງລືມ - ຫຼື ບໍ່ຮູ້ - ວ່າໄຊຊະນະນັ້ນ ຢູ່ໃນອຳນາດຂອງອັລລໍ່ຫ໌ພຽງອົງດຽວ, ບໍ່ແມ່ນຢູ່ໃນກຳມືຂອງ ທ່ານນະບີ ຊ່ລລັລລ໋ຮຸ ອະໄລຮິ ອະສັລລ໋ຳ ແລະ ບໍ່ແມ່ນຂອງບັນ ດາສິ່ງທີ່ຖືກສ້າງອື່ນໆ ເລີຍ, ດັ່ງທີ່ອັລລໍ່ຫ໌ ຜູ້ຊົງສູງສົ່ງ ໄດ້ຕຣັດໄ ວ້ໃນຄຳພີອັນຊັດເຈນຂອງພຣະອົງວ່າ:

﴿...وَمَا النَّصْرُ إِلَّا مِنْ عِنْدِ اللَّهِ الْعَزِيزِ الْحَكِيمِ﴾

(...ແລະບໍ່ມີການຊ່ວຍເຫຼືອໃດໆ ນອກຈາກທີ່ມາຈາກອັລລໍ ຫ໌ ຜູ້ຊົງເດສານຸພາບ ຜູ້ຊົງປຣິຊາຍານ) [ສູເຣາະຫ໌ ອະລາອິມຣ ອນ: 126], ແລະ ອັລລໍ່ຫ໌ຜູ້ຊົງກຽງໄກ ໄດ້ຕຣັດອີກວ່າ:

﴿إِنْ يَنْصُرْكُمُ اللَّهُ فَلَا غَالِبَ لَكُمْ وَإِنْ يَخْذُلْكُمْ فَمَنْ ذَا الَّذِي يَنْصُرُكُمْ مِنْ بَعْدِهِ...﴾

(ຫາກອັລລ໋ອ ຊົງຊ່ອຍເຫລືອພວກເຈົ້າ ກ່ໍບໍ່ມີຜູ້ໃດຈະຊະນະພວກເຈົ້າໄດ້ ແລະ ຫາກພຣະອົງຊົງທອດຖິ້ມພວກເຈົ້າ ແລ້ວໃຜເລ່ົາທີ່ຈະຊ່ອຍເຫລືອພວກເຈົ້າໄດ້ ນອກເໜືອຈາກພຣະອົງ..) [ສູເຣາະ ອະລາອິມຣອນ: 160].

ການກະທ່ໍາໃນການອອນຂໍ ແລະ ການຂໍຄວາມຊ່ອຍເຫລືອ ນີ້ ແມ່ນການອຸທິດການອິບາດະ ໜ໋ປະເພດໜຶ່ງໃຫ້ກັບສິ່ງອື່ນ ນອກເໜືອຈາກພຣະເຈົ້າອັລລ໋ອ; ເປັນທີ່ຢືນຢັນຢ່ໍາງຈະແຈ້ງ ຕາມຫຼັກຖານ ແລະ ມະຕິເອກະພາບແລ້ວວ່ໍາ: ສິ່ງດັ່ງກ່ໍາວບໍ່ເ ປັນທີ່ອະນຸຍາດ, ແລະ ແທ້ຈິງ ອັລລ໋ອ ຜູ້ຊົງສູງສົ່ງ ໄດ້ຊົງສ້ໍາງສັ ບພະສິ່ງທ້ັງຫຼາຍ ເພື່ອໃຫ້ພວກເຂົ້າເຄ໋ໍາລົບພັກດີຕ່ໍພຣະອົງ, ແລະ ໄດ້ສົ່ງບັນດ໋ໍາຣ໋ຊູລ ແລະ ປະທານບັນດ໋ໍາຄ໋ໍາພີລົ່ງມາ ເພື່ອ ອະທິບ໋ໍາຍຊີ້ແຈ້ງ ແລະ ເຊີນຊວນໄປສູ່ການເຄ໋ໍາລົບພັກດີນັ້ນ, ດັ່ງທີ່ພຣະອົງຜູ້ຊົງສູງສົ່ງໄດ້ຕຣັດໄວ້:

﴿وَمَا خَلَقْتُ الْجِنَّ وَالْإِنْسَ إِلَّا لِيَعْبُدُونِ﴿٥٦﴾﴾

(ແລະ ຂ້ໍາບໍ່ໄດ້ສ້ໍາງຈິນ (ຜີ) ແລະ ມະນຸດ ມ໋ໍາເພື່ອຈຸດປະສົ່ງ ອື່ນໃດ ເວ້ັນແຕ່ການກ໋ໍາບໃຫວ້ເຄ໋ໍາລົບພັກດີຕ່ໍຂ້ໍາ) [ອັຊ-ຊ໋ໍາຣິ ຍ໋ໍາຕ : 56], ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່ໍາ:

﴿وَلَقَدْ بَعَثْنَا فِي كُلِّ أُمَّةٍ رَسُولًا أَنِ اعْبُدُوا اللَّهَ وَاجْتَنِبُوا الطَّاغُوتَ...﴾

(ແລະ ໂດຍແນ່ນອນ ເຮ໋ໍາໄດ້ແຕ່ຕ້ັງຣ໋ຊູລມາຍ້ັງແຕ່ລະປະ ຊ໋ໍາຊ໋ໍາດ (ໂດຍຣ໋ຊູລຈະກ່ໍາວແກ່ປະຊ໋ໍາຊ໋ໍາດນ້ັນໆ ວ່ໍາ) ພວກທ່ໍາ ນຈ່ົງເຄ໋ໍາລົບພັກດີຕ່ໍອັລລ໋ອ ແລະ ຈ່ົງຫຼີກຫນີ ອອກຫ່ໍ່າງຈາກ ພວກຕ໋ໍາ ຖ ຸດຮູບປ້ັນຈະເວ້ັດ...) [ອັນ-ນະ ໜ໋ ລ: 36] ແລະ ພຣະຜູ້ ຊົງສູ່ງສົ່ງໄດ້ຕຣັດວ່ໍາ:

﴿وَمَا أَرۡسَلۡنَا مِن قَبۡلِكَ مِن رَّسُولٍ إِلَّا نُوحِيٓ إِلَيۡهِ أَنَّهُۥ لَآ إِلَٰهَ إِلَّآ أَنَا۠ فَٱعۡبُدُونِ ٢٥﴾

(ແລະ ເຮົາບໍ່ໄດ້ສົ່ງຣໍຊູລຄົນໃດມາກ່ອນຫນ້າເຈົ້າ ຍົກເວັ້ນ ແຕ່ເຮົາໄດ້ອະຫ໌ຮີໃຫ້ແກ່ເຂົາວ່າ ແທ້ຈິງ ບໍ່ມີພຣະເຈົ້າອື່ນໃດ ທີ່ແທ້ຈິງນອກຈາກຂ້າ ດັ່ງນັ້ນພວກເຈົ້າຈົ່ງເຄົາລົບພັກດີຕໍ່ຂ້າ) [ອັລ-ອໍາບີຢາ: 25] ແລະ ອັລລ໋ໍາຜູ້ຊົງກຽງໄກ ໄດ້ຕຣັດວ່າ:

﴿الر كِتَٰبٌ أُحۡكِمَتۡ ءَايَٰتُهُۥ ثُمَّ فُصِّلَتۡ مِن لَّدُنۡ حَكِيمٍ خَبِيرٍ ١ أَلَّا تَعۡبُدُوٓاْ إِلَّا ٱللَّهَ إِنَّنِي لَكُم مِّنۡهُ نَذِيرٞ وَبَشِيرٞ ٢﴾

(ອະລິຟ ລາມ ຣ (ນີ້ຄື) ຄໍາພີທີ່ໂອງການທັ້ງຫລາຍຂອງມັນ ຖືກອາງໄອ້ຢ່າງຣັດກຸມຊັດແຈ້ງ ແລະ ຖືກຈັດຈໍາແນກແຍກ (ຂໍ້ບັນຊາຕ່າງ ໆ) ຢ່າງຊັດແຈ້ງ ຈາກພຣະຜູ້ຊົງສະຫຼາດຫຼັກແຫລມ ແລະ ຜູ້ຊົງຮອບຮູ້ລ່ຽວລານ)

ເພື່ອພວກເຈົ້າຈະບໍ່ໄປເຄົາລົບພັກດີຕໍ່ຜູ້ອື່ນນອກຈາກອັລລ໋ໍາ ແທ້ຈິງຂ້ອຍໄດ້ຮັບການແຕ່ງຕັ້ງຈາກພຣະອົງ ມາຍັງພວກທ່ານເພື່ອເປັນຜູ້ຕັກເຕືອນ ແລະ ຜູ້ແຈ້ງຂ່າວດີ)

[ຮູດ: 1-2].

ໃນບັນດາອາຍາຕທີ່ຊັດເຈນເຫຼົ່ານີ້ ພຣະອົງອັລລ໋ໍາໄດ້ຊົງຊີ້ແຈ້ງວ່າ ພຣະອົງບໍ່ໄດ້ຊົງສ້າງຈິນ ແລະ ມະນຸດຂຶ້ນມາ ເວັ້ນເສຍ ແຕ່ເພື່ອໃຫ້ພວກເຂົາເຄົາລົບພັກດີຕໍ່ພຣະອົງພຽງຜູ້ດຽວ ທີ່ບໍ່ມີສິ່ງໃດທຽບຄຽງໄດ້, ແລະ ໄດ້ຊົງຊີ້ແຈ້ງວ່າ ພຣະອົງໄດ້ຊົງສົ່ງບັນດາຣໍຊູລມາເພື່ອສັ່ງໃຊ້ ໃນການອິບາດะຫ໌ນີ້ ແລະ ຫ້າມປາມຈາກສິ່ງທີ່ກົງກັນຂ້າມ, ພ້ອມດຽວກັນນີ້ ພຣະອົງກໍ່ໄດ້ຊົງເຮັດໃຫ້ບັນດາອາຍາຕໃນຄໍາພີຂອງພຣະອົງຊົງຄວາມຊັດເຈນ ແລະ ລະອຽດ ເພື່ອວ່າຈະບໍ່ມີການເຄົາລົບສັກກາລະສິ່ງອື່ນໃດນອກຈາກພຣະອົງ.

ແລະ ເປັນທີ່ຮູ້ກັນດີວ່າ ການອິບາດະຫ໌ນັ້ນໝາຍເຖິງ: ການໃຫ້ເອກະພາບຕໍ່ອັລລໍ ແລະ ການເຊື່ອຟັງພຣະອົງ, ໂດຍການປະຕິບັດຕາມບັນດາພຣະບັນຊາຂອງພຣະອົງ ແລະ ລະຖິ້ມບັນດາຂໍ້ຫ້າມຂອງພຣະອົງ, ແລະ ອັລລໍກໍໄດ້ຊົງບັນຊາ ແລະ ໄດ້ຊົງແຈ້ງກ່ຽວກັບເລື່ອງດັ່ງກ່າວໄວ້ໃນຫລາຍໆ ອາຍະ, ເຊິ່ງໜຶ່ງໃນນັ້ນກໍຄື ພຣະດຳລັດຂອງພຣະອົງທີ່ວ່າ:

﴿وَمَا أُمِرُوا إِلَّا لِيَعْبُدُوا اللَّهَ مُخْلِصِينَ لَهُ الدِّينَ حُنَفَاءَ...﴾

(ແລະ ພວກເຂົາບໍ່ໄດ້ຖືກບັນຊາໃຫ້ກະທຳອື່ນໃດ ນອກຈາກເພື່ອເຄົາລົບພັກດີຕໍ່ອັລລໍ ເປັນຜູ້ມີເຈດຕະນາບໍລິສຸດໃນການພັກດີຕໍ່ພຣະອົງ ເປັນຜູ້ຢູ່ໃນແນວທາງທີ່ທ່ຽງກ້ຽ...) [ອັລ-ໄບຢິນະ: 5] ແລະ ດຳລັດຂອງພຣະອົງທີ່ວ່າ :

﴿وَقَضَى رَبُّكَ أَلَّا تَعْبُدُوا إِلَّا إِيَّاهُ...﴾

(ແລະ ພຣະເຈົ້າຂອງເຈົ້າບັນຊາວ່າ ພວກເຈົ້າຢ່າເຄົາລົບພັກດີຜູ້ໃດນອກຈາກພຣະອົງເທົ່ານັ້ນ...) [ອັລ-ອິສຣໍ: 23] ແລະ ໃນໂອງການຂອງອັລລໍໄດ້ກ່າວວ່າ:

﴿إِنَّآ أَنزَلۡنَآ إِلَيۡكَ ٱلۡكِتَٰبَ بِٱلۡحَقِّ فَٱعۡبُدِ ٱللَّهَ مُخۡلِصٗا لَّهُ ٱلدِّينَ ۝٢ أَلَا لِلَّهِ ٱلدِّينُ ٱلۡخَالِصُۚ وَٱلَّذِينَ ٱتَّخَذُواْ مِن دُونِهِۦٓ أَوۡلِيَآءَ مَا نَعۡبُدُهُمۡ إِلَّا لِيُقَرِّبُونَآ إِلَى ٱللَّهِ زُلۡفَىٰٓ إِنَّ ٱللَّهَ يَحۡكُمُ بَيۡنَهُمۡ فِي مَا هُمۡ فِيهِ يَخۡتَلِفُونَۗ إِنَّ ٱللَّهَ لَا يَهۡدِي مَنۡ هُوَ كَٰذِبٞ كَفَّارٞ ۝٣﴾

(ແທ້ຈິງ ເຮົາໄດ້ປະທານຄຳພີວິວລ໌ມາແກ່ເຈົ້າດ້ວຍຄວາມຈິງ, ດັ່ງນັ້ນ ເຈົ້າຈົ່ງເຄົາລົບພັກດີຕໍ່ອັລລໍ ໂດຍເປັນຜູ້ຖະອາຍການເຄົາລົບຢ່າງບໍລິສຸດແດ່ພຣະອົງ (ພຽງອົງດຽວເທົ່ານັ້ນ)

ຈົ່ງຮູ້ໄວ້ເຖີດວ່າ ສຳຫຼັບອັລລໍແລ້ວ (ບໍ່ມີພາຄີໃດ ໆ ອີກນອກຈາກ) ການເຄົາລົບພັກດີທີ່ຜ່ອງແຜ້ວບໍລິສຸດ ແລະ ບັນດາ

ຜູ້ທີ່ຍຶດຖືສິ່ງອື່ນຈາກອັລລໍຮ໌ໃຫ້ເປັນອະລີຍ໌ (ຜູ້ຄຸ້ມຄອງ) ເພື່ອ ເຄົາລົບພັກດີ (ພວກເຂົາຈະກ່າວວ່າ) ເຮົາບໍ່ໄດ້ເຄົາລົບພັກດີພ ວກເຂົາເຫລົ່ານັ້ນ ເວັ້ນແຕ່ເພື່ອເຂົາເຫລົ່ານັ້ນຈະເຮັດໃຫ້ເຮົາໃ ກ້ຊິດຕໍ່ອັລລໍຮ໌ ແທ້ຈິງອັລລໍຮ໌ ຈະຊົງຈະຕັດສິນພວກເຂົາໃນສິ ່ງທີ່ພວກເຂົາຂັດແຍ້ງກັນໃນເລື່ອງນັ້ນ ແທ້ຈິງອັລລໍຮ໌ຈະບໍ່ຊົງ ຊີ້ນຳທາງແກ່ຜູ້ກ່າວເທັດ (ຄົນຂີ້ຕົວະ) ຜູ້ບໍ່ສຳນຶກບຸນຄຸນປະ ຕິເສດ) [ອັຊ-ຊຸມັຣ : 2-3].

ໂອງການຕ່າງ ໆ ໃນຄວາມໝາຍເຊັ່ນນີ້ມີຢູ່ຫຼວງຫລາຍ, ແ ລະ ທັງໝົດນັ້ນລ້ວນແລ້ວແຕ່ບົ່ງຊີ້ເຖິງຄວາມຈຳເປັນທີ່ຕ້ອງ ມອບການເຄົາລົບພັກດີຕໍ່ອັລລໍຮ໌ພຽງອົງດຽວເທົ່ານັ້ນ, ແລະ ໃ ຫ້ລະຖິ້ມການເຄົາລົບສິ່ງອື່ນນອກເໜືອຈາກພຣະອົງ ຈາກບັ ນດານະບີ ແລະ ຜູ້ອື່ນໆ.

ເປັນທີ່ແນ່ນອນວ່າ ການດຸອາ ແມ່ນການອີບາດະຫ໌ປະເພ ດໜຶ່ງທີ່ສຳຄັນ ແລະ ຄອບຄຸມທີ່ສຸດ, ຈຶ່ງຈຳເປັນຕ້ອງອຸທິດກາ ນດຸອານັ້ນໃຫ້ແດ່ອັລລໍຮ໌ພຽງອົງດຽວ, ດັ່ງທີ່ອັລລໍຮ໌ ໄດ້ກ່າວ ອ່ານ:

﴿فَادْعُوا اللَّهَ مُخْلِصِينَ لَهُ الدِّينَ وَلَوْ كَرِهَ الْكَافِرُونَ﴿١٤﴾﴾

(ດັ່ງນັ້ນພວກເຈົ້າຈົ່ງອ້ອນວອນຕໍ່ອັລລໍຮ໌ ໂດຍເປັນຜູ້ຖະວາ ຍການເຄົາລົບພັກດີຢ່າງບໍລິສຸດໃຈແດ່ພຣະອົງເທົ່ານັ້ນ ເຖິງແ ມ້ວ່າພວກປະຕິເສດສັດທາຈະກຽດຊັງກໍຕາມ) [ກໍຟິຣ : 14], ແລະ ພຣະຜູ້ຊົງເດຊານຸພາບໄດ້ກ່າວວ່າ:

﴿وَأَنَّ الْمَسَاجِدَ لِلَّهِ فَلَا تَدْعُوا مَعَ اللَّهِ أَحَدًا﴿١٨﴾﴾

(ແລະ ແທ້ຈິງບັນດາມັສຍິດນັ້ນເປັນຂອງອັລລໍຮ໌ ດັ່ງນັ້ນ ພວກເຈົ້າຢ່າໄດ້ອ້ອນວອນຂໍຜູ້ໃດຄຽງຄູ່ກັບອັລລໍຮ໌)

[ອັລຈິນ : 18] ແລະ ຄຳຊີ້ແນະນີ້ ທີ່ໃຫ້ວິງວອນຂໍຕໍ່ອັລລໍຮ໌ ພຽງພຣະອົງດຽວນັ້ນ ຄອບຄຸມສັບພະສິ່ງທີ່ຖືກສ້າງທັງໝົດ ນັບຕັ້ງແຕ່ບັນດາສາດສະດາທູດ ແລະ ຜູ້ອື່ນໆ; ແລະ ຄຳດຳລັດຂອງພຣະອົງທີ່ວ່າ:

﴿وَلَا تَدۡعُ مِن دُونِ ٱللَّهِ مَا لَا يَنفَعُكَ وَلَا يَضُرُّكَ فَإِن فَعَلۡتَ فَإِنَّكَ إِذٗا مِّنَ ٱلظَّٰلِمِينَ ١٠٦﴾

(ແລະ ເຈົ້າຢ່າໄດ້ວິງວອນສິ່ງອື່ນໃດນອກເໜືອຈາກອັລລໍຮ໌, ສິ່ງທີ່ບໍ່ໃຫ້ຄຸນປະໂຫຍດແກ່ເຈົ້າ ແລະ ບໍ່ໃຫ້ໂທດແກ່ເຈົ້າ, ຫາກເຈົ້າກະທຳ (ຊຸ່ນນັ້ນ) ແນ່ນອນເມື່ອນັ້ນເຈົ້າກໍ່ຈະຢູ່ໃນກຸ່ມຂອງບັນດາຜູ້ອະທຳ) [ຢູນຸສ : 106], ແລະ ນີ້ຄືຄຳຕຣັດທີ່ກ່າວຕໍ່ທ່ານນະບີ ﷺ, ແລະເປັນທີ່ຊາບກັນດີວ່າ ອັລລໍຮ໌ ຜູ້ຊົງສູງສົ່ງ ໄດ້ປົກປ້ອງທ່ານຈາກການຕັ້ງພາຄີ, ແທ້ຈິງແລ້ວຈຸດປະສົງຂອງສິ່ງນັ້ນກໍເພື່ອຕັກເຕືອນຜູ້ອື່ນໆ, ຫຼັງຈາກນັ້ນ ພຣະອົງຜູ້ຊົງຍິ່ງໃຫຍ່ໄດ້ຕຣັດວ່າ:

﴿وَلَا تَدۡعُ مِن دُونِ ٱللَّهِ مَا لَا يَنفَعُكَ وَلَا يَضُرُّكَ فَإِنۡ فَعَلۡتَ فَإِنَّكَ إِذٗا مِّنَ ٱلظَّٰلِمِينَ ١٠٦﴾

(ແລະ ເຈົ້າຢ່າໄດ້ວິງວອນຂໍສິ່ງອື່ນນອກເໜືອຈາກອັລລໍຮ໌, ສິ່ງທີ່ບໍ່ໃຫ້ຄຸນປະໂຫຍດແກ່ເຈົ້າ ແລະ ບໍ່ໃຫ້ໂທດແກ່ເຈົ້າ, ຫາກເຈົ້າໄດ້ກະທຳຊຸ່ນນັ້ນ, ແນ່ນອນເຈົ້າກໍ່ຈະຢູ່ໃນກຸ່ມຜູ້ອະທຳ) [ຢູນຸສ : 106], ແລະ ນີ້ແມ່ນຄຳຊີ້ແນະຕໍ່ທ່ານນະບີ ﷺ, ເຊິ່ງຈຸດປະສົງຂອງມັນຄື: ເພື່ອຕັກເຕືອນຜູ້ອື່ນທີ່ນອກເໜືອຈາກທ່ານ; ເພາະເປັນທີ່ຮູ້ກັນດີວ່າ ພຣະອົງອັລລໍຮ໌ ຜູ້ຊົງສູງສົ່ງ ໄດ້ຊົງປົກປ້ອງຄໍລຸວຂອງພຣະອົງຈາກການຕັ້ງພາຄີ, ຫຼັງຈາກນັ້ນ ພຣະ

ອົງອັລລໍຮ ຜູ້ຊົງສູງສົ່ງ ກ່າໄດ້ຊົງເນັ້ນຢ້ຳຢ່າງເຂັ້ມງວດໃນການ ຫ້າມປາມ ແລະ ການຕັກເຕືອນ; ໂດຍໄດ້ຕຣັດວ່າ:

﴿...فَإِنْ فَعَلْتَ فَإِنَّكَ إِذًا مِنَ الظَّالِمِينَ﴾

(...ຫາກເຈົ້າກະທຳເຊັ່ນນັ້ນ ແນ່ນອນເຈົ້າກໍ່ຈະເປັນຜູ້ໜຶ່ງ ໃນໝູ່ຜູ້ອະທຳ) ແລະ ການອະທຳ ເມື່ອກ່າວເຖິງໂດຍລວມແລ້ວ ຄື: ຊີຣິກ-ອັກບັຣ, ດັ່ງທີ່ພຣະອົງໄດ້ກ່າວໄວ້ວ່າ:

﴿...وَالْكَافِرُونَ هُمُ الظَّالِمُونَ﴾

(...ແລະບັນດາຜູ້ປະຕິເສດສັດທາ, ພວກເຂົາຄືຜູ້ອະທຳ). [ອັລ-ບะกัระฮ์: 254] ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿...إِنَّ الشِّرْكَ لَظُلْمٌ عَظِيمٌ﴾

(...ແທ້ຈິງ ການຕັ້ງພາຄີ ແນ່ນອນເປັນຄວາມອະທຳອັນໃ ຫຍ່ຫຼວງ). [ลุกมาน: 13]. ໃນເມື່ອແມ້ແຕ່ ທ່ານຜູ້ເປັນນາຍ ຂອງລູກຫຼານອາດຳ ອะไลฮิส สลาตุ อัสสะลาม ຫາກໄດ້ອ້ອນ ຂໍຕ່ໍສິ່ງອື່ນນອກເໜືອຈາກອັລລໍຮ ກໍ່ຈະຖືກນັບເປັນຜູ້ຫ ນຶ່ງໃນໝູ່ຜູ້ອະທຳ, ແລ້ວຈະນັບປะสาหยังกับคนอื่นๆ อีก?

ຈາກບັນດາອາຍາຕເຫຼົ່ານີ້ ແລະ ຂໍ້ຄວາມອື່ນໆ ຈຶ່ງເປັນທີ່ເຂົ້ າໃຈໄດ້ວ່າ ການອ້ອນຂໍຕ່ໍສິ່ງອື່ນນອກເໜືອຈາກອັລລໍຮ — ເ ຊັ່ນ ຈາກຜູ້ທີ່ຕາຍໄປແລ້ວ, ຕົ້ນໄມ້, ຮູບປັ້ນ ແລະ ອື່ນໆ — ນັ້ນ ຖືເປັນການຕັ້ງພາຄີ (ຊີຣິກ) ຕ່ໍອັລລໍຮ, ເປັນສິ່ງທີ່ຂັດກັບການ ໃຫ້ເອກะพาบต่ออัลลอฮ์ในการเคารบูชา ເຊິ່ງເປັນຈຸດປะสົ ງຂອງການສ້າງຍົນແລະมะนุด, ການປะทานบันดาธ์ลูล แล ะ ການປะทานคำพิต่างๆ, ທັງຍັງຂັດກັບความหมายของคำ ວ່າ "ลาอิลาฮะ อิลลัลลอฮ์" ເຊິ່ງປะติเสดการเคารบูชาต่ໍ

ສິ່ງອື່ນນອກເໜືອຈາກອັລລ໋ອ ແລະ ຍັ້ງຢືນການເຄົາລົບບູຊານັ້ນໃຫ້ແກ່ອັລລ໋ອ ຜູ້ຍິ່ງໃຫຍ່ ດັ່ງທີ່ອັລລ໋ອ ຕະອາລາ ໄດ້ກ່າວວ່າ:

﴿ذَٰلِكَ بِأَنَّ ٱللَّهَ هُوَ ٱلۡحَقُّ وَأَنَّ مَا يَدۡعُونَ مِن دُونِهِۦ هُوَ ٱلۡبَٰطِلُ وَأَنَّ ٱللَّهَ هُوَ ٱلۡعَلِيُّ ٱلۡكَبِيرُ ٦٢﴾

(ເຊັ່ນນັ້ນແຫລະ ເພາະວ່າອັລລ໋ອ ຄືຜູ້ຊົ່ງສັດຈະ, ແລະ ແທ້ຈິງສິ່ງທີ່ພວກເຂົາວິງວອນຂໍອື່ນຈາກພຣະອົງນັ້ນເປັນເທັດ ແລະ ແທ້ຈິງອັລລ໋ອ ເປັນຜູ້ຊົ່ງສູງສົ່ງ ຜູ້ຊົ່ງຍິ່ງໃຫຍ່)

[ອັລ-ຮັຈ: 62].

ແລະ ນີ້ຄືຮາກເຫງົ້າ ແລະ ພື້ນຖານຂອງສາສະໜາ, ແລະ ການປະຕິບັດສາສະນະກິດຈະບໍ່ຖືກຕ້ອງ ນອກຈາກວ່າຮາກເຫງົ້ານີ້ຈະຖືກຕ້ອງເສຍກ່ອນ, ດັ່ງທີ່ພຣະອົງຜູ້ຊົ່ງສູງສົ່ງໄດ້ຕຣັດວ່າ:

﴿وَلَقَدۡ أُوحِيَ إِلَيۡكَ وَإِلَى ٱلَّذِينَ مِن قَبۡلِكَ لَئِنۡ أَشۡرَكۡتَ لَيَحۡبَطَنَّ عَمَلُكَ وَلَتَكُونَنَّ مِنَ ٱلۡخَٰسِرِينَ ٦٥﴾

(ແລະ ໂດຍແນ່ນອນໄດ້ມີວະຫ໌ຮີມາຍັງເຈົ້າ (ມູຮໍາມັດ) ແລະ ມາຍັງບັນດານະບີກ່ອນຫນ້າເຈົ້າ ຫາກເຈົ້າຕັ້ງພາຄີຮ່ວມ (ກັບອັລລ໋ອ), ແນ່ນອນການກະທໍາຂອງເຈົ້າກໍ່ບໍ່ມີຜົນ ແລະ ແນ່ນອນເຈົ້າຈະຢູ່ໃນກຸ່ມຜູ້ຂາດທຶນ) [ອັຊ-ຊຸມັຣ: 65] ແລະ ອັລລ໋ອ ຜູ້ຊົ່ງມະຫາບໍລິສຸດ ແລະ ຊົ່ງສູງສົ່ງໄດ້ຕຣັດວ່າ:

﴿...وَلَوۡ أَشۡرَكُواْ لَحَبِطَ عَنۡهُم مَّا كَانُواْ يَعۡمَلُونَ﴾

ຄວາມໝາຍວ່າ : (...ແລະ ຖ້າຫາກພວກເຂົາໄດ້ຕັ້ງພາຄີຂຶ້ນ ແນ່ນອນສິ່ງທີ່ພວກເຂົາໄດ້ກະທໍາກັນ ກໍ່ຈະສູນເສຍໄປຈາກ

ພວກເຂົາ) [ອັລ-ອັນອາມ: 88].

ຈາກສິ່ງທີ່ກ່າວມານັ້ນ ຊີ້ໃຫ້ເຫັນວ່າ ສາສະໜາອິສລາມ ແລະ ການປະຕິຍານຕົນວ່າ: (ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຮ໌) ມີສອງຫຼັກການທີ່ຍິ່ງໃຫຍ່ຄື:

ປະການທີໜຶ່ງ: ຄືຈະຕ້ອງບໍ່ມີການເຄົາລົບບູຊາສິ່ງໃດ ນອກຈາກອັລລໍຮ໌ພຽງຜູ້ດຽວ ໂດຍບໍ່ມີພາຄີໃດໆທຽບຄຽງພຣະອົງ; ດັ່ງນັ້ນ ຜູ້ໃດທີ່ອີງອອນຕໍ່ຜູ້ທີ່ລ່ວງລັບໄປແລ້ວ ຈາກບັນດານະບີ ແລະ ບຸກຄົນອື່ນໆ, ຫຼື ອີງອອນຕໍ່ຮູບປັ້ນ, ຕົ້ນໄມ້, ກ້ອນຫີນ, ຫຼື ສິ່ງຖືກສ້າງອື່ນໆ, ຫຼື ຂໍຄວາມຊ່ວຍເຫຼືອຈາກພວກເຂົາ, ຫຼື ສະແຫວງຫາຄວາມໃກ້ຊິດກັບພວກເຂົາດ້ວຍການເຊືອດສັດ ຖະວາຍ ແລະ ການບົນບານ, ຫຼື ລະຫມາດໃຫ້ພວກເຂົາ, ຫຼື ການໃຫວ້ພວກເຂົາ; ຜູ້ນັ້ນກໍເທົ່າກັບໄດ້ຍົກຖືເອົາພວກເຂົາເປັນພຣະເຈົ້າອື່ນນອກເໜືອຈາກອັລລໍຮ໌, ແລະ ໄດ້ຕັ້ງພວກເຂົາເປັນພາຄີທຽບຄຽງພຣະອົງ, ແລະ ເປັນການຂັດແຍ້ງ ແລະ ປະຕິເສດຕໍ່ຄວາມໝາຍຂອງຄຳວ່າ ລາອິລາຫະ ອິລລັລລໍຮ໌.

ປະການທີສອງ: ຈະບໍ່ມີການເຄົາລົບການໃຫວ້ອັລລໍຮ໌ ຜູ້ຊົງສູງສົ່ງ ນອກຈາກຕາມຊາຣີອະຫ໌ຂອງສາສະນະທູດຂອງພຣະອົງ ﷺ, ດັ່ງນັ້ນ ຜູ້ໃດທີ່ປະດິດສິ່ງໃໝ່ໃນສາສະໜາທີ່ອັລລໍຮ໌ບໍ່ໄດ້ຊົງອະນຸມັດ; ຜູ້ນັ້ນກໍບໍ່ໄດ້ເຮັດໃຫ້ຄວາມໝາຍຂອງຄຳປະຕິຍານທີ່ວ່າ ມຸຮຳມັດເປັນສາສະນະທູດຂອງອັລລໍຮ໌ຢ່າງບໍ່ສົມບູນ, ແລະ ການງານຂອງລາວກໍຈະບໍ່ເກີດປະໂຫຍດ ແລະ ຈະບໍ່ຖືກຕອບຮັບ, ພຣະອົງອັລລໍຮ໌ ຜູ້ຊົງສູງສົ່ງໄດ້ຊົງດຳລັດວ່າ:

﴿وَقَدِمْنَا إِلَى مَا عَمِلُوا مِنْ عَمَلٍ فَجَعَلْنَاهُ هَبَاءً مَنْثُورًا ﴿٢٣﴾﴾

(ແລະ ເຮົາໄດ້ມຸ່ງໄປຍັງການງານຕ່າງໆ ທີ່ພວກເຂົາໄດ້ປະ

ຕິບັດໄວ້, ແລ້ວເຮົາກໍບັນດານໃຫ້ມັນເປັນດັ່ງລະອອງຝຸ່ນທີ່ປິວສະບັດໄປ) [ອັລ-ຟຸຣກອນ: 23], ເຈດຕະນາຂອງການງານທີ່ກ່າວໄວ້ໃນອາຍະຫ໌ນີ້ແມ່ນ: ການງານຂອງຜູ້ທີ່ຕາຍໃນສະພາບທີ່ຕັ້ງພາຄີຕໍ່ພຣະເຈົ້າອັລລໍຫ໌,

ແລະ ຍັງລວມເຖິງ: ບັນດາການງານທີ່ເປັນບິດອະຫ໌ (ການອຸຕະລິກໍາໃນສາສະໜາ) ທີ່ພຣະອົງອັລລໍຫ໌ບໍ່ໄດ້ຊົງອະນຸຍາດ, ເພາະແທ້ຈິງມັນຈະກາຍເປັນລະອອງຝົງທີ່ກະຈັດກະຈາຍໃນອັນປໍລະໂລກ (ກີຍາມະຫ໌), ເນື່ອງຈາກວ່າມັນບໍ່ສອດຄ່ອງກັບບົດບັນຍັດຂອງພຣະອົງທີ່ບໍລິສຸດ, ດັ່ງທີ່ທ່ານນະບີ ﷺ ໄດ້ກ່າວວ່າ:

«مَنْ أَحْدَثَ فِي أَمْرِنَا هَذَا مَا لَيْسَ مِنْهُ فَهُوَ رَدٌّ».

“ໃຜກໍ່ຕາມທີ່ເຮັດສິ່ງອື່ນໃນກິດຈະການສາສະໜາຂອງເຮົາ ເຊິ່ງສິ່ງນັ້ນ ເຮົາບໍ່ໄດ້ສັ່ງໃຊ້ໃຫ້ເຮັດ (ບໍ່ມີແບບຢ່າງ) ດັ່ງນັ້ນສິ່ງທີ່ເຮັດຂຶ້ນມາໃໝ່ນັ້ນຍ່ອມຖືກປະຕິເສດ (ບໍ່ຖືກຕອບຮັບຈາກອັລລໍຫ໌)” ມຸດຕະຟາ ກຸລອະໄລ : ລາຍງານໂດຍທ່ານບຸກຄໍຣີ ແລະ ທ່ານມຸສລິມ.

ສະຫຼຸບຄວາມວ່າ: ນັກຂຽນຍົກຜູ້ນີ້ ໄດ້ນຸ່ງການຂໍຄວາມຊ່ວຍເຫຼືອ ແລະ ການດຸອາຂອງນາງ ໄປຍັງທ່ານນະບີ ຈຸລລັລລໍຮ໌ຮຸ ອະໄລຮິ ອະສັລລັມ, ແລະ ໄດ້ຫັນຫຼັງໃຫ້ພຣະຜູ້ເປັນເຈົ້າແຫ່ງສາກົນໂລກ, ຜູ້ຊົງການຊ່ວຍເຫຼືອໃຫ້ມີໄຊຊະນະ, ການໃຫ້ໂທດ ແລະ ການໃຫ້ຄຸນ ຢູ່ໃນກໍາມືຂອງພຣະອົງ, ແລະສິ່ງດັ່ງກ່າວທັ້ງໝົດນັ້ນບໍ່ໄດ້ຢູ່ໃນກໍາມືຂອງຜູ້ໃດນອກຈາກພຣະອົງ.

ແລະ ບໍ່ຕ້ອງສົງໄສເລີຍວ່າ ສິ່ງນີ້ຄືການອະທໍາທີ່ຍິ່ງໃຫຍ່ ແລະ ຮ້າຍແຮງ, ແລະ ແທ້ຈິງ ອັລລໍຫ໌ ຜູ້ຊົງສູງສົ່ງໄດ້ສັ່ງໃຊ້ໃຫ້ວິງວ

ອນຂໍຕໍ່ພຣະອົງ, ແລະ ໄດ້ຊົງສັນຍາວ່າຈະຕອບຮັບແກ່ຜູ້ທີ່ວິງ
ວອນຂໍຕໍ່ພຣະອົງ, ແລະ ໄດ້ຊົງຄາດໂທດຜູ້ທີ່ໂອຫັງຕໍ່ສິ່ງດັ່ງກ່າ
ວວ່າຈະໄດ້ເຂົ້າໄປຢູ່ໃນນະລົກ, ດັ່ງທີ່ອັລລ໋ອ ຜູ້ຊົງສູງສົ່ງ ໄດ້ກ່າ
ວວ່າ:

﴿وَقَالَ رَبُّكُمُ ادْعُونِي أَسْتَجِبْ لَكُمْ إِنَّ الَّذِينَ يَسْتَكْبِرُونَ عَنْ عِبَادَتِي سَيَدْخُلُونَ جَهَنَّمَ دَاخِرِينَ ﴿٦٠﴾﴾

(ແລະ ພຣະເຈົ້າຂອງພວກເຈົ້າຕຣັດວ່າ ຈົ່ງວິງວອນຂໍຕໍ່ຂ້າ
ຂ້າຈະຕອບຮັບແກ່ພວກເຈົ້າ ສ່ວນບັນດາຜູ້ໂອຫັງຕໍ່ການເຄົາ
ລົບພັກດີແກ່ຂ້ານັ້ນ ຈະເຂົ້າໄປຢູ່ໃນນະລົກຢ່າງຕ່ຳຕ້ອຍ)

[ກ່ຳຟິຣ: 60] ຄື: ຕ່ຳຕ້ອຍ ແລະ ຖືກດູຖູກ, ອາຍະຫ໌ ອັນມີກ
ງດນີ້ຈົ່ງຊີ້ໃຫ້ເຫັນວ່າ ການດຸອາເປັນການອິບາດະຫ໌, ແລະ ຜູ້ທີ່
ໂອຫັງຕໍ່ມັນ ທີ່ຜ່ຳນັກຂອງລາວກ່ຳຄືນະລົກ. ຫາກນີ້ຄືສະພາບຂ
ອງຜູ້ທີ່ໂອຫັງຕໍ່ການດຸອາຂໍຕໍ່ພຣະເຈົ້າ, ແລ້ວສະພາບຂອງຜູ້ທີ່
ວິງວອນຂໍຕໍ່ສິ່ງອື່ນນອກເໜືອຈາກພຣະອົງ ແລະ ຜົນຫຼັງໃຫ້
ພຣະອົງນັ້ນຈະເປັນເຊັ່ນໃດ, ໃນຂະນະທີ່ພຣະອົງ ຜູ້ຊົງມະຫາສູ
ງສົ່ງ ເປັນຜູ້ຊົງໃກ້ຊິດ, ເປັນຜູ້ຊົງກ່ຳມະສິດເໜືອທຸກສິ່ງ, ແລະ
ເປັນຜູ້ຊົງອານຸພາບເໜືອທຸກສິ່ງ, ດັ່ງທີ່ພຣະອົງ ຜູ້ຊົງມະຫາສູ
ງສົ່ງ ໄດ້ຕຣັດວ່າ:

﴿وَإِذَا سَأَلَكَ عِبَادِي عَنِّي فَإِنِّي قَرِيبٌ أُجِيبُ دَعْوَةَ الدَّاعِ إِذَا دَعَانِ فَلْيَسْتَجِيبُوا لِي وَلْيُؤْمِنُوا بِي لَعَلَّهُمْ يَرْشُدُونَ ﴿١٨٦﴾﴾

ຄວາມວ່າ: (ແລະ ເມື່ອບ່າວຂອງຂ້າຖາມເຈົ້າຮອດຂ້ອຍແ
ລ້ວ (ຈົ່ງຕອບເຖີດວ່າ) ແທ້ຈິງຂ້ານັ້ນຢູ່ໃກ້ ຂ້າຈະຕອບຮັບຄ່ຳ
ວິງວອນຂອງຜູ້ທີ່ວິງວອນ ເມື່ອເຂົາວິງວອນຕໍ່ຂ້າ ດັ່ງນັ້ນ ພວ

ກເຂົາຈົ່ງຕອບຮັບຂ້າເຖີດ ແລະ ຈົ່ງສັດທາຕໍ່ຂ້າ ເພື່ອວ່າພວກເຂົາຈະໄດ້ຢູ່ໃນຫົນທາງທີ່ຖືກຕ້ອງ) [ອັລ-ບะกะเราะห์ : 186] ແລະ ທ່ານອິ່ລມ ຊໍລລັລລໍຮ໌ຣຸ ອะไลฮิ อะสัลลัม ได้ก่าวในหะดิสที่ฉໍเຮັยห์ว่า ภาบดุอา เป็น ภาบอิบาดะห์, และ ได้ก่าอต่ำหูานของท่านคือ ท่าน อับดุลลอห์ บิน อับบาส ว่า:

«احْفَظِ اللهَ يَحْفَظْكَ، احْفَظِ اللهَ تَجِدْهُ تُجَاهَكَ، إِذَا سَأَلْتَ فَاسْأَلِ اللهَ، وَإِذَا اسْتَعَنْتَ فَاسْتَعِنْ بِاللهِ».

«เจ้าจົ่งพิทักรักสาอัลลอห์ แล้วอัลลอห์จะพิทักรักสาเจ้า, เจ้าจົ่งพิทักอัลลอห์ แล้วเจ้าจะพบพระองค์อยู่เบื้องหน้า, เมื่อเจ้าอิงออนขໍ ก่ำจົ่งอิงออนขໍต่ำอัลลอห์, และ เมื่อเจ้าจะขໍคอามฉ่อยเหลือ ก่ำจົ่งขໍคอามฉ่อยเหลือจากอัลลอห์». บันทึกโดยติรมิซิ และ ท่านอื่นบอกจากกลาอ.

และ ท่านนะบิ ﷺ ได้ก่าอว่า:

«مَنْ مَاتَ وَهُوَ يَدْعُو لِلَّهِ نِدًّا؛ دَخَلَ النَّارَ».

คอามว่า "ผู้ใดตายในสะพาบที่เขาอิงออนต่ำผู้อื่นเท่ำทูมกับอัลลอห์ เขาต้องตกนะรก" บันทึกโดย อัล-บุกค่อรี, และ ในบันทึกของท่านอิหม่ำทั้งสอง แท้จิงท่านนะบิ ﷺ ถูกถามว่า: บาบใดที่ใหย่ที่สุด? ท่านตอบว่า:

«أَنْ تَجْعَلَ لِلَّهِ نِدًّا وَهُوَ خَلَقَكَ».

"ภาบที่เจ้าตั้งพาภิต่ำอัลลอห์ ทั้งๆ ที่พระองค์เป็นผู้ฉ่ำสางเจ้า" และ พาลิ (อัน-นิด): หมายเถิงผู้ที่เท่ำทูม และ ค้ายคลีกัน, ดั่งนั้น ผู้ใดก่ำตามที่อิงออนขໍต่ำสิ่งอื่นใดนอกเหนือจากอัลลอห์, หูื ขໍคอามฉ่อยเหลือจากสิ่งนั้น, หูื บันบ

ານຕ່ສິ່ງນັ້ນ, ຫຼື ຂ້າສັດບູຊາໃຫ້ແກ່ສິ່ງນັ້ນ, ຫຼື ໄດ້ຖະຫວາຍສິ່ງໃ
ດໜຶ່ງຈາກການເຄົາລົບພັກດີໃຫ້ແກ່ສິ່ງນັ້ນ; ຜູ້ນັ້ນກໍໄດ້ຍົດຖື
ເອົາສິ່ງນັ້ນເປັນພາຄີແລ້ວ, ບໍ່ວ່າຈະເປັນ ນະບີ, ຫຼື ອະລີຍ໌, ຫຼື ມ
ະລັກ, ຫຼື ຈິນ, ຫຼື ຮູບປັ້ນ, ຫຼື ສິ່ງຖືກສ້າງອື່ນໆ ກໍຕາມ.

ແລະ ໃນທີ່ນີ້ ອາດຈະມີຜູ້ຖາມວ່າ: ມີຄຳຕັດສິນວ່າແນວໃດ
ກ່ຽວກັບການຂໍຕໍ່ຜູ້ທີ່ຍັງມີຊີວິດຢູ່ ແລະ ຢູ່ຕໍ່ໜ້າ ໃນສິ່ງທີ່ລາວ
ສາມາດເຮັດໄດ້, ແລະ ການຂໍຄວາມຊ່ວຍເຫຼືອຈາກລາວໃນເລື
ອງຕ່າງໆ ທີ່ເປັນຮູບປະທຳເຊິ່ງລາວມີຄວາມສາມາດຊ່ວຍເຫຼືອ
ໄດ້; ຄຳຕອບ: ສິ່ງນີ້ບໍ່ແມ່ນການຕັ້ງພາກີ, ຫາກແຕ່ເປັນເລື່ອງ
ປົກກະຕິທຳມະດາທີ່ອະນຸຍາດລະຫວ່າງຊາວມຸສລິມ, ດັ່ງທີ່ອັລ
ລໍຫ໌ໄດ້ກ່າວໃນເລື່ອງລາວຂອງທ່ານນະບີມູຊາ ວ່າ:

﴿...فَٱسۡتَغَٰثَهُ ٱلَّذِي مِن شِيعَتِهِۦ عَلَى ٱلَّذِي مِنۡ عَدُوِّهِۦ...﴾

(...ແລ້ວຜູ້ທີ່ຢູ່ຝ່າຍຂອງລາວກໍ່ໄດ້ຂໍຄວາມຊ່ວຍເຫລືອຍາ
ມຄັບຂັນຕໍ່ລາວ ເພື່ອຕໍ່ສູ້ກັບຜູ້ທີ່ເປັນສັດຕູຂອງລາວ...) [ອັລ
-ກໍສໍສ: 15] ແລະ ດັ່ງທີ່ພຣະຜູ້ຊົງສູງສົ່ງໄດ້ຕຣັດໃນເລື່ອງລາວ
ຂອງທ່ານນະບີມູຊາເຊັ່ນດຽວກັນວ່າ:

﴿فَخَرَجَ مِنۡهَا خَآئِفٗا يَتَرَقَّبُ...﴾

(ລາວຈຶ່ງໄດ້ອອກຈາກມັນໄປ ດ້ວຍຄວາມຢ້ານ ພ້ອມທັງ
ຜ້ວລະວັງ...) [ອັລ-ກໍສໍສ: 21] ເຊັ່ນດຽວກັບທີ່ມະນຸດຂໍຄວາມຊ
ວຍເຫລືອຈາກສະຫາຍຂອງຕົນໃນສົງຄາມ ແລະ ໃນເລື່ອງອື່ນ
ໆ ທີ່ຜູ້ຄົນຕ້ອງປະເຊີນ, ໂດຍທີ່ພວກເຂົາກໍຕ້ອງການຄວາມຊ
ວຍເຫລືອເຊິ່ງກັນແລະກັນ.

ແລະ ອັລລໍຫ໌ ໄດ້ຊົງສັ່ງນະບີຂອງພຣະອົງ ﷺ ໃຫ້ແຈ້ງແກ່ປະ
ຊາຊາດຂອງເພິ່ນວ່າ ເພິ່ນບໍ່ມີອຳນາດທີ່ຈະໃຫ້ຄຸນປະໂຫຍດ ແ

ລະ ໂທດໃດໆ ແກ່ຜູ້ໃດໄດ້, ແລະ ພຣະອົງໄດ້ດຳລັດວ່າ:

﴿قُلْ إِنَّمَا أَدْعُو رَبِّي وَلَا أُشْرِكُ بِهِ أَحَدًا ۝٢٠ قُلْ إِنِّي لَا أَمْلِكُ لَكُمْ ضَرًّا وَلَا رَشَدًا ۝٢١﴾

(ຈົ່ງກ່າວເຖີດມຸຮຳມັດ ແທ້ຈິງຂ້ອຍວິງວອນຕໍ່ພຣະເຈົ້າຂອງຂ້ອຍເທົ່ານັ້ນ ແລະ ຈະບໍ່ຕັ້ງຜູ້ໃດເປັນພາກີກັບພຣະອົງ)

(ຈົ່ງກ່າວເຖີດ ມຸຮຳມັດ ແທ້ຈິງ ຂ້ອຍບໍ່ມີ ອຳນາດທີ່ຈະໃຫ້ໂທດ ແລະ ໃຫ້ຄຸນ ແກ່ພວກທ່ານ) [ອັລ-ຈິນ 22-21]. ແລະ ພ ຣະຜູ້ຊົງສູ່ງສົ່ງໄດ້ຕຣັດວ່າ:

﴿قُلْ لَا أَمْلِكُ لِنَفْسِي نَفْعًا وَلَا ضَرًّا إِلَّا مَا شَاءَ اللَّهُ وَلَوْ كُنْتُ أَعْلَمُ الْغَيْبَ لَاسْتَكْثَرْتُ مِنَ الْخَيْرِ وَمَا مَسَّنِيَ السُّوءُ إِنْ أَنَا إِلَّا نَذِيرٌ وَبَشِيرٌ لِقَوْمٍ يُؤْمِنُونَ ۝١٨٨﴾

(ຈົ່ງກ່າວເຖີດ (ມຸຮຳມັດ) ວ່າຂ້ອຍບໍ່ມີອຳນາດ ທີ່ຈະໃຫ້ຄຸນ ປະໂຫຍດໃດໆ ແລະ ໃຫ້ໂທດໃດໆ ແກ່ຕົວຂ້ອຍໄດ້ ນອກຈາກສິ່ ງທີ່ ອັລລ໋ອ ຊົງປະສົງ ແລະຖ້າຫາກວ່າຂ້ອຍເປັນຜູ້ຮູ້ສິ່ງເລັ່ນລັ ບແລ້ວ ແນ່ນອນຂ້ອຍຍ່ອມກອບໂກຍສິ່ງທີ່ດີງາມໄວ້ຢ່າງຫລ ວງຫລາຍ ແລະ ຄວາມຊົ່ວຮ້າຍ ກໍ່ຈະບໍ່ແຕະຕ້ອງຂ້ອຍໄດ້ ຂ້ອ ຍບໍ່ແມ່ນໃຜຄົນອື່ນໃດ ນອກຈາກຜູ້ຕັກເຕືອນ ແລະຜູ້ປະກາ ດຂ່າວດີສຳຫລັບກຸ່ມຊົນຜູ້ສັດທາເທົ່ານັ້ນ).

[ອັລ-ອະຣ໌ອ: 188]

ແລະ ໂອງການອື່ນ ໆ ທີ່ມີຄວາມໝາຍທຳນອງນີ້ຍັງມີອີກຫຼ າຍ.

ແລະ ເປັນທີ່ຮູ້ກັນດີວ່າ ທ່ານນະບີ ຊຸ ລ ລ ລ ຣ ອະໄລ ຮິ ອະສ ລ ລ ຳ ຈະບໍ່ວິງວອນຂໍຕໍ່ຜູ້ໃດນອກຈາກພຣະເຈົ້າຂອງພຣະອົງ, ດັ່ງທີ່ມີຫຼັກຖານຢືນຢັນຈາກທ່ານວ່າ ໃນວັນສົງຄາມບະດ ຣ ທ່າ

ນໄດ້ຂໍຄວາມຊ່ວຍເຫຼືອຈາກອັລລໍຮ໌ ແລະ ຂໍໄຊຊະນະຈາກພຣະອົງເພື່ອຕ້ານກັບສັດຕູຂອງພຣະອົງ, ແລະ ທ່ານໄດ້ວິງວອນຂໍຢ່າງບໍ່ລົດລະ, ໂດຍໄດ້ກ່າວວ່າ: «ໂອ້ ພຣະຜູ້ເປັນເຈົ້າຂອງຂ້າ! ຂໍພຣະອົງໂປດປະທານໃຫ້ແກ່ຂ້າພະອົງຕາມທີ່ພຣະອົງໄດ້ສັນຍາໄວ້ດ້ວຍເຖີດ». ຈົນກະທັ້ງ ທ່ານ ອັສ-ສິດດີກ ອັນ-ອັກບັຣ ອະ ບູ ບັກຣ ຣ໌ດີຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: ໂອ້ ທ່ານຣ໌ຊູລຸລລໍຮ໌, ພຽງພໍແລ້ວ, ເພາະແທ້ຈິງແລ້ວອັລລໍຮ໌ຈະຊົງປະທານໃຫ້ແກ່ທ່ານຕາມທີ່ພຣະອົງໄດ້ສັນຍາໄວ້, ແລະ ອັລລໍຮ໌ ຜູ້ຊົງບໍລິສຸດ ກໍໄດ້ປະທານພຣະດຳລັດຂອງພຣະອົງລົງມາກ່ຽວກັບເລື່ອງດັ່ງກ່າວວ່າ:

﴿إِذۡ تَسۡتَغِيثُونَ رَبَّكُمۡ فَٱسۡتَجَابَ لَكُمۡ أَنِّي مُمِدُّكُم بِأَلۡفٖ مِّنَ ٱلۡمَلَٰٓئِكَةِ مُرۡدِفِينَ ٩﴾

(ຈົ່ງລຳລຶກໃນຂະນະທີ່ພວກເຈົ້າຂໍຄວາມຊ່ວຍເຫລືອຍາມຄັບຂັນຕໍ່ພຣະເຈົ້າຂອງພວກເຈົ້າ ແລະ ພຣະອົງທ່ານກໍ່ໄດ້ຕອບສະຫນອງແກ່ພວກເຈົ້າວ່າ ແທ້ຈິງຂ້າຈະຊ່ວຍເຫລືອພວກເຈົ້າດ້ວຍມະລາອິກະຈຳນວນຫນຶ່ງພັນທີ່ຈະຕິດຕາມກັນລົງມາ) (ຊູເຣາະຫ໌ ອັນຟາລ: 9) ໃນອາຍາຕເຫຼົ່ານີ້ ພຣະອົງໄດ້ກ່າວເຖິງການຂໍຄວາມຊ່ວຍເຫຼືອຂອງພວກເຂົາ, ແລະ ໄດ້ແຈ້ງວ່າພຣະອົງໄດ້ຕອບຮັບພວກເຂົາ ໂດຍໄດ້ສົ່ງມາລາອິກະຮ໌ມາສະໜັບສະໜູນ; ເພື່ອເປັນຂ່າວດີແຫ່ງໄຊຊະນະ ແລະ ຄວາມສະຫງົບໃຈ, ພ້ອມທັງໄດ້ຊີ້ແຈງວ່າ ໄຊຊະນະບໍ່ແມ່ນມາຈາກມາລາອິກະຮ໌, ແຕ່ຫາກມາຈາກພຣະອົງ. ພຣະອົງຊົງຕັດວ່າ:

﴿وَمَا ٱلنَّصۡرُ إِلَّا مِنۡ عِندِ ٱللَّهِ...﴾

(ແລະ ບໍ່ມີໄຊຊະນະໃດໆ ເວັ້ນເສຍແຕ່ຈະມາຈາກອັລລໍຮ໌...)
[ສູເຣາະຫ໌ ອະລາອິມຣອນ: 126], ແລະ ອັລລໍຮ໌ໄດ້ຕຣັດວ່າ:

﴿وَلَقَدْ نَصَرَكُمُ اللَّهُ بِبَدْرٍ وَأَنْتُمْ أَذِلَّةٌ فَاتَّقُوا اللَّهَ لَعَلَّكُمْ تَشْكُرُونَ﴿١٢٣﴾﴾

(ແລະ ແນ່ນອນ ອັລລໍຮ໌ ໄດ້ຊ່ວຍເຫລືອພວກເຈົ້າແລ້ວ ທີ່ສົງຄາມບະດ໌ ຂະນະທີ່ພວກເຈົ້າເປັນຝ່າຍທີ່ອ່ອນແອກວ່າ, ດັ່ງນັ້ນ ພວກເຈົ້າຈົ່ງຢຳເກຣງຢ້ານກົວຕໍ່ອັລລໍຮ໌ ເພື່ອພວກເຈົ້າຈະໄດ້ຂອບໃຈ) [ສູເຣາະຫ໌ ອະລາອິມຣອນ: 123] ດັ່ງນັ້ນ ອັລລໍຮ໌ໄດ້ຊີ້ແຈງໄວ້ໃນອາຍະຫ໌ນີ້ວ່າ ພຣະອົງຄືຜູ້ຊ່ວຍເຫຼືອພວກເຂົາໃນອັນບະດ໌, ຈົ່ງເຮັດໃຫ້ຮູ້ວ່າ ສິ່ງທີ່ພຣະອົງໄດ້ປະທານໃຫ້ແກ່ພວກເຂົາທັງອາວຸດ ແລະ ພະລັງກຳລັງ, ແລະ ການສະໜັບສະໜູນພວກເຂົາດ້ວຍບັນດາມະລາອິກະຫ໌ນັ້ນ, ທັງໝົດລ້ວນເປັນສາເຫດແຫ່ງໄຊຊະນະ, ເປັນຂ່າວດີ ແລະ ເພື່ອຄວາມສະຫງົບໝັ້ນຄົງ, ແຕ່ໄຊຊະນະນັ້ນບໍ່ໄດ້ມາຈາກສິ່ງເຫຼົ່ານັ້ນ, ຫາກແຕ່ມັນມາຈາກອັລລໍຮ໌ອົງດຽວ. ນັກຂຽນຍິງຜູ້ນີ້ ຫຼື ຜູ້ອື່ນໆ ກ ໍ ຫາກໄດ້ແນວໃດ ທີ່ຫັນໄປຂໍຄວາມຊ່ວຍເຫຼືອ ແລະ ຂໍໄຊຊະນະ ຈາກທ່ານນະບີ ຊຸລລັລລໍຮ ອະໄລຮິ ອະສັລລໍ, ແລະ ພັດເມີນເສີຍຕໍ່ພຣະຜູ້ເປັນເຈົ້າແຫ່ງສາກົນໂລກ, ຜູ້ຊົງເປັນເຈົ້າຂອງທຸກສິ່ງຢ່າງ ແລະ ຜູ້ຊົງອານຸພາບເໜືອທຸກສິ່ງຢ່າງ?

ບໍ່ຕ້ອງສົງໄສເລີຍວ່າ ສິ່ງນີ້ແມ່ນຄວາມບໍ່ຮູ້ອັນຊົ່ວຊ້າທີ່ສຸດ, ຍິ່ງໄປກວ່ານັ້ນ ມັນຍັງເປັນການຕັ້ງພາກີອັນໃຫຍ່ຫຼວງທີ່ສຸດອີກດ້ວຍ. ສະນັ້ນ ຈຶ່ງເປັນໜ້າທີ່ຂອງນັກຂຽນຍິງຜູ້ນັ້ນທີ່ຈະຕ້ອ ງເຕົ້າບະຫ໌ກັບໂຕຕໍ່ອັລລໍຮ໌ ດ້ວຍການເຕົ້າບະຫ໌ທີ່ຈິງໃຈບໍລິສຸ ດ,

ແລະ ການເຕົ້າບະຫ໌ທີ່ຈິງໃຈບໍລິສຸດນັ້ນ ປະກອບດ້ວຍຫຼາຍ

ປະການ, ດັ່ງນີ້: ຫນຶ່ງ: ເສຍໃຈກັບຄວາມຜິດທີ່ໄດ້ກະທຳໄປ. ສອງ: ຖອນຕົວອອກຈາກຄວາມຜິດທີ່ໄດ້ກະທຳນັ້ນ, ສາມ: ຕັ້ງໃຈວ່າສິບໍ່ກັບໄປເຮັດບາບນັ້ນອີກ, ເພື່ອໃຫ້ຄວາມຍິ່ງໃຫຍ່ແກ່ອັລລໍຮ໌, ມີເຈດຕະນາອັນບໍລິສຸດໃຈຕໍ່ພຣະອົງ, ປະຕິບັດຕາມຄຳບັນຊາຂອງພຣະອົງ, ແລະ ຫຼີກຫ່າງຈາກຂໍ້ຫ້າມຂອງພຣະອົງ, ນີ້ຄືການເຕົາບະຫ໌ອັນຈິງໃຈ. ປະການທີ່ສີ່ ໃນທີ່ນີ້, ເຊິ່ງສະເພາະກັບການລະເມີດສິດທິຂອງເພື່ອນມະນຸດຄື: ຄືນສິດທິໃຫ້ແກ່ເຈົ້າຂອງມັນ, ຫຼື ຂໍການຍົກໂທດຈາກລາວ.

ພຣະອົງອັລລໍຮ໌ ໄດ້ຊົງບັນຊາບັນດາບ່າວຂອງພຣະອົງ ໃຫ້ເຮັດການເຕົາບະຫ໌, ແລະ ໄດ້ຊົງສັນຍາກັບພວກເຂົາວ່າຈະຊົງຮັບເອົາມັນ, ດັ່ງຄຳດຳລັດຂອງພຣະອົງທີ່ວ່າ:

﴿وَتُوبُوا إِلَى اللَّهِ جَمِيعًا أَيُّهَ الْمُؤْمِنُونَ لَعَلَّكُمْ تُفْلِحُونَ﴾...

(ແລະ ບັນດາຜູ້ສັດທາເອີຍ, ຈົ່ງພ້ອມພຽງກັນກັບຕົວໄປຫາອັລລໍຮ໌ເຖີດ ເພື່ອວ່າພວກເຈົ້າຈະໄດ້ຮັບໄຊຊະນະ) [ຊູເຣາະຫ໌ ອັນນູຣ: 31], ແລະ ພຣະອົງໄດ້ຕຣັດກ່ຽວກັບຊາວນະສໍຣ໌ວ່າ:

﴿أَفَلَا يَتُوبُونَ إِلَى اللَّهِ وَيَسْتَغْفِرُونَهُ وَاللَّهُ غَفُورٌ رَحِيمٌ ۝٧٤﴾

(ເຫດໃດພວກເຂົາຈຶ່ງບໍ່ກັບເນື້ອກັບຕົວຕໍ່ອັລລໍຮ໌ ແລະ ຂໍອະໄພຍະໂທດຕໍ່ພຣະອົງ, ໃນຂະນະທີ່ອັລລໍຮ໌ນັ້ນ ເປັນຜູ້ຊົງອະໄພ, ຜູ້ຊົງເມດຕາສະເໝີ) [ຊູເຣາະຫ໌ ອັລ-ມາອິດะຫ໌ : 74]. ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿وَالَّذِينَ لَا يَدْعُونَ مَعَ اللَّهِ إِلَهًا آخَرَ وَلَا يَقْتُلُونَ النَّفْسَ الَّتِي حَرَّمَ اللَّهُ إِلَّا بِالْحَقِّ وَلَا يَزْنُونَ وَمَنْ يَفْعَلْ ذَلِكَ يَلْقَ أَثَامًا ۝٦٨ يُضَاعَفْ لَهُ الْعَذَابُ يَوْمَ الْقِيَامَةِ وَيَخْلُدْ فِيهِ مُهَانًا ۝٦٩ إِلَّا مَنْ تَابَ وَآمَنَ وَعَمِلَ عَمَلًا صَالِحًا فَأُولَئِكَ يُبَدِّلُ اللَّهُ

سَيِّـَٔاتِهِمْ حَسَنَاتٍ وَكَانَ اللَّهُ غَفُورًا رَحِيمًا﴿٧٠﴾

(ແລະ ບັນດາຜູ້ທີ່ບໍ່ວິງວອນຂໍຕໍ່ພະເຈົ້າອື່ນໃດຮ່ວມກັບອັລລໍ ແລະ ບໍ່ຂ້າຊີວິດທີ່ອັລລໍໄດ້ຫ້າມໄວ້ ເວັ້ນເສຍແຕ່ດ້ວຍເຫດຜົນອັນຊອບທຳ ແລະ ບໍ່ຜິດປະເວນີ, ແລະ ຜູ້ໃດທີ່ກະທຳດັ່ງກ່າວນັ້ນ ເຂົາຈະໄດ້ພົບກັບການລົງໂທດ)

(ການລົງໂທດຈະຖືກເພີ່ມຂຶ້ນເປັນທະວີຄູນແກ່ລາວໃນວັນກິຢາມະຫ໌ ແລະ ລາວຈະຜໍານັກຢູ່ໃນນັ້ນຕະຫຼອດໄປໃນສະພາບທີ່ຖືກດູຖູກ)

(ນອກຈາກຜູ້ທີ່ກັບຕົວ ແລະ ສັດທາ ແລະ ປະກອບຄວາມດີ, ຊຶ່ນເຫຼົ່ານັ້ນ ອັລລໍຈະຊົງປ່ຽນຄວາມຊົ່ວຂອງພວກເຂົາໃຫ້ເປັນຄວາມດີ ແລະ ອັລລໍ ເປັນຜູ້ຊົງອະໄພຍົ່ງ, ຜູ້ຊົງເມດຕາສະເໝີ) [ສຸເຣາະຫ໌ ຟຸຣກອນ : 68-70]. ແລະ ພຣະຜູ້ຊົງສູ່ງສົ່ງໄດ້ຕຣັດວ່າ:

﴿وَهُوَ الَّذِى يَقْبَلُ التَّوْبَةَ عَنْ عِبَادِهِ وَيَعْفُو عَنِ السَّيِّـَٔاتِ وَيَعْلَمُ مَا تَفْعَلُونَ﴿٢٥﴾

(ແລະ ພຣະອົງຄືຜູ້ທີ່ຊົງຮັບການກັບຕົວຈາກບ່າວຂອງພຣະອົງ ແລະ ຊົງອະໄພໃນຄວາມຜິດບາບທັງຫຼາຍ ແລະ ຊົງຮູ້ສິ່ງທີ່ພວກເຈົ້າກະທຳ) [ສຸເຣາະຫ໌ອັລ-ຊູຣໍ ອາຍະຫ໌ 25].

ແລະ ມີລາຍງານທີ່ຊໍເຮັຍຫ໌ຈາກ ທ່ານຣໍຊຸລ ຂອງອັລລໍ ﷺ ທ່ານໄດ້ກ່າວວ່າ:

«الإِسْلَامُ يَهْدِمُ مَا كَانَ قَبْلَهُ، وَالتَّوْبَةُ تَجُبُّ مَا كَانَ قَبْلَهَا».

«ອິສລາມລົບລ້າງສິ່ງທີ່ເກີດຂຶ້ນກ່ອນຫນ້າ, ແລະ ການເຕົາບະຫ໌ກໍ່ລົບລ້າງສິ່ງທີ່ມີຢູ່ກ່ອນຫນ້າ».

ຄຳເວົ້າໂດຍຫຍໍ້ເຫຼົ່ານີ້ໄດ້ຖືກຂຽນຂຶ້ນ ຍ້ອນເຫັນເຖິງຄວາ

ມອັນຕະລາຍອັນໃຫຍ່ຫຼວງຂອງການຕັ້ງພາຄີ ຫຼື ຊິຣິກ, ເຊິ່ງເ
ປັນບາບທີ່ໃຫຍ່ຫຼວງທີ່ສຸດ, ແລະ ດ້ວຍຄວາມຢ້ານກົວວ່າຈະມີ
ຜູ້ຫຼົງເຊື່ອໃນສິ່ງທີ່ນັກຂຽນຍິງທ່ານນີ້ໄດ້ເຜີຍແຜ່ອອກມາ, ພ້
ອມທັງເປັນການປະຕິບັດໜ້າທີ່ໃນການຕັກເຕືອນເພື່ອພຣະ
ອົງອັລລໍຮ໌ ແລະ ເພື່ອປ້ອງປ້າອຂອງພຣະອົງ. ຂ້າພະເຈົ້າຂໍຕໍ່ອ
ລໍຫ໌ ຜູ້ຊົງຍິ່ງໃຫຍ່ ໃຫ້ພຣະອົງຊົງໂປດໃຫ້ສິ່ງນີ້ເກີດປະໂຫຍດ
, ຊົງປັບປຸງແກ້ໄຂສະພາບການຕ່າງໆຂອງພວກເຮົາ ແລະ ຂອ
ງບັນດາມຸສລິມທັງໝົດ, ຊົງປະທານໃຫ້ແກ່ພວກເຮົາທັງໝົດ
ຊຶ່ງຄວາມເຂົ້າໃຈຢ່າງຖ່ອງແທ້ໃນສາສະໜາ ແລະ ການດຳລົງ
ໝັ້ນຢູ່ບົນສາສະໜາດັ່ງກ່າວ, ແລະ ຊົງຄຸ້ມຄອງພວກເຮົາ ແລ
ະ ບັນດາມຸສລິມໃຫ້ພົ້ນຈາກຄວາມຊົ່ວຮ້າຍໃນຕົວຕົນຂອງພ
ວກເຮົາ ແລະ ຈາກການກະທຳທີ່ບໍ່ດີຂອງພວກເຮົາ. ແທ້ຈິງ ພ
ຣະອົງນັ້ນຊົງເປັນຜູ້ມີສີດ ແລະ ເປັນຜູ້ຊົງອະນຸພາບໃນເລື່ອງດັ
ງກ່າວ.

ຂໍອັລລໍຫ໌ ຊົງປະທານການສະດຸດີ, ຄວາມສັນຕິ ແລະ ຄວາມ
ຈຳເລີນແດ່ ບ່າວຂອງພຣະອົງ ແລະ ຣໍຊູລຂອງພຣະອົງ ນະບີຂ
ອງເຮົາ ທ່ານມຸຮຳມັດ, ຄອບຄົວຂອງທ່ານ ແລະ ບັນດາມິດສະ
ຫາຍຂອງທ່ານ.

***

بِسْمِ اللهِ الرَّحْمَنِ الرَّحِيمِ

ອະລາສານ ທີ່ສາມ:

ຂໍ້ຕັດສິນກ່ຽວກັບການຂໍຄວາມຊ່ວຍເຫລືອຈາກ ຈິນ ແລະ ໄຊຕອນມານຮ້າຍ ແລະ ການສາບານຕ່ໍພວກເຂົາ

ຈາກ ອັບດຸລອະຊີຊ ບິນ ອັບດຸລລ໋ໍ ບິນ ບາຊ ເຖິງບັນດາຊ າວມຸສລິມທີ່ໄດ້ເຫັນສານສະບັບນີ້, ຂໍອັລລ໋ໍຊ່ຽງປະທານຄວາມ ສໍາເລັດໃຫ້ແກ່ຂ້າພະເຈົ້າ ແລະ ພວກເຂົາໃນການຍຶດໝັ້ນຕ່ໍສ າສະໜາຂອງພຣະອົງ ແລະ ການຍືນຍັດຕ່ໍມັນດ້ວຍເຖິດ, ອາມີ ນ.

ຂໍຄວາມສັນຕິສຸກ, ຄວາມເມດຕາແຫ່ງອັລລ໋ຮ໌ ແລະ ຄວາ ມຈະເລີນແຫ່ງພຣະອົງ ຈົ່ງປະສົບແກ່ພວກທ່ານ.

ຕ່ໍໄປນີ້, ມີພີ່ນ້ອງບາງຄົນໄດ້ຖາມຂ້າພະເຈົ້າກ່ຽວກັບສິ່ງທີ່ ຜູ້ໄ ຫ່ເຂົ້າບາງຄົນກະທ ໍາ; ຄືການອອນຂໍຕ່ໍສິ່ງອື່ນນອກເໜືອຈາ ກອັລລ໋ໍ ແລະ ການຂໍຄວາມຊ່ວຍເຫລືອຈາກສິ່ງນັ້ນໃນຍາມ ຄັບຂັນ; ເຊ່ັນ: ການອອນຂໍຕ່ໍຈິນ, ການຂໍຄວາມຊ່ວຍເຫລືອຈ າກພວກມັນ, ການບົນບານຕ່ໍພວກມັນ ແລະ ການເຊືອດສັດ ເພ ື່ອພວກມັນ. ແລະ ໃນນັ້ນເຊ່ັນດຽວກັນຄ ື ຄ ໍາເວົ້າຂອງບາງຄ ົນ ທ ີ່ກ ່າວວ ່າ: (ໂອ ້ ເຈ ້ ົ ດເອ ີ ຍ), ຄ ື: ບ ັ ນດ າຫ ົ ວໜ ້ າຂ ອ ງຈ ິ ນທ ັ ງເຈ ້ ົ ດ ຈ ົ ່ ງເອ ົ າມ ັ ນໄປ, ຈ ົ ່ ງຫ ັ ກກ ະດ ູ ກຂ ອ ງມ ັ ນ, ຈ ົ ່ ງດ ື ່ ມເລ ືອ ດຂ ອ ງມ ັ ນ, ຈ ົ ່ ງທ ໍ ລ ະມ ານຮ ່ າ ງກ າ ຍຂ ອ ງມ ັ ນ, ໂອ ້ ເຈ ້ ົ ດເອ ີ ຍ ຈ ົ ່ ງເຮ ັ ດແນ ວ ນ ັ ້ ນແນ ວ ນ ີ ້ ກ ັ ບມ ັ ນ, ຫ ຼ ື ຄ ໍ າເວ ົ ້ າຂ ອ ງບ າ ງຄ ົ ນທ ີ ່ ວ ່ າ: (ໂອ ້ ຈ ິ ນຕ ອ ນສ ອ າ ຍ, ໂອ ້ ຍ ິ ນຕ ອ ນແ ລ ງເອ ີ ຍ ຈ ົ ່ ງເອ ົ າ ລ າ ວ ໄ ປ), ແ ລ ະ ສ ິ ່ ງ ນ ີ ້ ພ ົ

ບເຫັນຫຼາຍໃນບາງເຂດພາກໃຕ້, ແລະ ທີ່ລວມຢູ່ໃນປະເພດນີ້ ກໍຄື: ການຂໍຄວາມຊ່ວຍເຫລືອຈາກຄົນຕາຍ ເຊັ່ນ ບັນດານະບີ, ບັນດາຜູ້ຊົ່ງທຳ ແລະ ຄົນອື່ນໆ, ແລະ ການຂໍຄວາມຊ່ວຍເຫລືອຈາກບັນດາມະລາອິກະຫ໌. ສິ່ງທັງໝົດນີ້ ແລະ ສິ່ງທີ່ຄ້າຍຄືກັນນີ້ ເກີດຂຶ້ນກັບຊາວມຸດສະລິມຈຳນວນຫຼາຍ, ຍ້ອນຄວາມບໍ່ຮູ້ ແລະ ການເຮັດຕາມຄົນລຸ້ນກ່ອນ, ແລະ ບາງເທື່ອບາງຄົນກໍເຫັນວ່າມັນເປັນເລື່ອງເລັກນ້ອຍ ແລະ ໄດ້ອ້າງເຫດຜົນດ້ວຍຄຳເວົ້າທີ່ວ່າ: ນີ້ເປັນພຽງຄຳເວົ້າທີ່ຕິດປາກ, ເຮົາບໍ່ໄດ້ມີເຈດຕະນາ ແລະ ບໍ່ໄດ້ເຊື່ອໃນສິ່ງນັ້ນ.

ແລະ ທ່ານຍັງໄດ້ຖາມຂ້ອຍອີກວ່າ: ກ່ຽວກັບຂໍ້ຕັດສິນໃນການແຕ່ງງານກັບຜູ້ທີ່ເປັນທີ່ຮູ້ຈັກກັນໃນການກະທຳດັ່ງກ່າວ, ສັດທີ່ພວກເຂົາເຊືອດ, ການລະຫມາດໃຫ້ຄົນຕາຍຂອງພວກເຂົາ, ການລະຫມາດຕາມຫຼັງພວກເຂົາ, ແລະ ກ່ຽວກັບການເຊື່ອຖືພວກຫມໍຜີ ແລະ ຫມໍດູ; ເຊັ່ນ ຜູ້ທີ່ອ້າງວ່າຮູ້ຈັກພະຍາດ ແລະ ສາເຫດຂອງມັນ ພຽງແຕ່ການກວດເບິ່ງສິ່ງຂອງທີ່ໄດ້ສຳຜັດກັບຮ່າງກາຍຂອງຄົນເຈັບ; ເຊັ່ນ: ຜ້າໂພກຫົວ, ໂສ້ງ, ຜ້າຄຸມຫົວ ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນ.

ຄຳຕອບຄື: ມອບການສັນລະເສີນເປັນສິດພຽງພຣະອົງດຽວ, ແລະ ຂໍອວຍພອນຄວາມສັນຕິສຸກແກ່ທ່ານຜູ້ທີ່ເປັນນະບີສຸດທ້າຍ ບໍ່ມີຜູ້ໃດຈະມາຕໍ່ຫຼັງຈາກທ່ານ, ພ້ອມດ້ວຍຄອບຄົວຂອງທ່ານ, ບັນດາສາວົກສະຫາຍຂອງທ່ານ, ແລະ ບັນດາຜູ້ທີ່ດຳເນີນຕາມແນວທາງຂອງພວກເພິ່ນຈົນເຖິງວັນແຫ່ງການຕອບແທນ.

ອັລລໍ ໄດ້ຊົ່ງສ້າງຈິນ ແລະ ມະນຸດມາເພື່ອໃຫ້ພວກເຂົາເຄົາລົບພັກດີຕໍ່ພຣະອົງພຽງອົງດຽວ, ໂດຍບໍ່ມີສິ່ງໃດມາທຽບຄຽງ

, ແລະ ເພື່ອໃຫ້ພວກເຂົາໄດ້ອຸທິດການຂໍວິງວອນ, ການຂໍຄວາມຊ່ວຍເຫລືອ, ການເຊືອດສັດ, ການບົນບານ ແລະ ການອິບາດະຫ໌ອື່ນໆ ທັງໝົດໃຫ້ແດ່ພຣະອົງ. ພຣະອົງໄດ້ຊົງສົ່ງບັນດາຣໍຊູລມາ ແລະ ໄດ້ມີພຣະບັນຊາແກ່ພວກເຂົາກ່ເພື່ອການນີ້, ແລະ ໄດ້ຊົງປະທານບັນດາຄຳພີຈາກຟາກຟ້າວົງມາ ເຊິ່ງທີ່ຍິ່ງໃຫຍ່ທີ່ສຸດຄືຄຳພີອັນກຸຣອານອັນຊົງກຽດ ເພື່ອຊີ້ແຈງ ແລະ ຮຽກຮ້ອງໄປສູ່ການນີ້, ພ້ອມທັງເປັນການຕັກເຕືອນມະນຸດໃຫ້ອອກຫ່າງຈາກການຕັ້ງພາກີກັບອັລລ໋ອ ແລະ ການເຄົາລົບບູຊາສິ່ງອື່ນນອກເໜືອຈາກພຣະອົງ. ແລະ ນີ້ຄືຮາກຖານຂອງຫຼັກການທັງປວງ ແລະ ເປັນພື້ນຖານຂອງສາສະໜາ, ເຊິ່ງເປັນຄວາມໝາຍຂອງການປະຕິຍານຕົນວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລ໋ອ, ແລະ ຄວາມຈິງຂອງມັນກ່ໍຄື: ບໍ່ມີຜູ້ທີ່ສົມຄວນໄດ້ຮັບການເຄົາລົບພັກດີຢ່າງແທ້ຈິງນອກຈາກອັລລ໋ອ, ເພາະມັນເປັນການປະຕິເສດການເປັນພຣະເຈົ້າ ແລະ ການເຄົາລົບພັກດີຕ່ສິ່ງອື່ນນອກຈາກອັລລ໋ອ, ແລະ ຢືນຢັນມັນ -ກ່ໍຄື ການເຄົາລົບພັກດີ- ໄວ້ສຳລັບອັລລ໋ອ ພຽງອົງດຽວ, ໂດຍປາດສະຈາກສິ່ງອື່ນໃດຈາກບັນດາສິ່ງທີ່ຖືກສ້າງທັງຫຼາຍ. ແລະ ຫຼັກຖານຕ່າງໆ ໃນເລື່ອງນີ້ຈາກຄຳພີຂອງອັລລ໋ອ ແລະ ຊຸນນະຫ໌ຂອງສາສະນະທູດຂອງພຣະອົງ ﷺ ແມ່ນມີຢູ່ຢ່າງຫຼວງຫຼາຍ, ໃນນັ້ນກ່ໍຄື: ຄຳດຳລັດຂອງພຣະອົງຜູ້ຊົງຍິ່ງໃຫຍ່ທີ່ວ່າ:

﴿وَمَا خَلَقْتُ الْجِنَّ وَالْإِنْسَ إِلَّا لِيَعْبُدُونِ﴿٥٦﴾﴾

(ແລະ ຂ້າບໍ່ໄດ້ສ້າງຈິນ(ຜີ) ແລະ ມະນຸດ ມາເພື່ອຈຸດປະສົງອື່ນໃດ ເວັ້ນແຕ່ການກາບໄຫວ້ເຄົາລົບພັກດີຕ່ຂ້າ)

[ຊູເຣາະຫ໌ ອັຊ-ຊາຣິຍາຕ : 56], ແລະ ໃນໂອງການຂອງອັລ

ລ໋ທ໌ໄດ້ກ່າວວ່າ:

﴿وَقَضَى رَبُّكَ أَلَّا تَعْبُدُوا إِلَّا إِيَّاهُ...﴾

(ແລະ ພຣະເຈົ້າຂອງເຈົ້າບັນຊາວ່າ ພວກເຈົ້າຢ່າເຄົາລົບພັກດີຜູ້ໃດນອກຈາກພຣະອົງເທົ່ານັ້ນ...) [ສູເຣາະຫ໌ ອິສຣ໋ອ: 23], ແລະ ໃນໂອງການຂອງອັລລ໋ທ໌ ຕະອາລາ ໄດ້ກ່າວວ່າ:

﴿وَمَا أُمِرُوا إِلَّا لِيَعْبُدُوا اللَّهَ مُخْلِصِينَ لَهُ الدِّينَ حُنَفَاءَ...﴾

(ແລະ ພວກເຂົາບໍ່ໄດ້ຖືກບັນຊາໃຫ້ກະທຳອື່ນໃດ ນອກຈາກເພື່ອເຄົາລົບພັກດີຕໍ່ອັລລ໋ທ໌ ເປັນຜູ້ມີເຈດຕະນາບໍລິສຸດໃນການພັກດີຕໍ່ພຣະອົງ ເປັນຜູ້ຢູ່ໃນແນວທາງທີ່ທ່ຽງກ້ຽ...) [ສູເຣາະຫ໌ ອັລ-ໄບຢິນະຫ໌ : 5], ແລະ ໃນໂອງການຂອງອັລລ໋ທ໌ ຕະອາລາ ໄດ້ກ່າວວ່າ:

﴿وَقَالَ رَبُّكُمُ ادْعُونِي أَسْتَجِبْ لَكُمْ إِنَّ الَّذِينَ يَسْتَكْبِرُونَ عَنْ عِبَادَتِي سَيَدْخُلُونَ جَهَنَّمَ دَاخِرِينَ ﴿٦٠﴾﴾

(ແລະ ພຣະເຈົ້າຂອງພວກເຈົ້າຕຣັດວ່າ ຈົ່ງວິງວອນຂໍຕໍ່ຂ້າ ຂ້ານໍ່ຈະຕອບຮັບແກ່ພວກເຈົ້າ ສ່ວນບັນດາຜູ້ໂອຫັງຕໍ່ການເຄົາລົບພັກດີແກ່ຂ້ານັ້ນ ຈະເຂົ້າໄປຢູ່ໃນນະລົກຢ່າງຕ່ຳຕ້ອຍ) [ສູເຣາະຫ໌ ອັລ-ກ໋ຟິຣ: 60]. ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿وَإِذَا سَأَلَكَ عِبَادِي عَنِّي فَإِنِّي قَرِيبٌ أُجِيبُ دَعْوَةَ الدَّاعِ إِذَا دَعَانِ...﴾

(ແລະ ເມື່ອບ່າວຂອງຂ້າຖາມເຈົ້າເຖິງຂ້ອຍແລ້ວ (ຈົ່ງຕອບເຖີດວ່າ) ແທ້ຈິງຂ້ານັ້ນຢູ່ໃກ້ຊິດ ຂ້າຈະຕອບຮັບຄຳວິງວອນຂອງຜູ້ທີ່ວິງວອນ ເມື່ອເຂົາວິງວອນຕໍ່ຂ້າ...)

[ສູເຣາະຫ໌ ອັລ-ບາກ໋ເຣາະຫ໌: 186].

ພຣະອົງໄດ້ຊົງຊີ້ແຈງໃນບັນດາອາຍາຕເຫຼົ່ານີ້ວ່າ ພຣະອົງຊົງສ້າງຈົນ ແລະ ມະນຸດຂຶ້ນມາເພື່ອການອິບາດະຫ໌ຕໍ່ພຣະອົງ, ແລະ ໄດ້ຊົງຕັດສິນບັນຊາ ແລະ ຊົງສັ່ງເສຍແກ່ບ່ອງບ່າວຂອງພຣະອົງໃນພຣະມະຫາຄ່ຳພິກຸຣອານ ແລະ ຜ່ານທາງຄໍລຸລຂອງພຣະອົງ, ວ່າບໍ່ໃຫ້ມີການເຄົາລົບກາບໄຫວ້ສິ່ງອື່ນໃດ ນອກຈາກພຣະຜູ້ເປັນເຈົ້າຂອງພວກເຂົາ,

ແລະ ພຣະອົງໄດ້ຊີ້ແຈງໃຫ້ເຫັນວ່າ ການດຸອາ (ຂໍພອນ) ນັ້ນເປັນການອິບາດະຫ໌ (ສະອາມີພັກ) ທີ່ຍິ່ງໃຫຍ່, ຜູ້ໃດທີ່ຫຍິ່ງຜະຫຍອງຕໍ່ມັນກໍ່ຈະໄດ້ເຂົ້າໄຟນະລົກ, ແລະ ໄດ້ສັ່ງໃຊ້ບັນດາບ່າວຂອງພຣະອົງໃຫ້ຂໍພອນຕໍ່ພຣະອົງພຽງອົງດຽວ, ແລະ ໄດ້ບອກວ່າ ແທ້ຈິງພຣະອົງນັ້ນຢູ່ໃກ້ຊິດ ພຣະອົງຈະຕອບຮັບຄຳຂໍຂອງພວກເຂົາ, ສະນັ້ນ ຈຶ່ງເປັນການຈຳເປັນແກ່ບ່າວທັງປວງທີ່ຈະຕ້ອງມຸ່ງຂໍພອນຕໍ່ພຣະຜູ້ເປັນເຈົ້າຂອງພວກເຂົາແຕ່ພຽງອົງດຽວ; ເພາະວ່າການດຸອານັ້ນເປັນປະເພດໜຶ່ງຂອງການອິບາດະຫ໌ ທີ່ພວກເຂົາຖືກສ້າງຂຶ້ນມາເພື່ອມັນ ແລະ ຖືກສັ່ງໃຊ້ໃຫ້ກະທຳມັນ, ແລະ ອັລລ໋ອ ໄດ້ກ່າວວ່າ:

﴿قُلْ إِنَّ صَلَاتِي وَنُسُكِي وَمَحْيَايَ وَمَمَاتِي لِلَّهِ رَبِّ الْعَالَمِينَ ﴿١٦٢﴾ لَا شَرِيكَ لَهُ وَبِذَٰلِكَ أُمِرْتُ وَأَنَا أَوَّلُ الْمُسْلِمِينَ ﴿١٦٣﴾﴾

(ຈົ່ງກ່າວເຖີດວ່າ: ແທ້ຈິງ ການລະຫມາດຂອງຂ້ານ້ອຍ, ການເຊືອດສັດຂອງຂ້ານ້ອຍ, ການມີຊີວິດຂອງຂ້ານ້ອຍ, ແລະ ການຕາຍຂອງຂ້ານ້ອຍນັ້ນ ແມ່ນເປັນໄປເພື່ອອັລລ໋ອ ພຣະເຈົ້າແຫ່ງຈັກກະວານໂລກ)

(ບໍ່ມີສິ່ງໃດເປັນພາຄີກັບພຣະອົງ ແລະ ດ້ວຍສິ່ງດັ່ງກ່າວນັ້ນຂ້ານ້ອຍຈຶ່ງໄດ້ຖືກບັນຊາ ແລະ ຂ້ານ້ອຍຄືຜູ້ທຳອິດໃນບັນດາ

ຜູ້ທີ່ມອບຕົນ) [ສູເຣາະຫ໌ ອັນ-ອາມ : 162-163].

ດັ່ງນັ້ນ ອັລລ໋ອ ຈຶ່ງໄດ້ຊົງບັນຊາໃຫ້ນະບີຂອງພຣະອົງ ﷺ ແຈ້ງແກ່ປວງຊົນວ່າ ການລະຫມາດຂອງເພິ່ນ ແລະ ການເຊືອດຂ້າສັດຂອງເພິ່ນ, ການມີຊີວິດຂອງເພິ່ນ ແລະ ການຕາຍຂອງເພິ່ນ; ທັງໝົດນີ້ແມ່ນເພື່ອອັລລ໋ອ ພຣະຜູ້ອະພິບານແຫ່ງສາກົນລະໂລກ ໂດຍບໍ່ມີພາຄີໃດໆ ຕໍ່ພຣະອົງ. ແລະ ດ້ວຍເຫດນີ້: ຜູ້ໃດທີ່ເຊືອດຂ້າສັດເພື່ອສິ່ງອື່ນນອກເໜືອຈາກອັລລ໋ອ ຜູ້ນັ້ນກໍໄດ້ຕັ້ງພາຄີຕໍ່ອັລລ໋ອ ແລ້ວ, ກໍເໝືອນດັ່ງທີ່ລາວໄດ້ລະຫມາດເພື່ອສິ່ງອື່ນນອກເໜືອຈາກອັລລ໋ອ; ເພາະວ່າອັລລ໋ອ ຜູ້ຊົງບໍລິສຸດ ແລະ ສູງສົ່ງ ໄດ້ຊົງກຳນົດໃຫ້ການລະຫມາດ ແລະ ການເຊືອດຂ້າສັດເປັນສິ່ງທີ່ຄຽງຄູ່ກັນ, ແລະ ໄດ້ຊົງແຈ້ງວ່າທັງສອງຢ່າງນັ້ນແມ່ນເພື່ອອັລລ໋ອ ພຽງພຣະອົງດຽວ ໂດຍບໍ່ມີສິ່ງໃດເປັນພາຄີກັບພຣະອົງ. ດັ່ງນັ້ນ ຜູ້ໃດທີ່ເຊືອດສັດເພື່ອສິ່ງອື່ນນອກຈາກອັລລ໋ອ ບໍ່ວ່າຈະເປັນຈິນ, ມະລາອິກະຫ໌, ຜູ້ທີ່ຕາຍໄປແລ້ວ ແລະ ອື່ນໆ, ເພື່ອເປັນການເຂົ້າໃກ້ພວກເຂົາ, ເຂົາຜູ້ນັ້ນກໍເໝືອນກັບຜູ້ທີ່ລະຫມາດເພື່ອສິ່ງອື່ນນອກຈາກອັລລ໋ອ. ແລະ ໃນຫະດີຣ໌ທີ່ຖືກຕ້ອງຈາກທ່ານນະບີ ອະໄລຮິສ ຊ໌ລາຕຸ ອັສລາມ ໄດ້ກ່າວວ່າ:

«لَعَنَ اللهُ مَنْ ذَبَحَ لِغَيْرِ اللهِ».

"ອັລລ໋ອ ຈຶ່ງສາບແຊ່ງຜູ້ໃດທີ່ເຊືອດສັດເພື່ອສິ່ງອື່ນນອກຈາກອັລລ໋ອ." ແລະ ທ່ານອິມ໌ອະຫ໌ມັດ ໄດ້ນຳສະເໜີໄວ້ ດ້ວຍສາຍລາຍງານທີ່ຫະສັນ ເຊິ່ງເປັນລາຍງານຈາກທ່ານຕໍຣິກ ບິນ ຊິຮາບ ຣ໌ດິຍັລລ໋ຮຸ ອັນຮຸ ວ່າທ່ານນະບີ ﷺ ໄດ້ກ່າວວ່າ:

«مرَّ رَجُلَانِ عَلَى قَومٍ لَهُم صَنَمٌ لَا يَجُوزُهُ أَحَدٌ حَتَّى يُقرِّبَ لَهُ شَيئًا، فَقَالُوا

لِأَحَدِهِمَا: قَرِّبْ. قَالَ: لَيسَ عِندِي شَيءٌ أُقَرِّبُهُ، قَالُوا: قَرِّبْ وَلَوْ ذَبَابًا، فَقَرَّبَ ذُبَابًا، فَخَلُّوا سَبِيلَهُ، فَدَخَلَ النَّارَ، وَقَالُوا لِلآخَرِ: قَرِّبْ. قَالَ: مَا كُنْتُ لِأُقَرِّبَ لِأَحَدٍ شَيْئًا دُونَ اللهِ جَلَّ جَلَالُهُ، فَضَرَبُوا عُنُقَه، فَدَخَلَ الجَنَّةَ».

«ຊາຍສອງຄົນໄດ້ເດີນທາງຜ່ານກຸ່ມຄົນໜຶ່ງທີ່ມີຮູບປັ້ນຢູ່, ເຊິ່ງບໍ່ມີຜູ້ໃດຈະຜ່ານໄປໄດ້ຈົນກວ່າຈະຖວາຍເຄື່ອງບູຊາໃຫ້ແກ່ມັນກ່ອນ. ພວກເຂົາຈຶ່ງເວົ້າກັບຄົນໜຶ່ງໃນສອງຄົນນັ້ນວ່າ: “ຈົ່ງຖວາຍເຄື່ອງບູຊາສາ.” ລາວຕອບວ່າ: “ຂ້ອຍບໍ່ມີສິ່ງໃດທີ່ຈະຖວາຍ.” ພວກເຂົາເວົ້າວ່າ: “ຈົ່ງຖວາຍເຖາະ ເຖິງວ່າຈະເປັນພຽງແມງວັນໂຕໜຶ່ງກໍ່ຕາມ.” ລາວຈຶ່ງໄດ້ຖວາຍແມງວັນໂຕໜຶ່ງ, ພວກເຂົາຈຶ່ງປ່ອຍທາງໃຫ້ລາວ, ແລ້ວລາວກໍ່ໄດ້ຕົກນະລົກ. ແລະ ພວກເຂົາໄດ້ເວົ້າກັບອີກຄົນໜຶ່ງວ່າ: “ຈົ່ງຖວາຍເຄື່ອງບູຊາສາ.” ລາວຕອບວ່າ: “ຂ້ອຍຈະບໍ່ມີວັນຖວາຍສິ່ງໃດໃຫ້ແກ່ຜູ້ໃດ ນອກເໜືອຈາກອັລລໍຮ໌.” ພວກເຂົາຈຶ່ງໄດ້ຕັດຄໍຂອງລາວ, ແລ້ວລາວກໍ່ໄດ້ເຂົ້າສະຫວັນ.»

ຖ້າຫາກວ່າຜູ້ທີ່ຖະອາຍແມງວັນ ຫຼື ສິ່ງທີ່ຄ້າຍຄືກັນນັ້ນໃຫ້ແກ່ຮູບປັ້ນ ຍັງເປັນຜູ້ຕັ້ງພາຄີ ແລະ ສົມຄວນທີ່ຈະເຂົ້າໄຟນະລົກ, ແລ້ວຈະເປັນແນວໃດກັບຜູ້ທີ່ອ້ອນວອນຂໍຕ່ໍາຈົນ, ມະລາອິກະຫ໌ ແລະ ບັນດາຄົນຊອບທໍາ, ແລະ ຈະເປັນແນວໃດກັບຜູ້ທີ່ຂໍຄວາມຊ່ວຍເຫຼືອຈາກພວກເຂົາ, ສາບານຕໍ່ພວກເຂົາ, ແລະ ຂ້າສັດເພື່ອຖະອາຍໃຫ້ພວກເຂົາ, ໂດຍຫວັງວ່າຈະຊ່ວຍປົກປ້ອງຊັບສິນຂອງຕົນ, ປົ່ນປ່ວນຄົນເຈັບປ່ວຍໃຫ້ຫາຍດີ, ຫຼື ໃຫ້ສັດລ້ຽງ ແລະ ພືດຜົນຂອງຕົນປອດໄພ, ແລະ ຈະເປັນແນວໃດກັບຜູ້ທີ່ກະທໍາເຊັ່ນນັ້ນຍ້ອນຄວາມຢ້ານກົວຕໍ່ຄວາມຊົ່ວຮ້າຍຂອງຈິນ, ຫຼື ສິ່ງອື່ນໆ ທີ່ຄ້າຍຄືກັນນັ້ນ?! ບໍ່ຕ້ອງສົງໄສເລີຍວ່າ ຜູ້ທີ່ກະ

ທຳສິ່ງນີ້ ແລະ ສິ່ງທີ່ຄ້າຍຄືກັນນັ້ນ ຍ່ອມສົມຄວນທີ່ສຸດທີ່ຈະເປັນຜູ້ຕັ້ງພາຄີ ແລະ ສົມຄວນທີ່ຈະເຂົ້າໄຟນະລົກ ຍິ່ງກວ່າຊາຍຄົນນັ້ນທີ່ໄດ້ຖະຫວາຍແມ່ງວັນໃຫ້ແກ່ຮູບປັ້ນ.

ດັ່ງທີ່ພຣະອົງຜູ້ຊົງສູງສົ່ງ ຍັງໄດ້ຕຣັດໄວ້ອີກວ່າ:

﴿إِنَّآ أَنزَلۡنَآ إِلَيۡكَ ٱلۡكِتَٰبَ بِٱلۡحَقِّ فَٱعۡبُدِ ٱللَّهَ مُخۡلِصٗا لَّهُ ٱلدِّينَ ۝٢ أَلَا لِلَّهِ ٱلدِّينُ ٱلۡخَالِصُۚ وَٱلَّذِينَ ٱتَّخَذُواْ مِن دُونِهِۦٓ أَوۡلِيَآءَ مَا نَعۡبُدُهُمۡ إِلَّا لِيُقَرِّبُونَآ إِلَى ٱللَّهِ زُلۡفَىٰٓ إِنَّ ٱللَّهَ يَحۡكُمُ بَيۡنَهُمۡ فِي مَا هُمۡ فِيهِ يَخۡتَلِفُونَۗ إِنَّ ٱللَّهَ لَا يَهۡدِي مَنۡ هُوَ كَٰذِبٞ كَفَّارٞ ۝٣﴾

(ແທ້ຈິງ ເຮົາໄດ້ປະທານຄຳພີແກ່ເຈົ້າດ້ວຍຄວາມຈິງ, ດັ່ງນັ້ນ ເຈົ້າຈົ່ງເຄົາລົບພັກດີຕໍ່ອັລລ໋ອ ໂດຍເປັນຜູ້ຖະອາຍການເຄົາລົບຢ່າງບໍລິສຸດແດ່ພຣະອົງ (ພຽງອົງດຽວເທົ່ານັ້ນ))

(ຈົ່ງຮູ້ໄວ້ເຖີດວ່າ ສຳຫຼັບອັລລ໋ອ ແລ້ວ (ບໍ່ມີພາຄີໃດ ໆ ອີກນອກຈາກ) ການເຄົາລົບພັກດີທີ່ຜ່ອງແຜ້ວບໍລິສຸດ, ແລະ ບັນດາຜູ້ທີ່ຍຶດຖືສິ່ງອື່ນຈາກອັລລ໋ອ ໃຫ້ເປັນອະລີຍ໌ (ຜູ້ຄຸ້ມຄອງ) ເພື່ອເຄົາລົບພັກດີ (ພວກເຂົາຈະກ່າວວ່າ) ເຮົາບໍ່ໄດ້ເຄົາລົບພັກດີພວກເຂົາເຫລົ່ານັ້ນ ເວັ້ນແຕ່ເພື່ອເຂົາເຫລົ່ານັ້ນຈະເຮັດໃຫ້ເຮົາໃກ້ຊິດຕໍ່ອັລລ໋ອ, ແທ້ຈິງອັລລ໋ອ ຈະຊົງຈະຕັດສິນພວກເຂົາໃນສິ່ງທີ່ພວກເຂົາຂັດແຍ້ງກັນໃນເລື່ອງນັ້ນ, ແທ້ຈິງອັລລ໋ອ ຈະບໍ່ຊົງຊີ້ນຳທາງແກ່ຜູ້ກ່າວເທັດ (ຄົນຂີ້ຕົວະ) ຜູ້ບໍ່ສຳນຶກບຸນຄຸນປະຕິເສດ) [ສູເຣາະ ອັຊຊຸມັຣ: 1-3], ແລະ ພຣະຜູ້ຊົງສູງສົ່ງໄດ້ ຕຣັດວ່າ:

﴿وَيَعۡبُدُونَ مِن دُونِ ٱللَّهِ مَا لَا يَضُرُّهُمۡ وَلَا يَنفَعُهُمۡ وَيَقُولُونَ هَٰٓؤُلَآءِ شُفَعَٰٓؤُنَا عِندَ ٱللَّهِۚ قُلۡ أَتُنَبِّـُٔونَ ٱللَّهَ بِمَا لَا يَعۡلَمُ فِي ٱلسَّمَٰوَٰتِ وَلَا فِي ٱلۡأَرۡضِۚ سُبۡحَٰنَهُۥ وَتَعَٰلَىٰ عَمَّا يُشۡرِكُونَ ۝١٨﴾

(ແລະ ເຂົາເຫລົ່ານັ້ນໄດ້ເຄົາລົບພັກດີສິ່ງອື່ນຈາກອັລລ໋ອ ທ ຊຶ່ງບໍ່ໄດ້ໃຫ້ໂທດແກ່ພວກເຂົາ ແລະ ບໍ່ໄດ້ໃຫ້ປະໂຫຍດແກ່ພວກເຂົາ ແລະ ພວກເຂົາຈະກ່າວວ່າ ພວກເຫຼົ່ານີ້ແຫລະ ຄືຜູ້ຊ່ວຍເຫຼືອເຮົາ ນະ ທີ່ອັລລ໋ອ. ຈົ່ງກ່າວເຖີດ (ມຸຮຳມັດ) ພວກເຈົ້າຈະບອກອັລລ໋ອເຖິງສິ່ງທີ່(ພວກເຂົ້າໃຈວ່າ) ພຣະອົງບໍ່ຊົງຮັບຮູ້ໃນບັນດາຊັ້ນຟ້າ ແລະ ແຜ່ນດິນແດນນັ້ນບໍ? ພຣະອົງຊົງມະຫາບໍລິສຸດ ແລະ ຊົງສູງສົ່ງ ເໜືອສິ່ງທີ່ພວກເຂົາຕັ້ງພາຄີຂຶ້ນ)

(ຢູນຸສ : 18).

ພຣະອົງອັລລ໋ອ ໄດ້ຊົງແຈ້ງໃຫ້ຊາບໃນສອງອາຍະห์ນີ້ວ່າ, ບັນດາຜູ້ປະຕິເສດໄດ້ຍຶດຖືເອົາສິ່ງຖືກສ້າງອື່ນໆ ນອກເໜືອຈາກພຣະອົງມາເປັນທີ່ເພິ່ງທາງໃຈ, ໂດຍພວກເຂົາເຄົາລົບພັກດີຕໍ່ສິ່ງເຫຼົ່ານັ້ນຄຽງຄູ່ກັບພຣະອົງ ດ້ວຍຄວາມຍ້ານກົວ, ຄວາມຫວັງ, ການເຊື່ອດ, ການບົນບານ, ການອອນຂໍ ແລະ ສິ່ງອື່ນໆ ໃນທຳນອງດຽວກັນ, ໂດຍກ່າວອ້າງວ່າບັນດາສິ່ງທີ່ພວກເຂົາໃຫ້ການພັກດີນັ້ນ ຈະເຮັດໃຫ້ຜູ້ທີ່ເຄົາລົບພັກດີຕໍ່ພວກມັນເຂົ້າໃກ້ຊິດກັບພຣະອົງ ແລະ ຈະຊ່ວຍເກ່ຍໃຫ້ພວກເຂົາຕໍ່ໜ້າພຣະອົງ, ຕໍ່ມາ ພຣະອົງກໍໄດ້ປະກາດວ່າພວກເຂົາເປັນຜູ້ຂີ້ຕົວະ ແລະ ໄດ້ຊີ້ແຈງໃຫ້ເຫັນຄວາມໂມຂະຂອງພວກເຂົາ, ແລະ ໄດ້ອີ້ນພວກເຂົາວ່າເປັນຜູ້ຂີ້ຕົວະ, ເປັນຜູ້ປະຕິເສດສັດທາ (ກຸຟຟາຣ) ແລະ ເປັນຜູ້ຕັ້ງພາຄີ (ມຸຊຣິກີນ), ແລະ ພຣະອົງໄດ້ຊົງປະກາດຄວາມບໍລິສຸດຂອງພຣະອົງຈາກການຕັ້ງພາຄີຂອງພວກເຂົາ, ດັ່ງທີ່ພຣະອົງຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿...سُبۡحَانَهُۥ وَتَعَٰلَىٰ عَمَّا يُشۡرِكُونَ﴾

(...ພຣະອົງຊົງມະຫາບໍລິສຸດ ແລະ ຊົງສູງສົ່ງ ເໜືອສິ່ງທີ່ພ

ອກເຂົາຕັ້ງພາຄີຂຶ້ນ) [ສຸເຣາະຫ໌ ອັນ ນະຫ໌ລ :1]. ສະນັ້ນ, ຈົ່ງເປັນທີ່ຮູ້ກັນວ່າ ຜູ້ໃດທີ່ຍຶດຖືເອົາມະລາອິກະຮ໌, ຫຼື ນະບີ, ຫຼື ຈິນ, ຫຼື ຕົ້ນໄມ້ ຫຼື ຫີນ, ແລ້ວວິງວອນຂໍຕ່ໍສິ່ງນັ້ນຄຽງຄູ່ກັບອັລລ໋ໍ, ຂໍຄວາມຊ່ວຍເຫຼືອຈາກມັນ ແລະ ສະແຫວງຫາຄວາມໃກ້ຊິດຕ່ໍມັນ ດ້ວຍການບົນບານ ແລະ ການຖະວາຍບູຊາໂດຍການເຊືອດສັດ, ໂດຍຫວັງໃນການຊະຟາອະຮ໌ (ການໄກ່ເກ່ຍຊ່ວຍເຫຼືອ) ຂອງສິ່ງດັ່ງກ່າວນ່ໍາອັລລ໋ໍ ເພື່ອໃຫ້ຕົນໄດ້ໃກ້ຊິດກັບພຣະອົງ, ຫຼື ຫວັງໃຫ້ຜູ້ປ່ວຍຫາຍດີ, ຫຼື ການປົກປ້ອງຊັບສິນ, ຫຼື ຄວາມປອດໄພຂອງຜູ້ທີ່ບໍ່ຢູ່, ຫຼື ສິ່ງອື່ນໆ ທີ່ຄ້າຍຄືກັນນັ້ນ; ຜູ້ນັ້ນກ່ໍໄດ້ຕົກຢູ່ໃນການຕັ້ງພາຄີອັນໃຫຍ່ຫລວງນີ້, ແລະ ໄພພິບັດອັນຮ້າຍແຮງ, ເຊິ່ງອັລລ໋ໍໄດ້ກ່າວໄວ້ໃນເລື່ອງນີ້ວ່າ:

﴿إِنَّ اللَّهَ لَا يَغْفِرُ أَنْ يُشْرَكَ بِهِ وَيَغْفِرُ مَا دُونَ ذَلِكَ لِمَنْ يَشَاءُ وَمَنْ يُشْرِكْ بِاللَّهِ فَقَدِ افْتَرَى إِثْمًا عَظِيمًا﴿٤٨﴾﴾

(ແທ້ຈິງອັລລ໋ໍ ຈະບ່ໍຊົງອະໄພໂທດໃຫ້ແກ່ການທີ່ສິ່ງໜຶ່ງຈະຖືກໃຫ້ມີພາຄີ ຂຶ້ນແກ່ພຣະອົງ ແລະ ພຣະອົງຈະຊົງອະໄພໃຫ້ແກ່ສິ່ງອື່ນນອກຈາກນັ້ນ ສ່ໍາຫຼັບຜູ້ທີ່ພຣະອົງຊົງປະສົງ ແລະ ຜູ້ໃດໃຫ້ມີພາຄີຂຶ້ນແກ່ອັລລ໋ໍແລ້ວ ແນ່ນອນລາວກ່ໍໄດ້ຂຸປະໂລກບາບກ່ໍາອັນໃຫຍ່ຫຼວງຂຶ້ນ) [ສຸເຣາະຫ໌ ນິຊາ: 48] ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿...إِنَّهُ مَنْ يُشْرِكْ بِاللَّهِ فَقَدْ حَرَّمَ اللَّهُ عَلَيْهِ الْجَنَّةَ وَمَأْوَاهُ النَّارُ وَمَا لِلظَّالِمِينَ مِنْ أَنْصَارٍ﴾

(ແທ້ຈິງ ຜູ້ໃດໃຫ້ມີການພາຄີຂຶ້ນແກ່ອັລລ໋ໍ ແນ່ນອນ ອັລລ໋ໍຈະຊົງໃຫ້ສະຫວັນເປັນທີ່ຕ້ອງຫ້າມແກ່ເຂົາ ແລະ ທີ່ພ່ໍານັກ

ຂອງເຂົານັ້ນ ຄືນະລົກ ແລະ ສຳຫຼັບບັນດາຜູ້ອະທຳນັ້ນຍ່ອມບໍ່ມີຜູ້ຊ່ວຍເຫຼືອໃດໆ) (ສຸເຣາະຫ໌ ອັລ- ມາອິດะ : 72).

ແລະ ການຊະຟາອະຫ໌ນັ້ນຈະເກີດຂຶ້ນໃນມື້ສິ້ນໂລກສະເພາະແຕ່ຊາວເຕົ້າຮີດ ແລະ ຜູ້ມີຄວາມບໍລິສຸດໃຈເທົ່ານັ້ນ, ບໍ່ແມ່ນສຳລັບຜູ້ທີ່ຕັ້ງພາຄີ, ດັ່ງທີ່ທ່ານນະບີ ຊັລລັລລຸ ອະໄລຮິ ອະຊັລລັມ ໄດ້ກ່າວ ເມື່ອມີຜູ້ຖາມທ່ານວ່າ: “ໂອ້ ຣໍຊູລ ຂອງອັລລ໋ໍ, ໃຜຄືຜູ້ທີ່ຈະໂຊກດີທີ່ສຸດທີ່ຈະໄດ້ຮັບການຊະຟາອະຫ໌ຈາກທ່ານ?” ທ່ານໄດ້ກ່າວວ່າ:

«مَنْ قَالَ: لَا إِلَهَ إِلَّا اللهُ خَالِصًا مِنْ قَلْبِهِ».

«ຜູ້ໃດກ່ຳຕາມທີ່ກ່າວວ່າ: ລາອິລາຫະ ອິລລັລລ໋ໍ ດ້ວຍຄວາມບໍລິສຸດຈາກຫົວໃຈຂອງລາວ». ທ່ານນະບີ ຊັລລັລລຸ ອະໄລຮິ ອະສັລລັມ ຍັງໄດ້ກ່າວໄວ້ວ່າ:

«لِكُلِّ نَبِيٍّ دَعْوَةٌ مُسْتَجَابَةٌ، فَتَعَجَّلَ كُلُّ نَبِيٍّ دَعْوَتَهُ، وَإِنِّي اخْتَبَأْتُ دَعْوَتِي شَفَاعَةً لِأُمَّتِي يَومَ القِيَامَةِ، فَهِيَ نَائِلَةٌ إِنْ شَاءَ اللهُ مَن مَاتَ مِنْ أُمَّتِي لَا يُشْرِكُ بِاللهِ شَيْئًا».

«ນະບີທຸກໆ ທ່ານມີຄຳຂໍພອນໜຶ່ງທີ່ຖືກຕອບຮັບ, ແລະ ນະບີທຸກໆ ທ່ານກໍໄດ້ຮີບຮ້ອນຂໍຄຳຂໍພອນນັ້ນຂອງຕົນໄປແລ້ວ. ສ່ວນຂ້ອຍນັ້ນໄດ້ເກັບຄຳຂໍພອນຂອງຂ້ອຍໄວ້ ເພື່ອເປັນການຊະຟາອະຫ໌ໃຫ້ແກ່ປະຊາຊາດຂອງຂ້ອຍໃນວັນກິຍາມะຫ໌, ເຊິ່ງມັນຈະຖືກມອບໃຫ້ - ຖ້າຫາກອັລລ໋ໍຈົ່ງປະສົງ - ແກ່ຜູ້ທີ່ຕາຍຈາກປະຊາຊາດຂອງຂ້ອຍ ໂດຍທີ່ລາວບໍ່ໄດ້ຕັ້ງພາຄີກັບອັລລ໋ໍໃນສິ່ງໃດເລີຍ».

ບັນດາຜູ້ປະຕິເສດໃນຍຸກທ່າອິດ ໄດ້ເຄີຍເຊື່ອໝັ້ນວ່າ ອັລລ໋ໍເປັນພຣະຜູ້ອະພິບານ, ຜູ້ຊົ່ງສ້າງ ແລະ ຜູ້ປະທານປັດໄจยังชีบแก่พอกเขา, หากแต่ว่าพอกเขาได้ไปยึดหมั่นอยู่กับบั

ນດານະບີ, ບັນດາຜູ້ທີ່ລຸອບທຳ, ບັນດາມະລາອີກະຫ໌, ບັນດາຕົ້ນໄມ້, ບັນດາຫີນຜາ ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນນັ້ນ, ໂດຍຫວັງໃນການລ່ວຍເຫຼືອໄກ່ເກ່ຍຂອງພວກເຂົາ ນະ ທີ່ອັລລ໋ວ, ແລະ ເພື່ອເຮັດໃຫ້ພວກເຂົາໄດ້ເຂົ້າໃກ້ຊິດພຣະອົງ, ດັ່ງທີ່ໄດ້ກ່າວມາແລ້ວໃນບັນດາອາຍະຫ໌, ດັ່ງນັ້ນ ອັລລ໋ວຈຶ່ງບໍ່ໄດ້ຊົງຍົກເວັ້ນໃຫ້ແກ່ພວກເຂົາໃນເລື່ອງດັ່ງກ່າວ, ແຕ່ພຣະອົງອັລລ໋ວໄດ້ຊົງຕຳໜິພວກເຂົາໃນຄຳພີອັນຍິ່ງໃຫຍ່ຂອງພຣະອົງ, ແລະ ໄດ້ຂະໜານນາມພວກເຂົາວ່າເປັນຜູ້ປະຕິເສດ ແລະ ເປັນຜູ້ຕັ້ງພາຄີ, ແລະ ພຣະອົງໄດ້ຊົງປະກາດວ່າການອ້ອນວອນຂອງພວກເຂົາທີ່ວ່າບັນດາພະເຈົ້າເຫຼົ່ານີ້ຈະໃຫ້ການຊ່ວຍເຫຼືອແກ່ພວກເຂົາ ແລະ ຈະເຮັດໃຫ້ພວກເຂົາໄດ້ໃກ້ຊິດກັບອັລລ໋ວນັ້ນ ເປັນຄຳກ່າວທີ່ໂຫຫ໌ກມ໌ດເທັດ, ແລະ ທ່ານຣໍຊູລຂອງອັລລ໋ວ ﷺ ຊ່ວລ້ວລ໋ວ ອະໄລຮິ ອະຊ້ວລ໋ວ ກໍ່ບໍ່ໄດ້ຍົກເວັ້ນໃຫ້ແກ່ພວກເຂົາຊັ່ນກັນ, ແຕ່ທ່ານຣໍຊູລ ຊ່ວລ້ວລ໋ວ ອະໄລຮິ ອະຊ້ວລ໋ວ ໄດ້ຕໍ່ສູ້ກັບພວກເຂົາໃນເລື່ອງການຕັ້ງພາຄີນີ້ ຈົນກວ່າພວກເຂົາຈະອຸທິດການອິບາດະຫ໌ໃຫ້ແກ່ອັລລ໋ວ໌ພຽງອົງດຽວ, ໂດຍປະຕິບັດຕາມຄຳສັ່ງຂອງພຣະອົງທີ່ວ່າ:

﴿وَقَاتِلُوهُمْ حَتَّى لَا تَكُونَ فِتْنَةٌ وَيَكُونَ الدِّينُ لِلَّهِ...﴾

(ແລະ ພວກເຈົ້າຈົ່ງຕໍ່ສູ້ພວກເຂົາ ຈົນກວ່າການຕັ້ງພາຄີຈະບໍ່ມີຂຶ້ນ ແລະສາສະຫນາຈະເປັນຂອງອັລລ໋ວ໌...) [ສູເຣາະຫ໌ ອັລ-ບາກ໌ເຣາະຫ໌: 193]. ແລະ ທ່ານນະບີ ﷺ ໄດ້ກ່າວວ່າ:

«أُمِرْتُ أَنْ أُقَاتِلَ النَّاسَ حَتَّى يَشْهَدُوا أَنْ لَا إِلَهَ إِلَّا اللهُ وَأَنَّ مُحَمَّدًا رَسُولُ اللهِ، وَيُقِيمُوا الصَّلَاةَ، وَيُؤْتُوا الزَّكَاةَ، فَإِذَا فَعَلُوا ذَلِكَ عَصَمُوا مِنِّي دِمَاءَهُم وَأَمْوَالَهُمْ إِلَّا بِحَقِّ الإِسْلَامِ، وَحِسَابُهُم عَلَى اللهِ».

«ຂ້ອຍຖືກບັນຊາໃຫ້ຕໍ່ສູ້ກັບຜູ້ຄົນ ຈົນກວ່າພວກເຂົາຈະປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຮ໌ ແລະ ມຸຮໍາມັດເປັນສາສະນະທູດຂອງອັລລໍຮ໌, ແລະ ດໍາລົງການລະຫມາດ, ແລະ ຈ່າຍຊະກາດ, ດັ່ງນັ້ນ ເມື່ອພວກເຂົາກະທໍາເຊັ່ນນັ້ນແລ້ວ ພວກເຂົາກໍ່ໄດ້ປົກປ້ອງຊີວິດ ແລະ ຊັບສິນຂອງພວກເຂົາໄວ້ຈາກຂ້ອຍ, ເວັ້ນເສຍແຕ່ດ້ວຍສິດແຫ່ງອິສລາມ, ແລະ ການຊໍາລະສອບສວນພວກເຂົານັ້ນເປັນຫນ້າທີ່ຂອງອັລລໍຮ໌». ແລະ ຄວາມຫມາຍຄໍາກ່າວຂອງທ່ານນະບີ ﷺ ແມ່ນ:

«حَتَّى يَشْهَدُوا أَن لَا إِلَهَ إِلَّا اللهُ».

"ຈົນກວ່າພວກເຂົາຈະປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດທີ່ຄວນແກ່ການເຄົາລົບພັກດີ ນອກຈາກອັລລໍຮ໌" ຫມາຍເຖິງ: ການເຈາະຈົງການເຄົາລົບພັກດີໃຫ້ແກ່ອັລລໍຮ໌ຜູ້ຍິ່ງໃຫຍ່ອົງດຽວ, ໂດຍບໍ່ມີສິ່ງອື່ນໃດນອກເໜືອຈາກພຣະອົງ.

ແລະ ບັນດາຜູ້ປະຕິເສດ ຜູ້ບູຊາຮູບປັ້ນ ເຄີຍຢ້ານກົວພວກຈິນ ແລະ ຂໍຄວາມຄຸ້ມຄອງຈາກພວກເຂົາ, ດັ່ງນັ້ນ ອັລລໍຮ໌ ຕະອາລາ ຈຶ່ງໄດ້ປະທານຄໍາຕັສຂອງພຣະອົງວ່ງມາວ່າ:

﴿وَأَنَّهُۥ كَانَ رِجَالٌ مِّنَ ٱلْإِنسِ يَعُوذُونَ بِرِجَالٍ مِّنَ ٱلْجِنِّ فَزَادُوهُمْ رَهَقًا ۝٦﴾

ຄວາມວ່າ (ແລະ ແທ້ຈິງມີຜູ້ຊາຍຈໍານວນຫນຶ່ງຈາກຫມູ່ມະນຸດ ໄດ້ຂໍຄວາມຄຸ້ມຄອງຕໍ່ຜູ້ຊາຍຈໍານວນຫນຶ່ງຈາກຫມູ່ຈິນ, ດັ່ງນັ້ນ ພວກເຂົາຈຶ່ງເພີ່ມຄວາມຜິດບາບໃຫ້ແກ່ພວກມະນຸດເຫຼົ່ານັ້ນ) [ຊູເຣາະຫ໌ ອັລ-ຈິນ : 6]. ບັນດານັກອັດຖະທິບາຍ ໄດ້ກ່າວໃນໂອງການອັນສູງສົ່ງ ເຖິງຄວາມຫມາຍດໍາລັດຂອງພຣະອົງວ່າ:

﴿...فَزَادُوهُمْ رَهَقًا﴾

(...ແລະ ມັນຍິ່ງເພີ່ມການລ່ວງລະເມີດໃຫ້ແກ່ພວກເຂົາ) ກ່າວຄື: ຄວາມຫວາດຫວັ່ນ ແລະ ຄວາມຢ້ານກົວ; ເພາະວ່າພວກຈິນຈະທະນົງຕົນ ແລະ ຫຍິ່ງຍະໂສ, ເມື່ອພວກມັນເຫັນມະນຸດມາຂໍເພິ່ງພິງຈາກພວກມັນ, ໃນເວລານັ້ນ ພວກມັນກໍ່ຈະຍິ່ງເພີ່ມຄວາມຢ້ານກົວ ແລະ ຄວາມຫວາດຫວັ່ນໃຫ້ແກ່ພວກເຂົາ (ມະນຸດ) ຫຼາຍຂຶ້ນ, ຈົນເຮັດໃຫ້ພວກເຂົາຕ້ອງເຄົາລົບພັກດີ ແລະ ຂໍເພິ່ງພິງຕໍ່ພວກມັນຫຼາຍຍິ່ງຂຶ້ນ.

ແລະ ອັລລໍຮ໌ໄດ້ຊົງປ່ຽນແທນສິ່ງນັ້ນໃຫ້ແກ່ຊາວມຸສລິມ ດ້ວຍການຂໍຄວາມຄຸ້ມຄອງຕໍ່ພຣະອົງ, ແລະ ດ້ວຍບັນດາພຣະດຳລັດອັນສົມບູນຂອງພຣະອົງ, ແລະ ໄດ້ຊົງປະທານພຣະດຳລັດຂອງພຣະອົງລົງມາໃນເລື່ອງນີ້ວ່າ:

﴿وَإِمَّا يَنزَغَنَّكَ مِنَ الشَّيۡطَانِ نَزۡغٞ فَٱسۡتَعِذۡ بِٱللَّهِۖ إِنَّهُۥ سَمِيعٌ عَلِيمٌ ٢٠٠﴾

(ແລະ ຖ້າຫາກເຈົ້າຖືກຍຸແຍ່ຈາກໄຊຕອນ ກໍ່ຈົ່ງຂໍຄວາມຄຸ້ມຄອງຕໍ່ອັລລໍຮ໌ ແທ້ຈິງພຣະອົງເປັນຜູ້ຊົງໄດ້ຍິນ ຜູ້ຊົງຮອບຮູ້) [ຊູເຣາະຫ໌ ອັລ-ອະຣ໌ຟ : 200], ແລະ ດຳລັດຂອງພຣະອົງທີ່ວ່າ :

﴿قُلۡ أَعُوذُ بِرَبِّ ٱلۡفَلَقِ ١﴾

ຄວາມໝາຍ: (ຈົ່ງກ່າວເຖີດມຸຮັມມັດ ຂ້ານ້ອຍຂໍຄວາມຄຸ້ມຄອງຕໍ່ພຣະເຈົ້າແຫ່ງຮຸ່ງອາລຸນ), ແລະ ມີລາຍງານທີ່ຊໍເຮັຍ ຫ໌ຈາກ ທ່ານນະບີ ﷺ ວ່າເພິ່ນໄດ້ກ່າວວ່າ:

«مَنْ نَزَلَ مَنْزِلًا فَقَالَ: (أَعُوذُ بِكَلِمَاتِ اللهِ التَّامَّاتِ مِنْ شَرِّ مَا خَلَقَ)؛ لَم يَضُرَّهُ شَيءٌ حَتَّى يَرْتَحِلَ مِنْ مَنْزِلِهِ ذَلِكَ».

ຄວາມໝາຍວ່າ: ຜູ້ໃດທີ່ຢຸດພັກໃນສະຖານທີ່ແຫ່ງໜຶ່ງ ແລ້ວກ່າວວ່າ: (ອະອູຊຸ ບິກະລິມາ ຕິລລາຮິ ອັດຕາມມາຕ ມິນຊັຣຣິ ມາລ່ວັກ); ຈະບໍ່ມີສິ່ງໃດ ມາທຳຮ້າຍລາວໄດ້ ຈົນກວ່າລາວ ຈະອອກເດີນທາງຈາກສະຖານທີ່ພັກຂອງລາວແຫ່ງນັ້ນ.

ຈາກບັນດາອາຍາຕ ແລະ ຫະດີຊທີ່ກ່າວມາຂ້າງເທິງ, ຜູ້ທີ່ສະແຫວງຫາຄວາມລອດພົ້ນ, ແລະ ປາດຖະໜາທີ່ຈະຮັກສາສາສະໜາຂອງຕົນໃຫ້ປອດໄພຈາກການຕັ້ງພາຄີ (ຊິຣິກ), ທັງໃນຮູບແບບທີ່ເລັກນ້ອຍ ແລະ ທີ່ຊັດເຈນ ກໍຈະຮູ້ວ່າ; ການຜູກພັນກັບບັນດາຄົນຕາຍ, ມະລາອິກະຫ໌, ຈິນ ແລະ ສິ່ງຖືກສ້າງອື່ນ ໆ, ການຂໍວິງວອນຕໍ່ພວກເຂົາ ແລະ ການຂໍຄວາມຄຸ້ມຄອງຈາກພວກເຂົາ ແລະ ສິ່ງທີ່ຄ້າຍຄືກັນນັ້ນ; ເປັນການກະທຳຂອງຊາວຍຈາຮິລິຍະຫ໌ ທີ່ເປັນຜູ້ຕັ້ງພາຄີ, ແລະ ເປັນການຕັ້ງພາຄີ (ຊິຣິກ) ທີ່ໜ້າລັງກຽດທີ່ສຸດຕໍ່ອັລລໍຮ໌ ລຸບຮານະ, ສະນັ້ນ ຈຶ່ງເປັນສິ່ງຈຳເປັນທີ່ຈະຕ້ອງລະຖິ້ມມັນ, ລະມັດລະວັງຈາກມັນ, ຕັກເຕືອນເຊິ່ງກັນແລະກັນໃຫ້ລະຖິ້ມມັນ, ແລະ ກ່າວຫ້າມປາມຜູ້ທີ່ກະທຳມັນ.

ສ່ວນຜູ້ໃດທີ່ເປັນທີ່ຮູ້ຈັກໃນໝູ່ຜູ້ຄົນ ດ້ວຍການກະທຳທີ່ເປັນຊິຣິກເຫຼົ່ານີ້: ກໍບໍ່ອະນຸຍາດໃຫ້ແຕ່ງງານກັບເຂົາ, ແລະ ບໍ່ໃຫ້ກິນສັດທີ່ເຂົາເຊືອດ, ບໍ່ໃຫ້ລະຫມາດໃຫ້ເຂົາ, ແລະ ບໍ່ໃຫ້ລະຫມາດຕາມຫຼັງລາວ, ຈົນກວ່າເຂົາຈະປະກາດການກັບເນື້ອກັບຕົວຕໍ່ອັລລໍຮ໌ຈາກສິ່ງນັ້ນ, ແລະ ອຸທິດການຂໍວິງວອນ ແລະ ການເຄົາລົບບູຊາໃຫ້ແດ່ອັລລໍຮ໌ພຽງອົງດຽວ, ແລະ ການຂໍວິງວອນນັ້ນກໍຄືການເຄົາລົບບູຊາ, ຫາກແຕ່ມັນຄືແກ່ນສານຂອງມັນ, ດັ່ງທີ່ທ່ານນະບີ ຊຸລລັລລໍຮ໌ຮຸ ອະໄລຮິ ອະສັລລັມ ໄດ້ກ່າວວ່າ:

«الدُّعَاءُ هُوَ العِبَادَةُ».

«ການດຸອາ ເປັນ ການອີບາດະຫ໌» ແລະ ໃນລາຍງານຫະດີຊ ບົດອື່ນຈາກທ່ານນະບີ ﷺ ທ່ານໄດ້ກ່າວໄວ້ວ່າ:

«الدُّعَاءُ مُخُّ العِبَادَةِ».

«ການດຸອາ ແມ່ນ ແກ່ນແທ້ຂອງການອີບາດະຫ໌» ສ່ວນການແຕ່ງດອງກັບບັນດາຜູ້ຕັ້ງພາຄີ, ອັລລໍຮ໌ ໄດ້ກ່າວວ່າ:

﴿وَلَا تَنْكِحُوا الْمُشْرِكَاتِ حَتَّى يُؤْمِنَّ وَلَأَمَةٌ مُؤْمِنَةٌ خَيْرٌ مِنْ مُشْرِكَةٍ وَلَوْ أَعْجَبَتْكُمْ وَلَا تُنْكِحُوا الْمُشْرِكِينَ حَتَّى يُؤْمِنُوا وَلَعَبْدٌ مُؤْمِنٌ خَيْرٌ مِنْ مُشْرِكٍ وَلَوْ أَعْجَبَكُمْ أُولَئِكَ يَدْعُونَ إِلَى النَّارِ وَاللَّهُ يَدْعُو إِلَى الْجَنَّةِ وَالْمَغْفِرَةِ بِإِذْنِهِ وَيُبَيِّنُ آيَاتِهِ لِلنَّاسِ لَعَلَّهُمْ يَتَذَكَّرُونَ﴿٢٢١﴾﴾

(ແລະ ພວກເຈົ້າຢ່າໄດ້ແຕ່ງງານກັບບັນດາຍິງມຸຊຣິກ (ຕັ້ງພາຄີ) ຈົນກວ່າພວກນາງຈະສັດທາ. ແລະ ແນ່ນອນ ທາດຍິງຜູ້ສັດທາຄົນໜຶ່ງ ຍ່ອມດີກວ່າ ຍິງມຸຊຣິກ(ຕັ້ງພາຄີ) ເຖິງແມ່ນວ່ານາງຈະເປັນທີ່ພໍໃຈຂອງພວກເຈົ້າກໍ່ຕາມ. ແລະ ພວກເຈົ້າຢ່າໄດ້ໃຫ້ (ຍິງຜູ້ສັດທາ)ແຕ່ງງານກັບບັນດາຊາຍມຸຊຣິກ(ຕັ້ງພາຄີ) ຈົນກວ່າພວກເຂົາຈະສັດທາ. ແລະ ແນ່ນອນ ທາດຊາຍຜູ້ສັດທາຄົນໜຶ່ງ ຍ່ອມດີກວ່າ ຊາຍມຸຊຣິກ(ຕັ້ງພາຄີ) ເຖິງແມ່ນວ່າເຂົາຈະເປັນທີ່ພໍໃຈຂອງພວກເຈົ້າກໍ່ຕາມ. ຊົນເຫຼົ່ານັ້ນ ພວກເຂົາເຊີນຊວນໄປສູ່ນະລົກ, ສ່ວນອັລລໍຮ໌ນັ້ນ ພຣະອົງຊົງເຊີນຊວນໄປສູ່ສະຫວັນ ແລະ ການອະໄພໂທດດ້ວຍອະນຸມັດຂອງພຣະອົງ. ແລະ ພຣະອົງຊົງຊີ້ແຈງບັນດາໂອງການຂອງພຣະອົງແກ່ມວນມະນຸດ ເພື່ອວ່າພວກເຂົາຈະໄດ້ໃຄ່ຄວນຄຶດໄດ້.) [ສູເຣາະຫ໌ ອັລ-ບາກໍເຣາະຫ໌: 221]. ສະນັ້ນ ອັລລໍຮ໌ ລຸບຣານະຫ໌ ໄ

ດ້ຫ້າມບັນດາມຸສລິມຈາກການແຕ່ງງານກັບບັນດາຍິງມຸຊຣິກ, ຄືບັນດາຜູ້ທີ່ເຄົາລົບບູຊາຮູບປັ້ນ, ຈີນ, ມະລາອິກະຮ໌ ແລະ ອື່ນໆ, ຈົນກວ່າພວກນາງຈະສັດທາ ໂດຍການອີຄລາສ ໃນການອີບາດະຫ໌ຕໍ່ອັລລໍຫ໌ພຽງອົງດຽວ, ແລະ ຍັ້ງຢືນຕໍ່ທ່ານຣໍຊູລ ຊັລລັລລໍຮຸ ອະໄລຮິ ອະສັລລໍາ ໃນສິ່ງທີ່ທ່ານໄດ້ນໍາມາ, ແລະ ປະຕິບັດຕາມແນວທາງຂອງທ່ານ, ແລະ ໄດ້ຫ້າມການແຕ່ງງານຂອງຍິງມຸສລິມໃຫ້ກັບບັນດາຊາຍມຸຊຣິກ, ຈົນກວ່າພວກເຂົາຈະສັດທາ ໂດຍການອີຄລາສໃນການອີບາດະຫ໌ຕໍ່ອັລລໍຫ໌ພຽງອົງດຽວ, ແລະ ຍັ້ງຢືນຕໍ່ທ່ານ ຣໍຊູລ ຊັລລັລລໍຮຸ ອະໄລຮິ ອະສັລລໍາ, ແລະ ປະຕິບັດຕາມທ່ານ.

ແລະ ພຣະອົງຜູ້ສູງສົ່ງໄດ້ຊົງແຈ້ງໃຫ້ຊາບວ່າ ຫາດສາວຜູ້ສັດທາ ດີກວ່າ ຍິງເສລີຜູ້ຕັ້ງພາກີ, ເຖິງແມ່ນວ່ານາງຈະເປັນທີ່ປະທັບໃຈແກ່ຜູ້ທີ່ເບິ່ງນາງ ແລະ ຟັງຄໍາເວົ້າຂອງນາງ ດ້ວຍຄວາມງາມ ແລະ ຄວາມມ່ວນຫູໃນຄໍາເວົ້າຂອງນາງກໍຕາມ, ແລະ ວ່າ ບ່າວຜູ້ສັດທາ ດີກວ່າ ຊາຍເສລີຜູ້ຕັ້ງພາກີ, ເຖິງແມ່ນວ່າລາວຈະເປັນທີ່ປະທັບໃຈແກ່ຜູ້ທີ່ຟັງ ແລະ ເບິ່ງລາວ ດ້ວຍຄວາມຫຼໍ່ເຫຼົາ, ຄວາມຫຼໍ່ຽນໃຫຼໃນການເວົ້າ, ຄວາມກ້າຫານ ແລະ ສິ່ງອື່ນໆນອກເໜືອຈາກນັ້ນກໍຕາມ, ຫຼັງຈາກນັ້ນ ພຣະອົງກໍໄດ້ຊົງຊີ້ແຈງເຖິງສາເຫດຂອງຄວາມປະເສີດນີ້ ດ້ວຍຄໍາຕຣັດຂອງພຣະອົງຜູ້ສູງສົ່ງທີ່ວ່າ:

﴿...أُولَٰئِكَ يَدْعُونَ إِلَى النَّارِ...﴾

...ຄົນເຫຼົ່ານັ້ນເຊີນຊວນໄປສູ່ນາຮົກ... [ສູເຣາະຫ໌ ອັລ-ບາກໍເຣາະຫ໌: 221]. ເຊິ່ງຫມາຍເຖິງ: ບັນດາຜູ້ຊາຍທີ່ຕັ້ງພາຄີ ແລະ ບັນດາຜູ້ຍິງທີ່ຕັ້ງພາຄີ; ເພາະພວກເຂົາຄືຜູ້ເຊີນຊວນໄປສູ່ນາ

ຮ້ກ ດ້ວຍຄຳເວົ້າ, ການກະທຳ, ການປະພຶດ ແລະ ຈະວິຍະທຳຂ
ອງພວກເຂົາ. ສ່ວນບັນດາມຸມິນຜູ້ຊາຍ ແລະ ບັນດາມຸມິນແມ່
ຍິງນັ້ນ ພວກເຂົາກໍຄືຜູ້ເຊີນຊວນໄປສູ່ສະຫວັນ ດ້ວຍຈະວິຍະ
ທຳ, ການກະທຳ ແລະ ການປະພຶດຂອງພວກເຂົາ, ແລ້ວທັງສອ
ງຝ່າຍນີ້ຈະເທົ່າທຽມກັນໄດ້ແນວໃດ

ສ່ວນການລະຫມາດສຳລັບບັນດາຜູ້ຕັ້ງພາກີ, ອັລລໍ ຜູ້ຊົງ
ສູງສົ່ງໄດ້ກ່າວໂອ້ກ່ຽວກັບພວກມຸນາຟິກ (ໜ້າຊື່ໃຈຄົດ) ວ່າ:

﴿وَلَا تُصَلِّ عَلَىٰٓ أَحَدٍ مِّنْهُم مَّاتَ أَبَدًا وَلَا تَقُمْ عَلَىٰ قَبْرِهِۦٓ إِنَّهُمْ كَفَرُوا۟ بِٱللَّهِ وَرَسُولِهِۦ وَمَاتُوا۟ وَهُمْ فَٰسِقُونَ ٨٤﴾

(ແລະ ເຈົ້າຢ່າໄດ້ລະຫມາດໃຫ້ແກ່ຜູ້ໃດໃນຫມູ່ພວກເຂົາ
ທີ່ຕາຍໄປແລ້ວເປັນອັນຂາດ ແລະ ຢ່າໄດ້ຢືນຢູ່ທີ່ຫລຸມຝັງສົບ
ຂອງເຂົາ, ແທ້ຈິງພວກເຂົາໄດ້ປະຕິເສດສັດທາຕໍ່ອັລລໍ ແລະ
ຣໍຊູລຂອງພຣະອົງ ແລະ ພວກເຂົາໄດ້ຕາຍໄປໃນຂະນະທີ່ພວກ
ເຂົາເປັນຜູ້ຝ່າຝືນ) [ສູເຣາະ ຕໍ ເຕົ ບະ ຕໍ : 84], ດັ່ງນັ້ນ ພຣະອົ
ງອັລລໍ ຈຶ່ງໄດ້ຊົງຊີ້ແຈງໄວ້ໃນອາຍະ ຕໍ ອັນມີກຽດນີ້ວ່າ ຜູ້ມຸນາ
ຟິກ (ໜ້າຊື່ໃຈຄົດ) ແລະ ຜູ້ປະຕິເສດສັດທາ ນັ້ນ ຈະບໍ່ມີການ
ລະຫມາດ (ຈະນາຊະ ຕໍ) ໃຫ້ແກ່ພວກເຂົາ; ເນື່ອງຈາກການປະ
ຕິເສດສັດທາຂອງພວກເຂົາຕໍ່ອັລລໍ ແລະ ສາສະນະທູດຂອງ
ພຣະອົງ, ແລະ ເຊັ່ນດຽວກັນ ກໍຈະບໍ່ມີການລະຫມາດຕາມຫຼັງພ
ວກເຂົາ, ແລະ ຈະບໍ່ຖືກແຕ່ງຕັ້ງໃຫ້ເປັນຜູ້ນຳ (ອີຫມ່າມ) ຂອງ
ຊາວມຸສລິມ; ເນື່ອງຈາກການປະຕິເສດສັດທາຂອງພວກເຂົາ
ແລະ ຄວາມບໍ່ສັດຊື່ຂອງພວກເຂົາ, ແລະ ເນື່ອງຈາກຄວາມເປັ
ນສັດຕູອັນໃຫຍ່ຫຼວງທີ່ຢູ່ລະຫວ່າງພວກເຂົາກັບຊາວມຸສລິມ,
ແລະ ເພາະວ່າພວກເຂົາທັງສອງບໍ່ແມ່ນຜູ້ທີ່ປະຕິບັດການລະ

ໝາດ ແລະ ການເຄົາລົບຜັກດີ; ເພາະວ່າການງານຈະບໍ່ຖືກຕ
ອບຮັບເມື່ອມີການປະຕິເສດສັດທາ ແລະ ການຕັ້ງພາຄີຢູ່, ຂໍຕ່ໍ
ອັລລ໋ໜ ໃຫ້ພວກເຮົາປອດໄພຈາກສິ່ງດັ່ງກ່າວ. ສ່ວນວ່າການກິ
ນສັດເຊືອດຂອງບັນດາຜູ້ຕັ້ງພາຄີ: ອັລລ໋ໜ ໄດ້ຊົງດຳລັດຊີ້ແຈງ
ເຖິງການຫ້າມສັດທີ່ຕາຍເອງ ແລະ ສັດເຊືອດຂອງບັນດາຜູ້ຕັ້
ງພາຄີວ່າ:

﴿وَلَا تَأْكُلُوا مِمَّا لَمْ يُذْكَرِ اسْمُ اللَّهِ عَلَيْهِ وَإِنَّهُ لَفِسْقٌ وَإِنَّ الشَّيَاطِينَ لَيُوحُونَ
إِلَىٰ أَوْلِيَائِهِمْ لِيُجَادِلُوكُمْ وَإِنْ أَطَعْتُمُوهُمْ إِنَّكُمْ لَمُشْرِكُونَ ﴿١٢١﴾﴾

(ແລະ ພວກເຈົ້າຈົ່ງຢ່າກິນຈາກສິ່ງທີ່ພຣະນາມຂອງອັລລ
ໜ ບໍ່ໄດ້ຖືກກ່າວເທິງມັນ, ແລະ ແທ້ຈິງມັນຄືການຝ່າຝືນ. ແລະ
ແທ້ຈິງ ບັນດາໄຊຕອນນັ້ນຈະຍຸຍົງບັນດາໝູ່ຂອງພວກມັນ ເ
ພື່ອໃຫ້ພວກເຂົາມາໂຕ້ຖຽງກັບພວກເຈົ້າ. ແລະ ຖ້າຫາກພວ
ກເຈົ້າເຊື່ອຟັງພວກມັນ, ແທ້ຈິງ ພວກເຈົ້າກໍຈະກາຍເປັນບັນ
ດາຜູ້ຕັ້ງພາກີຢ່າງແນ່ນອນ) [ສູເຣາະຫ໌ ອັນ-ອາມ : 121], ດັ່ງ
ນັ້ນ ອັລລ໋ໜ ຜູ້ຊົງສູງສົ່ງ ຈຶ່ງໄດ້ຫ້າມຊາວມຸສລິມ ຈາກການກິນ
ສັດທີ່ຕາຍ ແລະ ສັດທີ່ຖືກເຊືອດໂດຍຜູ້ຕັ້ງພາຄີ; ເພາະວ່າລາ
ອ (ຜູ້ຕັ້ງພາຄີ) ເປັນຜູ້ທີ່ສົກກະປົກ, ດັ່ງນັ້ນສັດທີ່ລາວເຊືອດຈຶ່
ງປຽບເໝືອນກັບສັດທີ່ຕາຍ, ເຖິງແມ່ນວ່າລາວຈະກ່າວນາມ
ຂອງອັລລ໋ໜ ໃສ່ມັນກໍຕາມ; ເພາະການກ່າວນາມຈາກລາວນັ້ນ
ເປັນໂມຄະ ແລະ ບໍ່ມີຜົນໃດໆ; ເນື່ອງຈາກວ່າມັນເປັນການອິບ
າດະຫ໌, ແລະ ການຕັ້ງພາກີ (ຊິຣິກ) ຍ່ອມລົບລ້າງການອິບາດະ
ຫ໌ ແລະ ເຮັດໃຫ້ມັນເປັນໂມຄະ, ຈົນກວ່າຜູ້ຕັ້ງພາກີຈະກັບເນື
ອກັບຕົວສູ່ອັລລ໋ໜ ຜູ້ຊົງສູງສົ່ງ.

ແລະ ພຣະອົງອັລລ໋ໜ ໄດ້ຊົງອະນຸຍາດກິນອາຫານຂອງຊາວ

ຄຳພີ ໃນຄຳດຳລັດຂອງພຣະອົງທີ່ວ່າ:

﴿...وَطَعَامُ الَّذِينَ أُوتُوا الْكِتَابَ حِلٌّ لَكُمْ وَطَعَامُكُمْ حِلٌّ لَهُمْ...﴾

(...ແລະ ອາຫານຂອງຜູ້ທີ່ໄດ້ຮັບປຶ້ມຄຳພີນັ້ນເປັນທີ່ອະນຸມັດແກ່ພວກເຈົ້າແລ້ວ ແລະ ອາຫານຂອງພວກເຈົ້າກໍ່ເປັນທີ່ອະນຸມັດແກ່ພວກເຂົາ...) [ຊູເຣາະຫ໌ ອັລ-ມາອິດະຫ໌ : 5]. ເພາະວ່າ ພວກເຂົາອ້າງວ່າຕົນນັບຖືສາສະໜາທີ່ມາຈາກຟາກຟ້າ, ແລະ ກ່າວອ້າງວ່າເປັນຜູ້ຕິດຕາມຂອງນະບີມູຊາ ແລະ ນະບີອີຊາ, ເ ຖິງແມ່ນວ່າພວກເຂົາຈະເປັນຜູ້ທີ່ກ່າວທັດໃນເລື່ອງນັ້ນກໍ່ຕາ ມ. ແລະ ອັລລໍຫ໌ໄດ້ຊົງຍົກເລີກ ແລະ ລົບລ້າງສາສະໜາຂອງພ ວກເຂົາແລ້ວ ດ້ວຍການແຕ່ງຕັ້ງທ່ານນະບີ ມຸຮຳມັດ ຈຸລລັລລ ຮຸ ອະໄລຮິ ອະຊັລລຳ ມາສູ່ມວນມະນຸດທັງປວງ. ແຕ່ທະວ່າອັລ ລໍຫ໌ ຜູ້ຊົງສູງສົ່ງ ແລະ ຍິ່ງໃຫຍ່ ໄດ້ຊົງອະນຸມັດອາຫານຂອງຊາວ ຄຳພີ ແລະ ແມ່ຍິງຂອງພວກເຂົາໃຫ້ແກ່ພວກເຮົາ; ເນື່ອງດ້ວ ຍວິທະຍາປັນຍາອັນສູງສົ່ງ ແລະ ຄວາມລັບທີ່ໄດ້ຖືກຄ່ຳນຶງເຖິງ , ເຊິ່ງບັນດານັກວິຊາການອິສລາມໄດ້ຊີ້ແຈງໄວ້ແລ້ວ. ເຊິ່ງແຕ ກຕ່າງຈາກບັນດາຜູ້ຕັ້ງພາຄີ ທີ່ເປັນຜູ້ບູຊາຮູບປັ້ນ ແລະ ຜູ້ທີ່ ວ່ອງລັບໄປແລ້ວ, ເຊັ່ນ ບັນດານະບີ, ບັນດາຜູ້ເປັນທີ່ຮັກຂອງອັ ລລໍຫ໌ ແລະ ອື່ນໆ; ເພາະວ່າສາສະໜາຂອງພວກເຂົານັ້ນບໍ່ມີຮ າກຖານ, ແລະ ບໍ່ມີແມ່ນແຕ່ສິ່ງໃດທີ່ຄ້າຍຄືກັບຄວາມຈິງ, ແ ຕ່ທະວ່າມັນເປັນໂມຄະໂດຍພື້ນຖານຂອງມັນ, ດັ່ງນັ້ນ ສັດທີ່ຖື ກເຊືອດໂດຍພວກເຂົາຈຶ່ງຖືວ່າເປັນສັດທີ່ຕາຍເອງ, ແລະ ບໍ່ຖື ກອະນຸຍາດໃຫ້ບໍລິໂພກ.

ສ່ວນຄຳເວົ້າຂອງບຸກຄົນໜຶ່ງທີ່ກ່າວຕໍ່ຄູ່ສົນທະນາຂອງລາ ວວ່າ: (ເຮົາໄດ້ເຂົ້າມາສິ່ງສູ່ເຈົ້າ), (ເຮົາໄດ້ພາຕົວເຈົ້າໄປ), (ໄຊຕອນ

ໄດ້ພາເຈົ້າບິນໄປ), ແລະຄຳເວົ້າທີ່ຄ້າຍຄືກັນນີ້, ສິ່ງນີ້ຖືເປັນການດ່າທໍ ແລະ ການເວົ້າຈາຫຍາບຄາຍ, ເຊິ່ງບໍ່ເປັນສິ່ງທີ່ອະນຸຍາດລະຫວ່າງຊາວມຸສລິມ, ເຊັ່ນດຽວກັບການດ່າທໍ ແລະ ການເວົ້າຈາຫຍາບຄາຍປະເພດອື່ນໆ, ແລະ ບໍ່ຖືວ່າເປັນການຕັ້ງພາຄີ, ຍົກເວັ້ນແຕ່ວ່າຜູ້ທີ່ກ່າວຄຳເວົ້ານັ້ນມີຄວາມເຊື່ອວ່າ ຈິນສາມາດມີອິດທິພົນເໜືອມະນຸດໄດ້ ໂດຍບາງສະຈາກການອະນຸຍາດ ແລະ ຄວາມປະຊ້ຽງຂອງອັລລ໋ອ, ສະນັ້ນ ຜູ້ໃດທີ່ເຊື່ອເຊັ່ນນັ້ນ ໃນຜີຈິນ ຫຼື ສິ່ງຖືກສ້າງອື່ນໆ ຜູ້ນັ້ນກໍເປັນຜູ້ປະຕິເສດສັດທາດ້ວຍຄວາມເຊື່ອດັ່ງກ່າວ; ເພາະວ່າອັລລ໋ອ ມະຫາບໍລິສຸດ ພຣະອົງຊ້ຽງເປັນເຈົ້າຂອງທຸກສິ່ງ, ຜູ້ຊ້ຽງມີເດຊານຸພາບເໜືອທຸກສິ່ງ, ພຣະອົງຄືຜູ້ຊ້ຽງໃຫ້ຄຸນປະໂຫຍດ ແລະ ໂທດ, ແລະ ບໍ່ມີສິ່ງໃດເກີດຂຶ້ນໄດ້ ນອກຈາກດ້ວຍການອະນຸມັດຂອງພຣະອົງ, ພຣະປະສົງຂອງພຣະອົງ ແລະ ການກຳນົດໄວ້ກ່ອນຂອງພຣະອົງ, ດັ່ງທີ່ພຣະອົງຜູ້ຊ້ຽງຍິ່ງໃຫຍ່ໄດ້ຊ້ຽງຕຣັດສັ່ງແກ່ນະບີຂອງພຣະອົງ ﷺ ໃຫ້ປະກາດແກ່ມວນມະນຸດເຖິງຫຼັກການອັນຍິ່ງໃຫຍ່ນີ້ວ່າ:

﴿قُلْ لَا أَمْلِكُ لِنَفْسِي نَفْعًا وَلَا ضَرًّا إِلَّا مَا شَاءَ اللَّهُ وَلَوْ كُنْتُ أَعْلَمُ الْغَيْبَ لَاسْتَكْثَرْتُ مِنَ الْخَيْرِ وَمَا مَسَّنِيَ السُّوءُ إِنْ أَنَا إِلَّا نَذِيرٌ وَبَشِيرٌ لِقَوْمٍ يُؤْمِنُونَ ١٨٨﴾

(ຈົ່ງກ່າວເຖີດ (ມູຮຳມັດ) ວ່າຂ້ອຍບໍ່ມີອຳນາດ ທີ່ຈະໃຫ້ຄຸນປະໂຫຍດໃດໆ ແລະ ໃຫ້ໂທດໃດໆ ແກ້ຕົວຂ້ອຍໄດ້ ນອກຈາກສິ່ງທີ່ ອັລລ໋ອ ຊ້ຽງປະສົງ ແລະຖ້າຫາກວ່າຂ້ອຍເປັນຜູ້ຮູ້ສິ່ງເລັ່ນລັບແລ້ວ ແນ່ນອນຂ້ອຍຍ່ອມກອບໂກຍສິ່ງທີ່ດີງາມ ໄວ້ຢ່າງຫລວງຫລາຍ ແລະ ຄວາມຊົ່ວຮ້າຍ ກໍ່ຈະບໍ່ແຕະຕ້ອງຂ້ອຍໄດ້ ຂ້ອຍບໍ່ແມ່ນໃຜຄົນອື່ນໃດ ນອກຈາກຜູ້ຕັກເຕືອນ ແລະຜູ້ປະກາດຂ່າວດີສຳຫລັບກຸ່ມຊົນຜູ້ສັດທາເທົ່ານັ້ນ). [ຊູເຣາະຫ໌ ອັລ-

ອະຣ໌ຟ : 188], ສະນັ້ນ, ຖ້າຫາກຜູ້ເປັນທີ່ປະເສີດສຸດແຫ່ງສິ່ງຖືກສ້າງທັງປວງ (ຊ່ວລັລລ໌ລ໌ຮຸອະໄລຮິ ອະສັລລັມ) ຍັງບໍ່ມີອຳນາດທີ່ຈະໃຫ້ຄຸນປະໂຫຍດ ແລະ ໂທດໃດໆ ແກ່ຕົນເອງໄດ້, ນອກຈາກສິ່ງທີ່ອັລລ໌ຮ໌ຊົງປະສົງແລ້ວ, ແລ້ວສິ່ງທີ່ຖືກສ້າງອື່ນໆ ຈະເປັນແນວໃດ?! ແລະ ບັນດາຫຼັກຖານໃນຄວາມໝາຍນີ້ກໍມີຢູ່ຢ່າງຫຼວງຫຼາຍ.

ສ່ວນການຖາມບັນດາຜູ້ທຳນາຍດວງສະຕາ, ພວກໝໍຜີ, ໝໍດູ ແລະ ພວກອື່ນໆ ທີ່ຄ້າຍຄືກັນ, ຊຶ່ງເປັນຜູ້ທີ່ຍຸ່ງກ່ຽວກັບຂ່າວຄາວຂອງສິ່ງທີ່ເລີກລັບ, ມັນເປັນສິ່ງຊົ່ວຮ້າຍທີ່ບໍ່ເປັນທີ່ອະນຸຍາດ, ແລະ ການເຊື່ອຖືພວກເຂົາແມ່ນຮ້າຍແຮງ ແລະ ຊົ່ວຊ້າຍິ່ງກວ່ານັ້ນ, ແທ້ຈິງແລ້ວ ມັນເປັນສ່ວນໜຶ່ງຂອງການປະຕິເສດສັດທາ; ເນື່ອງຈາກຄຳກ່າວຂອງທ່ານນະບີ ﷺ ທີ່ວ່າ:

«مَنْ أَتَى عَرَّافًا فَسَأَلَهُ عَنْ شَيءٍ؛ لَمْ تُقْبَلْ لَهُ صَلَاةٌ أَرْبَعِينَ يَومًا».

«ຜູ້ໃດທີ່ໄປຫາໝໍດູ ແລ້ວຖາມລາວກ່ຽວກັບສິ່ງໃດໜຶ່ງ, ການລະໝາດຂອງລາວກໍຈະບໍ່ຖືກຕອບຮັບເປັນເວລາ 40 ມື້ »

ລາຍງານໂດຍອິມ່ຳມຸສລິມ, ແລະ ໃນບັນທຶກຊ່ເຮັຍຫ໌ຂອງທ່ານຄືກັນ ຈາກທ່ານມຸອາວິຍະຫ໌ ບິນ ຮະກ໋ຳ ອັສ-ສຸລະມີ ຣ໌ດິຍັລລ໌ຮຸ ອັນຮຸ:

«أَنَّ النَّبِيَّ ﷺ نَهَى عَنْ إِتْيَانِ الكُهَّانِ وَسُؤَالِهِم».

« ແທ້ຈິງ ທ່ານນະບີ ﷺ ໄດ້ສັ່ງຫ້າມການໄປຫາໝໍດູ ແລະ ສອບຖາມພວກເຂົາ »

ແລະ ບັນດາເຈົ້າຂອງໜັງສືຊຸນັນ ໄດ້ລາຍງານຈາກທ່ານນະບີ ﷺ ວ່າ ເພິ່ນໄດ້ກ່າວໄວ້ວ່າ:

«مَنْ أَتَى كَاهِنًا، فَصَدَّقَهُ بِمَا يَقُولُ؛ فَقَدْ كَفَرَ بِمَا أُنْزِلَ عَلَى مُحَمَّدٍ ﷺ».

“ຜູ້ໃດກໍຕາມທີ່ໄປຫາໝໍດູ, ແລ້ວເຊື່ອໃນສິ່ງທີ່ລາວເວົ້າ; ຜູ້ນັ້ນກໍໄດ້ປະຕິເສດສັດທາຕໍ່ສິ່ງທີ່ຖືກປະທານລົງມາໃຫ້ແກ່ທ່ານນຸຫໍາມັດ ﷺ ແລ້ວ” ແລະ ຫະດີຊຕ່າງໆ ທີ່ມີຄວາມໝາຍທໍານອງນີ້ມີຢູ່ຫຼວງຫຼາຍ. ສະນັ້ນ, ຈຶ່ງເປັນສິ່ງຈໍາເປັນສໍາລັບຊາວມຸສລິມ: ທີ່ຈະຕ້ອງລະມັດລະວັງຈາກການຖາມບັນດາໝໍດູ, ຜູ້ທໍານາຍດວງສະຕາ ແລະ ບັນດາພວກຫລອກລວງທັງຫຼາຍ, ຜູ້ທີ່ເຮັດວຽກກ່ຽວກັບການບອກເລົ່າສິ່ງທີ່ເປັນຄວາມລຶກລັບ ແລະ ສ້າງຄວາມສັບສົນໃຫ້ແກ່ຊາວມຸສລິມ, ບໍ່ວ່າຈະເປັນໃນນາມຂອງການແພດ ຫຼື ອື່ນໆ ກໍ່ຕາມ, ເນື່ອງຈາກການຫ້າມປາມຂອງທ່ານນະບີ ﷺ ແລະ ການຕັກເຕືອນຂອງເພິ່ນກ່ຽວກັບເລື່ອງດັ່ງກ່າວທີ່ໄດ້ກ່າວມາກ່ອນແລ້ວ, ແລະ ລວມຢູ່ໃນນີ້ຄື: ສິ່ງທີ່ບາງຄົນອ້າງຕົນໃນນາມຂອງການແພດ, ຈາກບັນດາເລື່ອງເລົ້ນລັບ, ເມື່ອລາວໄດ້ດົມຜ້າພັນຫົວຂອງຜູ້ຊາຍທີ່ເຈັບປ່ວຍ, ຫຼື ຜ້າຄຸມຫົວຂອງຜູ້ຍິງທີ່ເຈັບປ່ວຍ, ຫຼື ສິ່ງທີ່ຄ້າຍຄືກັນນັ້ນ, ລາວກໍ່ຈະບອກວ່າ: ຜູ້ຊາຍທີ່ເຈັບປ່ວຍຄົນນີ້ ຫຼື ຜູ້ຍິງທີ່ເຈັບປ່ວຍຄົນນີ້ ໄດ້ກະທໍາສິ່ງນັ້ນສິ່ງນີ້, ແລະ ໄດ້ເຮັດສິ່ງນັ້ນສິ່ງນີ້, ຈາກບັນດາເລື່ອງເລົ້ນລັບທີ່ບໍ່ມີສິ່ງບົ່ງຊີ້ໃດໆ ຢູ່ໃນຜ້າພັນຫົວຂອງຜູ້ເຈັບປ່ວຍ ແລະ ສິ່ງທີ່ຄ້າຍຄືກັນນັ້ນ, ແທ້ຈິງແລ້ວຈຸດປະສົງຂອງການກະທໍາດັ່ງກ່າວກໍຄືການຫຼອກລວງຄົນທົ່ວໄປ, ເພື່ອໃຫ້ພວກເຂົາເວົ້າວ່າ: ລາວເປັນຜູ້ທີ່ມີຄວາມຮູ້ເລື່ອງການແພດ, ແລະ ຮູ້ຈັກພະຍາດຊະນິດຕ່າງໆ ແລະ ສາເຫດຂອງມັນ, ແລະ ບາງທີລາວກໍໃຫ້ຢາບາງຢ່າງແກ່ພວກເຂົາ, ແລະ ບາງເທື່ອການຫາຍດີກໍເກີດຂຶ້ນພໍດີດ້ວຍການກໍາໜົດຂອງອັລລໍຮ໌, ພວກເ

ຂ້ານ້ອຍຄິດໄປວ່າ ການຫາຍດີນັ້ນເປັນຍ້ອນຢາຂອງລາວ, ແລະ ບາງທີການເຈັບປ່ວຍກໍ່ອາດມີສາເຫດມາຈາກພວກຈິນ ແລະ ພວກໄຊຕອນບາງສ່ວນ, ເຊິ່ງຮັບໃຊ້ຜູ້ທີ່ອ້າງຕົນວ່າເປັນໝໍ, ແລະ ບອກໃຫ້ເຂົາຮູ້ກ່ຽວກັບບາງເລື່ອງທີ່ຊ້ອນເລັ້ນທີ່ພວກມັນໄດ້ລ່ວງຮູ້, ແລ້ວຜູ້ນັ້ນກໍ່ເຜີ່ງພາສິ່ງດັ່ງກ່າວ, ແລະ ເຮັດໃຫ້ພວກຈິນ ແລະ ພວກໄຊຕອນພໍໃຈດ້ວຍການບູຊາທີ່ເໝາະສົມກັບພວກມັນ, ແລ້ວພວກມັນກໍ່ຈະອອກໄປຈາກຜູ້ປ່ວຍຄົນນັ້ນ, ແລະ ປະຖິ້ມການທຳຮ້າຍທີ່ພວກມັນເຄີຍສິງສູ່ລາວ. ແລະ ນີ້ຄືສິ່ງທີ່ເປັນທີ່ຮູ້ຈັກກັນດີກ່ຽວກັບພວກຜີຈິນ ແລະ ພວກໄຊຕອນ ແລະ ຜູ້ທີ່ນຳໃຊ້ບໍລິການຂອງພວກມັນ.

ແລະ ສິ່ງທີ່ຈຳເປັນແກ່ບັນດາມຸດສະລິມເຊັ່ນດຽວກັນຄື: ການລະມັດລະວັງຈາກສິ່ງດັ່ງກ່າວ, ການຕັກເຕືອນຊຶ່ງກັນແລະ ກັນໃຫ້ລະເວັ້ນຈາກມັນ, ໃຫ້ຫັນມາເຜີ່ງພາຕໍ່ອັລລໍຮ໌ ຜູ້ຊົງສູງສົ່ງ, ແລະ ການມອບໝາຍຕໍ່ພຣະອົງໃນທຸກໆ ເລື່ອງ, ແລະ ບໍ່ມີຂໍ້ຫ້າມໃນການໃຊ້ການຮຸກຍະຫ໌ທີ່ຖືກຕ້ອງຕາມບົດບັນຍັດ ແລະ ການໃຊ້ຢາທີ່ອະນຸຍາດ, ແລະ ການປິ່ນປົວກັບແພດໝໍທີ່ທຳການກວດສອບຄົນປ່ວຍ, ແລະ ກວດສອບພະຍາດຂອງເຂົາດ້ວຍສາເຫດທີ່ສາມາດສຳຜັດໄດ້ ແລະ ສົມເຫດສົມຜົນ, ແລະ ມີລາຍງານທີ່ເຊື່ອຖືໄດ້ຈາກທ່ານນະບີ ﷺ ວ່າທ່ານໄດ້ກ່າວວ່າ:

«مَا أَنْزَلَ اللهُ دَاءً إِلَّا أَنْزَلَ لَهُ شِفَاءً، عَلِمَهُ مَنْ علِمه، وَجَهِلَهُ مَنْ جَهِلَهُ».

« ອັລລໍຮ໌ບໍ່ໄດ້ຊົງສົ່ງພະຍາດໃດລົງມາ ເວັ້ນແຕ່ພຣະອົງໄດ້ຊົງສົ່ງການປິ່ນປົວຂອງມັນລົງມາດ້ວຍ, ຜູ້ທີ່ຮູ້ກໍ່ຮູ້ມັນ ແລະ ຜູ້ທີ່ບໍ່ຮູ້ກໍ່ບໍ່ຮູ້ມັນ » ແລະ ທ່ານນາບີ ﷺ ກ່າວວ່າ:

«لِكُلِّ دَاءٍ دَوَاءٌ، فإِذَا أُصِيبَ دَوَاءُ الدَّاءَ بَرَأَ بِإِذْنِ اللهِ».

«ທຸກໆ ໂລກພະຍາດຍ່ອມມີຢາປົວ, ດັ່ງນັ້ນເມື່ອຢາປົວພະຍາດນັ້ນຖືກກັບໂລກພະຍາດ ລາວກໍ່ຈະຫາຍດີດ້ວຍການອະນຸມັດຂອງອັລລໍ ຫ໌». ແລະ ທ່ານນາບີ ﷺ ກ່າວວ່າ:

«عِبَادَ اللهِ، تَدَاوَوا وَلَا تَدَاوَوا بِحَرَامٍ».

«ໂອ້ບ່າວຂອງອັລລໍ ຫ໌, ຈົ່ງປິ່ນປົວຮັກສາເຖີດ ແລະ ຢ່າປິ່ນປົວຮັກສາດ້ວຍສິ່ງທີ່ຕ້ອງຫ້າມ» ແລະ ຫະດີ ຊະອື່ນ ໆ ທີ່ມີຄວາມໝາຍທຳນອງນີ້ຢັ່ງມີອີກຫຼາຍ.

ເຮົາຂໍຈາກອັລລໍ ຫ໌ ຜູ້ຊົງຍິ່ງໃຫຍ່ ໃຫ້ຊົງປັບປຸງແກ້ໄຂສະພາບການຕ່າງໆຂອງຊາວມຸ ສລິມທັງໝົດ, ແລະ ຊົງປົວແປງຫົວໃຈ ແລະ ຮ່າງກາຍຂອງພວກເຂົາໃຫ້ພົ້ນຈາກຄວາມຊົ່ວຮ້າຍທັງປວງ, ແລະ ຊົງລວມພວກເຂົາໃຫ້ເປັນປຶກແຜ່ນດຽວ ດຳລົງໝັ້ນຢູ່ບົນແນວທາງທີ່ຖືກຕ້ອງ, ແລະ ຊົງຄຸ້ມຄອງພວກເຮົາ ແລະ ພວກເຂົາໃຫ້ພົ້ນຈາກການຫລົງທາງຂອງບົດທົດສອບທັງຫຼາຍ, ແລະ ຈາກການເຊື່ອຟັງໄຊຕອນ ແລະ ພັກພວກຂອງມັນ. ແທ້ຈິງ ພຣະອົງນັ້ນຊົງອະນຸພາບເໜືອທຸກສິ່ງ, ແລະ ບໍ່ມີອຳນາດ ແລະ ພະລັງໃດໆ ເວັ້ນເສຍແຕ່ດ້ວຍການຊ່ວຍເຫຼືອຂອງ ອັລລໍ ຫ໌ ຜູ້ຊົງສູງສົ່ງ ຜູ້ຊົງຍິ່ງໃຫຍ່.

ຂໍອັລລໍ ຫ໌ ຊົງປະທານການສະດຸດີ, ຄວາມສັນຕິ ແລະ ຄວາມຈຳເລີນ ແດ່ບ່າວຂອງພຣະອົງ ແລະ ຄໍລຸ ລຂອງພຣະອົງ ທ່ານນະບີມຸ ຮຳມັດຂອງເຮົາ, ຄອບຄົວຂອງທ່ານ ແລະ ບັນດາມິດສະຫາຍຂອງທ່ານທັ້ງຫຼາຍ.

***

بِسْمِ اللهِ الرَّحْمَنِ الرَّحِيمِ

ອະລາສານ ທີ່ສີ່:

ຂໍ້ຊີ້ຂາດກ່ຽວກັບການອີບາດະຫ໌ດ້ວຍບົດວິຣິດຕ່າງໆ ທີ່ເປັນບົດອະຫ໌ ແລະ ຊິຣິກ

ຈາກ ອັບດຸລອະຊີຊ ບິນ ອັບດຸລລ໋ໍ ບິນ ບາຊ ເຖິງ ທ່ານອ້າຍນ້ອງຜູ້ມີກຽດ (.....), ຂໍອັລລ໋ໍຈົ່ງປະທານຄວາມສຳເລັດໃຫ້ແກ່ທ່ານໃນທຸກໆຄວາມດີງາມ, ອາມີນ.

ຂໍຄວາມສັນຕິສຸກ, ຄວາມເມດຕາແຫ່ງອັລລ໋ໍ ແລະ ຄວາມຈະເລີນແຫ່ງພຣະອົງ ຈົ່ງປະສົບແກ່ພວກທ່ານ.

ຕໍ່ໄປນີ້: ຂ້າພະເຈົ້າໄດ້ຮັບຈົດໝາຍອັນມີກຽດຂອງທ່ານແລ້ວ, ຂໍອັລລ໋ໍໄດ້ຈົ່ງເຊື່ອມໂຍງທ່ານໄວ້ກັບທາງນຳຂອງພຣະອົງ, ເຊິ່ງໃນຈົດໝາຍໄດ້ແຈ້ງໃຫ້ຊາບວ່າ ຢູ່ປະເທດຂອງທ່ານມີກຸ່ມຄົນທີ່ຍຶດໝັ້ນໃນບົດວິງວອນຕ່າງໆທີ່ອັລລ໋ໍບໍ່ໄດ້ຈົ່ງປະທານຫຼັກຖານໃດໆມາຮັບຮອງ, ໃນນັ້ນມີທັງສິ່ງທີ່ເປັນບົດອະຫ໌ ແລະ ສິ່ງທີ່ເປັນຊິຣິກ, ໂດຍພວກເຂົາໄດ້ອ້າງອີງສິ່ງດັ່ງກ່າວໄປຍັງຜູ້ນຳຂອງບັນດາຜູ້ສັດທາ ຄື: ທ່ານ ອະວີ ບິນ ອະບີ ຕ໋ໍລິບ (ຂໍອັລລ໋ໍຈົ່ງພໍພຣະໄທທ່ານ) ແລະ ທ່ານອື່ນໆ, ແລະ ພວກເຂົາອ້າງບັນດາບົດວິຣິດເຫຼົ່ານັ້ນ ໃນການລຸມນຸມຊິກຣ໌, ຫຼື ໃນບັນດາມັສຍິດຫຼັງຈາກລະຫມາດມັກຣິບ, ໂດຍອ້າງວ່າມັນເປັນການກະທຳທີ່ສ້າງຄວາມໃກ້ຊິດກັບອັລລ໋ໍ, ເຊັ່ນຄຳເວົ້າຂອງພວກເຂົາ: ດ້ວຍສິດທິຂອງອັລລ໋ໍ, ໂອ້ ບັນດາຜູ້ຊາຍຂອງອັລລ໋ໍ, ຈົ່ງຊ່ວຍເຫຼືອພວກເຮົາດ້ວຍການຊ່ວຍເຫຼືອຂອງອັລລ໋ໍ, ແລະ ຈົ່ງເປັນຜູ້ຊ່ວຍເຫຼືອພວກເຮົາດ້ວຍອັລລ໋ໍ. ແລະ ເໝືອນດັ່ງຄຳ

ວ້ຳຂອງພວກເຂົາທີ່ວ່າ: ໂອ້ບັນດາຜູ້ນຳ, ໂອ້ບັນດານາຍທ່ານ, ຈົ່ງຕອບຮັບເຖີດ ໂອ້ບັນດາຜູ້ໃຫ້ການຊ່ວຍເຫຼືອແກ່ພວກເຮົາ, ແລະ ຈົ່ງຂໍຊະຟາອະຮ໌ (ການໄກ່ເກ່ຍ) ຕໍ່ອັລລ໋ອ໋ເຖີດ, ຂ້າໃຊ້ຂອງທ່ານຜູ້ນີ້ກຳລັງຢືນຢູ່, ຢູ່ທີ່ປະຕູຂອງທ່ານກຳກຳລັງອາໄສເພິ່ງພາ, ແລະ ຢ້ານກົວຕໍ່ຄວາມບົກພ່ອງຂອງຕົນເອງ, ໂປດຊ່ວຍເຫຼືອພວກເຮົາດ້ວຍເຖີດ ໂອ້ທ່ານຄໍຊ໌ລຸລລ໋ອ໋, ແລະ ຜູ້ຂ້າບໍ່ມີຜູ້ໃດທີ່ຈະໄປຫາອີກແລ້ວນອກຈາກພວກທ່ານ, ແລະ ຈາກພວກທ່ານເທົ່ານັ້ນທີ່ຈະໄດ້ຮັບສິ່ງທີ່ປາຖະຫນາ, ແລະ ພວກທ່ານຄືຄົນຂອງອັລລ໋ອ໋ (ຜູ້ທີ່ໃກ້ຊິດກັບພຣະອົງ), ດ້ວຍສິດທິຂອງທ່ານຮຳຊະ໋ ຜູ້ເປັນນາຍແຫ່ງບັນດາຊົນຊະດາ (ຜູ້ເສຍສະຫຼະຊີວິດໃນຫນທາງຂອງສາສະຫນາ), ແລະ ດ້ວຍທຸກຄົນໃນໝູ່ພວກທ່ານທີ່ເປັນຜູ້ໃຫ້ການຊ່ວຍເຫຼືອພວກເຮົາ, ໂປດຊ່ວຍເຫຼືອພວກເຮົາດ້ວຍເຖີດ ໂອ້ທ່ານຄໍຊ໌ລຸລລ໋ອ໋. ແລະ ດັ່ງຄຳກ່າວຂອງພວກເຂົາທີ່ວ່າ: ໂອ້ ອັລລ໋ຮ໌ ໄດ້ໂປດເມດຕາຜູ້ທີ່ພຣະອົງໄດ້ບັນດານໃຫ້ເປັນສາເຫດໃນການເປີດເຜີຍຄວາມລັບແຫ່ງລິດອຳນາດຂອງພຣະອົງ ແລະ ເປັນການແຜ່ກະຈາຍແສງສະຫວ່າງແຫ່ງຄວາມເມດຕາຂອງພຣະອົງ, ດັ່ງນັ້ນ ທ່ານຈົ່ງກາຍເປັນຜູ້ຕາງໜ້າແຫ່ງອົງພຣະຜູ້ເປັນເຈົ້າ ແລະ ເປັນຜູ້ສືບທອດຄວາມລັບທີ່ກ່ຽວຂ້ອງກັບແກ່ນແທ້ຂອງພຣະອົງ.

ແລະ ຄວາມຕ້ອງການຂອງພວກທ່ານໃນການຊີ້ແຈງວ່າສິ່ງໃດຄືບິດອະຫ໌, ສິ່ງໃດຄືການຕັ້ງພາຄີ, ແລະ ການລະຫມາດຕາມຫຼ້າອີມ່າມຜູ້ທີ່ຂໍດຸອາບົດນີ້ຈະໃຊ້ໄດ້ຫຼືບໍ່, ທັງໝົດນັ້ນແມ່ນເປັນທີ່ຮັບຊາບແລ້ວ?

ຄຳຕອບຄື: ມອບການສັນລະເສີນເປັນສິດພຽງພຣະອົງດຽວ, ແລະ ຂໍອວຍພອນຄວາມສັນຕິສຸກແກ່ທ່ານຜູ້ທີ່ເປັນນະບີ

ສຸດທ້າຍ ບໍ່ມີຜູ້ໃດຈະມາຕໍ່ຫຼັງຈາກທ່ານ ແລະ ຄອບຄົວຂອງທ່ານ ແລະ ບັນດາສາວົກສະຫາຍຂອງທ່ານ, ແລະ ບັນດາຜູ້ທີ່ດຳເນີນຕາມແນວທາງຂອງທ່ານຈົນເຖິງວັນແຫ່ງການຕອບແທນ.

ຈົ່ງຮູ້ເຖີດ - ຂໍອັລລໍຮ໌ຊົງປະທານຄວາມສຳເລັດແກ່ທ່ານ - ວ່າ ອັລລໍຮ໌ ໄດ້ຊົງສ້າງສັບພະສິ່ງທັງຫຼາຍ ແລະ ໄດ້ສົ່ງບັນດາສາດສະດາທູດຂອງພຣະອົງ (ຂໍຄວາມສັນຕິສຸກຈົ່ງມີແດ່ພວກເພິ່ນ) ເພື່ອໃຫ້ມີການເຄົາລົບພັກດີຕໍ່ພຣະອົງພຽງຜູ້ດຽວ ໂດຍບໍ່ມີສິ່ງໃດເປັນພາຄີຮ່ວມກັບພຣະອົງ, ດັ່ງທີ່ພະອົງຊົງກ່າວວ່າ:

﴿وَمَا خَلَقْتُ الْجِنَّ وَالْإِنْسَ إِلَّا لِيَعْبُدُونِ﴿٥٦﴾﴾

(ແລະ ຂ້າບໍ່ໄດ້ສ້າງຈິນ(ຜີ) ແລະ ມະນຸດ ມາເພື່ອຈຸດປະສົງອື່ນໃດ ເວັ້ນແຕ່ເພື່ອການໃຫ້ເຄົາລົບພັກດີຕໍ່ຂ້າ)

[ຊູເຣາະຫ໌ ອັຊສາຣິຍາ ๓ : 56].

ແລະ ການອິບາດະຫ໌ -ດັ່ງທີ່ໄດ້ຊີ້ແຈງມາກ່ອນແລ້ວ- ຄື: ການເຊື່ອຟັງຕໍ່ອັລລໍຮ໌ ແລະ ຕໍ່ຣໍຊູລຂອງພຣະອົງ ﷺ; ໂດຍການປະຕິບັດຕາມສິ່ງທີ່ອັລລໍຮ໌ ແລະ ຣໍຊູລຂອງພຣະອົງໄດ້ບັນຊາ, ແລະ ລະເວັ້ນຈາກສິ່ງທີ່ອັລລໍຮ໌ ແລະ ຣໍຊູລຂອງພຣະອົງໄດ້ຊົງຫ້າມ, ອັນເກີດຈາກການສັດທາຕໍ່ອັລລໍຮ໌ ແລະ ຣໍຊູລຂອງພຣະອົງ, ແລະ ຄວາມບໍລິສຸດໃຈໃນການງານເພື່ອອັລລໍຮ໌, ພ້ອມດ້ວຍຄວາມຮັກອັນສູງສຸດຕໍ່ອັລລໍຮ໌, ແລະ ຄວາມນອບນ້ອມຖ່ອມຕົນຢ່າງສົມບູນຕໍ່ພຣະອົງພຽງຜູ້ດຽວເທົ່ານັ້ນ; ດັ່ງພຣະດຳລັດຂອງອັລລໍຮ໌ທີ່ວ່າ:

﴿وَقَضَى رَبُّكَ أَلَّا تَعْبُدُوا إِلَّا إِيَّاهُ...﴾

(ແລະ ພຣະເຈົ້າຂອງເຈົ້າບັນຊາວ່າ ພວກເຈົ້າຢ່າເຄົາລົບພັ

ກດີຜູ້ໃດນອກຈາກພຣະອົງເທົ່ານັ້ນ...) [ສູເຣາະຫ໌ ອິສຣ: 23] ຄື: ໄດ້ຊົງບັນຊາ ແລະ ຊົງກ່າຊັບໄວ້ວ່າ ໃຫ້ເຄົາລົບພັກດີຕ່ພຣະ ອົງພຽງອົງດຽວ, ແລະ ພຣະຜູ້ຊົງສູ່ງສົງໄດ້ຕຣັດວ່າ:

﴿الْحَمْدُ لِلَّهِ رَبِّ الْعَالَمِينَ ۝١ الرَّحْمَٰنِ الرَّحِيمِ ۝٢ مَالِكِ يَوْمِ الدِّينِ ۝٣ إِيَّاكَ نَعْبُدُ وَإِيَّاكَ نَسْتَعِينُ ۝٤﴾

2. (ການສັນລະເສີນທັ້ງໝົດທັ້ງມວນ ເປັນສິດທິຂອງອັລ ລໍຫ໌ ພຣະເຈົ້າແຫ່ງຈັກກະວານໂລກ)

3. (ຜູ້ຊົງກະລຸນາປຣາຫນີ ຜູ້ຊົງເມດຕາສະເໝີ)

4. (ຜູ້ຊົງເປັນເຈົ້າຂອງແຫ່ງວັນຕອບແທນ)

(ສະເພາະພຣະອົງເທົ່ານັ້ນທີ່ເຮົາສັກກາລະພັກດີ, ແລະ ສະ ເພາະພຣະອົງເທົ່ານັ້ນທີ່ເຮົາຂໍຄວາມຊ່ວຍເຫລືອ) [ສູເຣາະຫ໌ ອັ ລ-ຟາຕິຮະຫ໌ : 2-5], ດັ່ງນັ້ນ, ອັລລໍຫ໌ ຜູ້ຊົງສູງສົ່ງ ໄດ້ຊີ້ແຈງໃນ ບັນດາອາຍາຕເຫຼ່ານີ້ວ່າ: ພຣະອົງຄືຜູ້ທີ່ສົມຄວນຖືກເຄົາລົບ ບູຊາພຽງອົງດຽວ, ແລະ ຖືກຂໍຄວາມຊ່ວຍເຫຼືອຈາກພຣະອົງພ ຽງອົງດຽວ. ແລະ ພຣະອົງ ໄດ້ຕຣັດວ່າ:

﴿إِنَّآ أَنزَلۡنَآ إِلَيۡكَ ٱلۡكِتَٰبَ بِٱلۡحَقِّ فَٱعۡبُدِ ٱللَّهَ مُخۡلِصٗا لَّهُ ٱلدِّينَ ۝٢ أَلَا لِلَّهِ ٱلدِّينُ ٱلۡخَالِصُ...﴾

(ແທ້ຈິງ ເຮົາໄດ້ປະທານຄຳພີແກ່ເຈົ້າ ດ້ວຍຄວາມຈິງ, ດັ່ງ ນັ້ນ ເຈົ້າຈົ່ງເຄົາລົບພັກດີຕ່ອັລລໍຫ໌ ໂດຍເປັນຜູ້ຖະວາຍການເ ຄົາລົບຢ່າງບໍລິສຸດແດ່ພຣະອົງ (ພຽງອົງດຽວເທົ່ານັ້ນ))

ຈົ່ງຮູ້ໄວ້ເຖີດວ່າ ສຳຫຼັບອັລລໍຫ໌ແລ້ວ (ບໍ່ມີພາຄີໃດ ໆ ອີກນ ອກຈາກ) ການເຄົາລົບພັກດີທີ່ຜ່ອງແຜ້ວບໍລິສຸດ)

(ອັຊ-ຊຸມັຣ : 2-3), ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿فَادْعُوا اللَّهَ مُخْلِصِينَ لَهُ الدِّينَ وَلَوْ كَرِهَ الْكَافِرُونَ﴿١٤﴾﴾

(ດັ່ງນັ້ນພວກເຈົ້າຈົ່ງວິງວອນຕໍ່ອັລລໍຮ໌ ໂດຍເປັນຜູ້ຖະອາ ຍການເຄົາລົບພັກດີຢ່າງບໍລິສຸດໃຈແດ່ພຣະອົງເທົ່ານັ້ນ ເຖິງແ ມ້ວ່າພວກປະຕິເສດສັດທາຈະກຽດຊັງກໍຕາມ) (ກໍຝິຣ : 14). ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿وَأَنَّ الْمَسَاجِدَ لِلَّهِ فَلَا تَدْعُوا مَعَ اللَّهِ أَحَدًا﴿١٨﴾﴾

(ແລະ ວ່າແທ້ຈິງບັນດາມັສຍິດນັ້ນເປັນຂອງອັລລໍຮ໌ ດັ່ງນັ້ນ ພວກເຈົ້າຢ່າໄດ້ວິງວອນຂໍຜູ້ໃດຄຽງຄູ່ກັບອັລລໍຮ໌) [ຊູເຣາະ ຫ໌ ອັລ-ຈິນ : 18], ແລະ ໂອງການຕ່າງ ໆ ທີ່ມີຄວາມໝາຍທຳນ ອງນີ້ມີຢູ່ຫຼວງຫຼາຍ ແລະ ລ້ວນແລ້ວແຕ່ບົ່ງຊີ້ເຖິງຄວາມຈຳເປັ ນທີ່ຕ້ອງມອບການເຄົາລົບພັກດີຕໍ່ອັລລໍຮ໌ພຽງອົງດຽວເທົ່ານັ້ ນ.

ແລະ ເປັນທີ່ຮູ້ກັນດີວ່າ ການດຸອາໃນທຸກໆ ປະເພດຂອງມັນ ນັ້ນແມ່ນສ່ວນໜຶ່ງຂອງການອິບາດະຫ໌, ດັ່ງນັ້ນ ຈຶ່ງບໍ່ອະນຸຍາ ດໃຫ້ຜູ້ໃດຈາກມະນຸດ ຈະວິງວອນ, ຂໍຄວາມຊ່ວຍເຫຼືອ ຫຼື ຂໍຄວ າມກູ້ໄພ ຈາກສິ່ງອື່ນໃດນອກຈາກພຣະຜູ້ເປັນເຈົ້າຂອງຕົນເທ່ ານັ້ນ, ເພື່ອເປັນການປະຕິບັດຕາມບັນດາອາຍັດອັນມີກຽດເຫຼ່ ານີ້ ແລະ ສິ່ງທີ່ມີຄວາມໝາຍໃນທຳນອງດຽວກັນ. ນີ້ແມ່ນນອ ກເໜືອໄປຈາກເລື່ອງທຳມະດາທົ່ວໄປ ແລະ ສາເຫດທີ່ສາມາດ ສຳຜັດໄດ້ ທີ່ສິ່ງຖືກສ້າງທີ່ມີຊີວິດ ແລະ ຢູ່ຕໍ່ໜ້າສາມາດກະທຳ ໄດ້, ເພາະສິ່ງເຫຼ່ານັ້ນບໍ່ໄດ້ຖືກນັບວ່າເປັນການເຄົາລົບບູຊາ, ແ ຕ່ເປັນທີ່ອະນຸຍາດຕາມຫຼັກຖານ ແລະ ມະຕິເອກະສັນ ທີ່ມະນຸ ດຈະຂໍຄວາມຊ່ວຍເຫລືອຈາກມະນຸດດ້ວຍກັນທີ່ມີຊີວິດ ແລະ ມີຄວາມສາມາດ ໃນເລື່ອງທຳມະດາທີ່ເຂົາສາມາດເຮັດໄດ້; ເຊ່ ັ

ນ: ການຂໍຄວາມຊ່ວຍເຫລືອຈາກເຂົາໃນການປ້ອງກັນຄວາມຊົ່ວຮ້າຍຈາກລູກຂອງລາວ, ຄົນຮັບໃຊ້ຂອງລາວ ຫຼື ໝາຂອງລາວ ແລະ ສິ່ງທີ່ຄ້າຍຄືກັນນັ້ນ, ດັ່ງເຊັ່ນ ການທີ່ມະນຸດຂໍຄວາມຊ່ວຍເຫຼືອຈາກມະນຸດດ້ວຍກັນທີ່ຍັງມີຊີວິດຢູ່, ຢູ່ຕໍ່ໜ້າ ແລະ ມີຄວາມສາມາດ, ຫຼື ຜູ້ທີ່ບໍ່ໄດ້ຢູ່ຕໍ່ໜ້າ, ໂດຍຜ່ານຊ່ອງທາງທີ່ເປັນຮູບປະທຳ ເຊັ່ນ ການຂຽນຈົດໝາຍຕິດຕໍ່ກັນ ແລະ ອື່ນໆ, ໃນການສ້າງເຮືອນຂອງລາວ, ຫຼື ການສ້ອມແປງລົດຂອງລາວ, ຫຼື ກໍລະນີອື່ນ ໆ ທີ່ຄ້າຍຄືກັນນັ້ນ, ສ່ວນໜຶ່ງໃນນັ້ນຄື: ການທີ່ມະນຸດອ້ອນຂໍຄວາມຊ່ວຍເຫຼືອຈາກສະຫາຍຂອງລາວ ໃນການຕໍ່ສູ້ຍິຮາດ ແລະ ສົງຄາມ, ແລະ ອື່ນໆໃນທຳນອງດຽວກັນ. ແລະ ຈາກປະເດັນນີ້ ຄືດຳລັດຂອງອັລລໍຮ໌ ຜູ້ຊົງສູງສົ່ງ ໃນເລື່ອງລາວຂອງທ່ານນະບີມູຊາ ອະໄລຮິສ ຊ່ລາຕຸ ວັສສະລາມ ທີ່ວ່າ:

﴿...فَٱسۡتَغَٰثَهُ ٱلَّذِي مِن شِيعَتِهِۦ عَلَى ٱلَّذِي مِنۡ عَدُوِّهِۦ...﴾

(...ດັ່ງນັ້ນ ຜູ້ທີ່ຢູ່ຝ່າຍລາວຈຶ່ງໄດ້ຂໍຄວາມຊ່ວຍເຫລືອຈາກລາວ ເພື່ອຕ້ານກັບຜູ້ທີ່ຢູ່ຝ່າຍສັດຕູຂອງລາວ...)

[ສຸເຣາະຫ໌ ອັລກໍສັສ : 15].

ສ່ວນການຂໍຄວາມຊ່ວຍເຫລືອຈາກຄົນຕາຍ, ຈິນ ແລະ ມະລາອິກະຫ໌, ກົ້ກໄມ້ ແລະ ຫີນນັ້ນ: ຖືເປັນຊີຣິກໃຫຍ່, ແລະ ມັນເປັນການກະທຳປະເພດດຽວກັນກັບທີ່ບັນດາຜູ້ຕັ້ງພາຄີໃນຍຸກກ່ອນໄດ້ກະທຳກັບພະເຈົ້າຂອງພວກເຂົາ; ເຊັ່ນ ອັລ-ອຸຊຊາ ແລະ ອັລ-ລາຕ ແລະອື່ນໆ. ແລະ ເຊັ່ນດຽວກັນ, ການຂໍຄວາມຊ່ວຍເຫລືອຈາກຄົນທີ່ຍັງມີຊີວິດຢູ່ ທີ່ຖືກເຊື່ອວ່າເປັນອະວີ ໃນສິ່ງທີ່ບໍ່ມີໃຜສາມາດເຮັດໄດ້ນອກຈາກອັລລໍຮ໌; ເຊັ່ນ ການເຮັດໃຫ້ຄົນປ່ວຍຫາຍດີ, ການຊີ້ນຳຫົວໃຈ, ການເຂົ້າສະຫວັນ, ແລະ ກ

ານລອດພົ້ນຈາກໄຟນະລົກ, ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນນີ້.

ບັນດາອາຍາຕທີ່ໄດ້ກ່າວມາແລ້ວ ແລະ ທີ່ມີຄວາມໝາຍ ທຳນອງດຽວກັນຈາກບັນດາອາຍາຕ ແລະ ຫະດີສຕ່າງໆ: ລ້ວນ ແລ້ວແຕ່ບົ່ງຊີ້ເຖິງຄວາມຈຳເປັນທີ່ຕ້ອງມຸ້ງຈິດໃຈໄປຫາອັລລໍ ຫ໌ໃນທຸກໆເລື່ອງ ແລະ ມອບການຄົ້ງລົບພັກດີຕໍ່ພຣະອົງພຽງ ອົງດຽວເທົ່ານັ້ນ; ເພາະວ່າເຫຼົ່າບ່າວໄດ້ຖືກສ້າງຂຶ້ນມາເພື່ອຈຸດ ປະສົງນັ້ນ ແລະ ກໍໄດ້ຖືກບັນຊາດ້ວຍສິ່ງນັ້ນ -ດັ່ງທີ່ໄດ້ກ່າວໄວ້ໃ ນບັນດາອາຍາຕ- ແລະ ດັ່ງທີ່ພຣະອົງຊົງກ່າວວ່າ:

﴿وَاعْبُدُوا اللَّهَ وَلَا تُشْرِكُوا بِهِ شَيْئًا...﴾

(ແລະ ຈົ່ງເຄົ້າລົບພັກດີຕໍ່ອັລລໍຫ໌ ແລະ ຢ່າໄດ້ນຳສິ່ງໃດຂຶ້ນ ມາເປັນພາຄີຮ່ວມກັບພຣະອົງ...) [ສູເຣາະຫ໌ ນິຊາ: 36] ແລະ ໃ ນໂອງການຂອງອັລລໍຫ໌ໄດ້ກ່າວວ່າ:

﴿وَمَا أُمِرُوا إِلَّا لِيَعْبُدُوا اللَّهَ مُخْلِصِينَ لَهُ الدِّينَ...﴾

(ແລະ ພວກເຂົາບໍ່ໄດ້ຖືກບັນຊາໃຫ້ກະທຳອື່ນໃດ ນອກຈາ ກເພື່ອເຄົ້າລົບພັກດີຕໍ່ອັລລໍຫ໌ ເປັນຜູ້ມີເຈດຕະນາບໍລິສຸດໃນ ການພັກດີຕໍ່ພຣະອົງ...) [ສູເຣາະຫ໌ ອັລໄບຢິນະຫ໌ : 5], ແລະ ດັ ່ງທີ່ທ່ານນະບີ ຊ໋ອລລັລລ໋ອຸ ອະໄລຮິ ອະສັລລຳ ໄດ້ກ່າວໄວ້ໃນຫະດີ ຊ໋ຂອງທ່ານມຸອາຊ ຣ໋ດີຍັລລ໋ອຸ ອັນຮຸ ວ່າ:

«حَقُّ اللهِ عَلَى العِبَادِ أَنْ يَعْبُدُوهُ وَلَا يُشْرِكُوا بِهِ شَيْئًا».

''ສິດທິຂອງອັລລໍຫ໌ອັນພົ້ງມີຕໍ່ປວງບ່າວກໍ່ຄື ການທີ່ເຂົາ ເຫຼົ່ານັ້ນຕ້ອງເຄົ້າລົບພັກດີຕໍ່ພຣະອົງ ແລະ ບໍ່ນຳສິ່ງໃດຂຶ້ນມາ ເປັນພາຄີ (ການໃຫວ້) ຮ່ວມກັບພຣະອົງ''. ລາຍງານໂດຍທ່ານ ບຸກ໋ອ໌ຣີ ແລະ ທ່ານມຸສລິມ. ດັ່ງທີ່ທ່ານນະບີ ຊ໋ອລລັລລ໋ອຸ ອະໄລຮິ

ອະສັວລ່າ ໄດ້ກ່າວໄວ້ໃນຫະດີຊລາຍງານຈາກ ອິບນຸ ມັສອູດ ຣ໌ດ ຍັລລ໌ຮຸ ອັນຮຸ ວ່າ:

«مَنْ مَاتَ وَهُوَ يَدْعُو لِلَّهِ نِدًّا؛ دَخَلَ النَّارَ».

"ຜູ້ໃດຕາຍໃນສະພາບທີ່ເຂົາວິງວອນຕໍ່ຜູ້ອື່ນເທົ່າທຽມກັບອັລລ໌ຫ໌ ເຂົາຕ້ອງຕົກນະລົກ" ບັນທຶກໂດຍ ອັລ-ບຸກ່ອ໌ຣີ. ແລະ ໃນບັນທຶກຂອງທ່ານອີຫມ່ານທັ້ງສອງ ຈາກລາຍງານຫະດີຊຂອງທ່ານອິບນ ອັບບາສ ຣ໌ດຍັລລ໌ຮຸອັນຮຸມາ ແທ້ຈິງທ່ານນະບີ ﷺ ເມື່ອຕອນທີ່ໄດ້ສົ່ງທ່ານມຸອາຊໄປຍັງເຢແມນ, ໄດ້ກ່າວແກ່ລາວວ່າ:

«إِنَّكَ تَأْتِي قَومًا أَهْلَ كِتَابٍ، فَلْيَكُنْ أَوَّلَ مَا تَدْعُوهُم إِلَيهِ شَهَادَةِ أَنْ لَا إِلهَ إِلَّا اللهُ».

«ແທ້ຈິງ ທ່ານກຳລັງຈະໄປຫາຊົນຊາດໜຶ່ງທີ່ເປັນຊາວຄຳພີ, ດັ່ງນັ້ນ ຈົ່ງໃຫ້ສິ່ງທຳອິດທີ່ທ່ານເຊີນຊວນພວກເຂົາໄປສູ່ນັ້ນ ແມ່ນການປະຕິຍານຕົນວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລ໌ຫ໌». ແລະ ໃນລາຍງານຫະດີຊບົດ:

«اُدْعُهُمْ إِلَى شَهَادَةِ أَنْ لَا إِلهَ إِلَّا اللهُ وَأَنِّي رَسُولُ اللهِ».

«ຈົ່ງເຊີນຊວນພວກເຂົາສູ່ການກ່າວປະຕິຍານຕົນວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລ໌ຫ໌ ແລະ ຂ້ອຍເປັນຣ໌ສູລຂອງອັລລ໌ຫ໌» ແລະ ໃນລາຍງານໜຶ່ງຂອງອັລ-ບຸກ່ອ໌ຣີ:

«فَلْيَكُنْ أَوَّلَ مَا تَدْعُوهُم إِلَى أَنْ يُوَحِّدُوا اللهَ».

«ດັ່ງນັ້ນ ສິ່ງທຳອິດທີ່ທ່ານຈະຕ້ອງເຊີນຊວນພວກເຂົາໄປສູ່ນັ້ນ ຄືການໃຫ້ເອກະພາບແກ່ອັລລ໌ຫ໌» ໃນຕຳລາຫະດີຊ ສ໌ເຮັຍຫ໌ຂອງມຸສລິມເຊິ່ງເປັນລາຍງານຈາກທ່ານຕໍຣິກ ບິນ ອັຊຍັ

ມ ອັລ-ອັຊຈະອີ ຣ໌ດີຍັລລ໌ລ໌ ອັນຮຸ ມິວ່າ ທ່ານນະບີ ﷺ ກ່າວວ່າ:

«مَنْ قَالَ: لَا إِلَهَ إِلَّا اللهُ، وَكَفَرَ بِمَا يُعْبَدُ مِن دُونِ اللهِ؛ حَرُمَ مَالُهُ وَدَمُهُ، وَحِسَابُهُ عَلَى اللهِ جَلَّ جَلَالُهُ».

“ຜູ້ໃດທີ່ກ່າວວ່າ: ລາອິລາຮະ ອິລລັລລ໌ຮ໌, ແລະ ໄດ້ປະຕິເສດ ທຸກສັບພະສິ່ງທີ່ຖືກເຄົາລົບສັກການະອື່ນຈາກອັລລ໌ຮ໌; ຊັບສົມບັດ ແລະ ເລືອດເນື້ອຂອງລາວກໍເປັນທີ່ຕ້ອງຫ້າມ, ແລະ ການ ຊຳລະບັນຊີຂອງລາວກໍເປັນໜ້າທີ່ຂອງອັລລ໌ຮ໌ ຜູ້ຊົງຍິ່ງໃຫຍ່.” ແລະ ຫະດີຊ່ວາງ ໆ ທີ່ມີຄວາມໝາຍທຳນອງນີ້ມີຢູ່ຫຼວງຫລາຍ.

ແລະ ເຕົາຮີດນີ້ຄືຮາກເຫງົ້າຂອງສາສະໜາອິສລາມ, ເປັນພື້ນຖານຂອງສາສະໜາ, ເປັນແກ່ນສານຂອງເລື່ອງທັງປວງ ແລະ ເປັນພັນທະກິດທີ່ສຳຄັນທີ່ສຸດ, ພ້ອມທັງເປັນວິທະຍາປັນຍາໃນການສ້າງມະນຸດ ແລະ ຈິນ, ແລະ ໃນການສົ່ງບັນດາສາສະນະທູດທັງໝົດ, ດັ່ງທີ່ບັນດາອາຍະກ່ອນໜ້ານີ້ໄດ້ຊີ້ແຈງໄວ້, ເຊິ່ງໜຶ່ງໃນນັ້ນກໍຄືຄຳດຳລັດຂອງພຣະອົງ ຜູ້ຊົງມະຫາບໍລິສຸດ ທີ່ວ່າ:

﴿وَمَا خَلَقْتُ الْجِنَّ وَالْإِنْسَ إِلَّا لِيَعْبُدُونِ ﴿٥٦﴾﴾

(ແລະ ຂ້າບໍ່ໄດ້ສ້າງຈິນ(ຜີ) ແລະ ມະນຸດ ມາເພື່ອຈຸດປະສົງອື່ນໃດ ເວັ້ນແຕ່ການກາບໄຫວ້ເຄົາລົບພັກດີຕໍ່ຂ້າ) [ຊູເຣາະຫ໌ ອັຊສາຣິຍາຕ : 56], ແລະ ຈາກຫຼັກຖານດັ່ງກ່າວອີກປະການໜຶ່ງຄື: ຄຳກ່າວຂອງພຣະອົງຜູ້ຊົງສູງສົ່ງ:

﴿وَلَقَدْ بَعَثْنَا فِي كُلِّ أُمَّةٍ رَسُولًا أَنِ اعْبُدُوا اللَّهَ وَاجْتَنِبُوا الطَّاغُوتَ...﴾

(ແລະໂດຍແນ່ນອນ ເຮົາໄດ້ແຕ່ຕັ້ງຣ໌ຊູລມາໃປຍັງແຕ່ລະ

ປະຊາຊາດ (ໂດຍຮໍຊຸລວະກ່າວແກ່ປະຊາຊາດນັ້ນ ໆ ວ່າ) ພວກທ່ານຈົ່ງເຄົາລົບພັກດີຕໍ່ອັລລ໋ໍ ແລະ ຈົ່ງຫຼີກຫນີ ອອກຫ່າງຈາກພວກຕໍ່ກຼດຮູບປັ້ນ(ຈະເວ້ົ)...) (ອັນ-ນະຫ໌ລ : 36), ແລະ ດໍາລັດຂອງພຣະອົງ ຜູ້ຊົງມະຫາບໍລິສຸດ ແລະ ສູງສົ່ງ ທີ່ວ່າ:

﴿وَمَا أَرْسَلْنَا مِنْ قَبْلِكَ مِنْ رَسُولٍ إِلَّا نُوحِي إِلَيْهِ أَنَّهُ لَا إِلَهَ إِلَّا أَنَا فَاعْبُدُونِ﴾

(ແລະ ເຮົາບໍ່ໄດ້ສົ່ງຮໍຊຸລຄົນໃດມາກ່ອນຫນ້າເຈົ້າ ຍົກເວັ້ນແຕ່ເຮົາໄດ້ວະຮີໃຫ້ແກ່ເຂົາວ່າ ແທ້ຈິງ ບໍ່ມີພຣະເຈົ້າອື່ນໃດທີ່ແທ້ຈິງນອກຈາກຂ້າ ດັ່ງນັ້ນພວກເຈົ້າຈົ່ງເຄົາລົບພັກດີຕໍ່ຂ້າ) [ອັລ-ອໍາບີຍາ : 25] ຊົງດໍາລັດກ່ຽວກັບບັນດານາບີ ນູຫ໌, ຮູດ, ຊໍລິຫ໌ ແລະ ອຼໄອບ໌ ອາໂລຣິ ມຸສສະລາມ, ເຊິ່ງພວກເພິ່ນໄດ້ກ່າວແກ່ປະຊາຊາດຂອງພວກເພິ່ນວ່າ:

﴿...اعْبُدُوا اللَّهَ مَا لَكُمْ مِنْ إِلَهٍ غَيْرُهُ...﴾

(...ຈົ່ງເຄົາລົບພັກດີຕໍ່ອັລລ໋ໍເຖ ບໍ່ມີຜູ້ຄູ່ຄອນໄດ້ຮັບການເຄົາລົບອື່ນໃດນອກຈາກພຣະອົງ...) [ອຼເຣາະຫ໌ ອັລ-ອະຣໍຟ : 59], ແລະ ນີ້ຄືການເຊີນຊວນຂອງບັນດາສາສະນະທູດທັງໝົດ, ດັ່ງທີ່ສອງອາຍະຫ໌ກ່ອນຫນ້ານີ້ໄດ້ຊີ້ບອກໄວ້, ແລະ ແມ້ແຕ່ບັນດາສັດຕູຂອງສາສະນະທູດກໍໄດ້ຍອມຮັບວ່າ ບັນດາສາສະນະທູດໄດ້ສັ່ງໃຊ້ພວກເຂົາໃຫ້ເອກະພາບແກ່ອັລລ໋ໍໃນການເຄົາລົບບູຊາ ແລະ ໃຫ້ລະຖິ້ມບັນດາສິ່ງທີ່ຖືກກຣາບໄຫວ້ອື່ນໆນອກເໜືອຈາກພຣະອົງ, ດັ່ງທີ່ອັລລ໋ໍ ໄດ້ດໍາລັດໄວ້ໃນເລື່ອງລາວຂອງຊົນຊາດອາດ, ວ່າພວກເຂົາໄດ້ກ່າວຕໍ່ນະບີຮູດ ວ່າ:

﴿...أَجِئْتَنَا لِنَعْبُدَ اللَّهَ وَحْدَهُ وَنَذَرَ مَا كَانَ يَعْبُدُ آبَاؤُنَا...﴾

(...ເພື່ອໃຫ້ພວກເຮົາເຄົາລົບພັກດີຕໍ່ອັລລ໋ໍພຽງອົງດຽວ

ແລະ ປະລະສິ່ງທີ່ບັນພະບຸລຸດຂອງພວກເຮົາເຄີຍເຄົາລົບພັກດີ ...) [ສູເຣາະຫ໌ ອັລ-ອະຣ໌ອ : 70], ແລະ ພຣະອົງອັລລ໋ອ ຜູ້ຊົງສູງສົ່ງ ໄດ້ກ່າວກ່ຽວກັບຊາວກຸເຣຊ໋ ເມື່ອທ່ານນະບີມຸຮຳມັດ ﷺ ຂອງພວກເຮົາໄດ້ເຊີນຊວນພວກເຂົາໄປສູ່ການອຸທິດການເຄົາລົບພັກດີຕໍ່ອັລລ໋ອ ພຽງພຣະອົງດຽວ, ແລະໃຫ້ລະຖິ້ມສິ່ງທີ່ພວກເຂົາເຄົາລົບພັກດີອື່ນຈາກພຣະອົງ ເຊັ່ນ ບັນດາມະລາອິກະຫ໌, ບັນດາອະລີຢ໌, ບັນດາຮູບປັ້ນ, ບັນດາຕົ້ນໄມ້, ແລະອື່ນໆ ຈາກນັ້ນ:

﴿أَجَعَلَ الْآلِهَةَ إِلَٰهًا وَاحِدًا إِنَّ هَٰذَا لَشَيْءٌ عُجَابٌ ۝٥﴾

(ຄົນປະຕິເສດຫລໍ່ານັ້ນກ່າວວ່າ) ເຂົາ (ມຸຮຳມັດ) ໄດ້ເຮັດໃຫ້ພຣະເຈົ້າຫຼາຍອົງເປັນພຣະເຈົ້າອົງດຽວແນວນັ້ນບໍ? ແທ້ຈິງນີ້ເປັນສິ່ງທີ່ແປກປະຫຼາດແທ້ ໆ) (ສອດ : 5). ແລະ ອັລລ໋ອ ຜູ້ຊົງສູງສົ່ງ ໄດ້ຕຣັດກ່ຽວກັບພວກເຂົາວ່າ:

﴿إِنَّهُمْ كَانُوا إِذَا قِيلَ لَهُمْ لَا إِلَٰهَ إِلَّا اللَّهُ يَسْتَكْبِرُونَ ۝٣٥ وَيَقُولُونَ أَئِنَّا لَتَارِكُوا آلِهَتِنَا لِشَاعِرٍ مَّجْنُونٍ ۝٣٦﴾

(ແທ້ຈິງພວກເຂົາ ເມື່ອໄດ້ຖືກກ່າວແກ່ພວກເຂົາວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລ໋ອ ພວກເຂົາກໍສະແດງຄວາມເຍີ່ຍຍໍ່ງ)

(ແລະພວກເຂົາກ່າວວ່າ ແທ້ຈິງພວກເຮົາຈະລະທິ້ງບັນດາພະເຈົ້າຂອງພວກເຮົາ ເພາະນັກກະວີຄົນບ້າຄົນໜຶ່ງດອກຫລື) [ສູເຣາະຫ໌ ສ໌ຟຟາດ : 35- 36], ແລະໂອງການຕ່າງ ໆ ທີ່ມີຄວາມໝາຍທຳນອງນີ້ກໍມີຢູ່ຫຼວງຫຼາຍ.

ຈາກສິ່ງທີ່ພວກເຮົາໄດ້ກ່າວມາຂ້າງຕົ້ນ ຈາກບັນດາອາຍາ

ຕ ແລະ ຫະດີສ: ເຮັດໃຫ້ທ່ານເຫັນໄດ້ຢ່າງແຈ່ມແຈ້ງວ່າ - ຂໍອັລ ລໍຫ໌ຊົງໂປດປະທານຄວາມສຳເລັດໃຫ້ແກ່ຂ້າພະເຈົ້າ ແລະ ທ່ານ ໃນການທຳຄວາມເຂົ້າໃຈສາສະໜາ ແລະ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງໃນສິດທິຂອງພຣະຜູ້ອະພິບານແຫ່ງສາກົນໂລກ - ການວິງວອນຂໍ ແລະ ການຂໍຄວາມຊ່ວຍເຫລືອໃນຮູບແບບຕ່າງໆເຫຼົ່ານີ້ - ທີ່ທ່ານໄດ້ຊີ້ແຈງໄວ້ໃນຄຳຖາມຂອງທ່ານ - ທັງໝົດລ້ວນເປັນຮູບແບບໜຶ່ງຂອງຊີຣິກໃຫຍ່; ເພາະມັນເປັນການເຄົາລົບບູຊາຕໍ່ສິ່ງອື່ນນອກເໜືອຈາກອັລລໍຫ໌, ແລະ ເປັນການຮຽກຮ້ອງຂໍໃນສິ່ງທີ່ບໍ່ມີຜູ້ໃດມີຄວາມສາມາດໃຫ້ໄດ້ນອກເໜືອຈາກພຣະອົງ, ຈາກຄົນຕາຍ ແລະ ບັນດາຜູ້ທີ່ຫ່າງໄກ, ແລະ ການກະທຳດັ່ງກ່າວນີ້ຖືວ່າຮ້າຍແຮງກວ່າການຕັ້ງພາຄີຂອງຄົນໃນຍຸກກ່ອນໆ; ເພາະວ່າຄົນໃນຍຸກກ່ອນນັ້ນ ພວກເຂົາຈະຕັ້ງພາຄີກໍຕໍ່ເມື່ອໃນຍາມທີ່ພວກເຂົາສຸກສະບາຍເທົ່ານັ້ນ. ສ່ວນວ່າໃນສະຖານະການທີ່ຫຍຸ້ງຍາກລຳບາກ, ພວກເຂົາກໍຈະບໍລິສຸດໃຈໃນການເຄົາລົບພັກດີຕໍ່ອັລລໍຫ໌; ເພາະວ່າພວກເຂົາຮູ້ດີວ່າ ພຣະອົງເທົ່ານັ້ນທີ່ຊົງສາມາດຊ່ວຍພວກເຂົາໃຫ້ພົ້ນຈາກຄວາມຍາກລຳບາກນັ້ນໄດ້, ດັ່ງທີ່ພຣະອົງຊົງຕຣັດໄວ້ໃນຄຳພີອັນຊັດແຈ້ງຂອງພຣະອົງ ກ່ຽວກັບບັນດາຜ้ູຕັ້ງພາກີເຫຼົ່ານັ້ນວ່າ:

﴿فَإِذَا رَكِبُواْ فِي ٱلۡفُلۡكِ دَعَوُاْ ٱللَّهَ مُخۡلِصِينَ لَهُ ٱلدِّينَ فَلَمَّا نَجَّىٰهُمۡ إِلَى ٱلۡبَرِّ إِذَا هُمۡ يُشۡرِكُونَ ٦٥﴾

(ດັ່ງນັ້ນ ເມື່ອພວກເຂົາໂດຍສານເຮືອ ພວກເຂົາຈະຂໍວິງວອນຕໍ່ອັລລໍຫ໌ໃນຖານະຜ้ູບໍລິສຸດໃຈ ມອບການເຄົາລົບພັກດີຕໍ່ພຣະອົງ ແຕ່ເມື່ອພຣະອົງໄດ້ຊ່ວຍພວກເຂົາໃຫ້ຂຶ້ນເທິງບົກປອດໄພແລ້ວ ເມື່ອນັ້ນພວກເຂົາກໍ່ຕັ້ງພາຄີຕໍ່ພຣະອົງ) (ອັລ-ອັ

ນກະບູດ : 65), ແລະ ພຣະອົງຜູ້ຊົງມະຫາບໍລິສຸດ ສູງສົ່ງຍິ່ງ ໄດ້ຕຣັດແກ່ພວກເຂົາໃນອາຍະຫ໌ ອື່ນອີກວ່າ:

﴿وَإِذَا مَسَّكُمُ ٱلضُّرُّ فِي ٱلۡبَحۡرِ ضَلَّ مَن تَدۡعُونَ إِلَّآ إِيَّاهُۖ فَلَمَّا نَجَّىٰكُمۡ إِلَى ٱلۡبَرِّ أَعۡرَضۡتُمۡۚ وَكَانَ ٱلۡإِنسَٰنُ كَفُورًا ٦٧﴾

(ແລະ ເມື່ອຄວາມທຸກເຄາະຮ້າຍປະສົບແກ່ພວກເຈົ້າໃນທະເລ, ບັນດາສິ່ງທີ່ພວກເຈົ້າວິງວອນຂໍກໍໄດ້ສູນຫາຍໄປ ເວັ້ນໄວ້ແຕ່ພຣະອົງເທົ່ານັ້ນ. ແຕ່ເມື່ອພຣະອົງໄດ້ຊ່ວຍພວກເຈົ້າໃຫ້ຂຶ້ນເທິງບົກປອດໄພແລ້ວ, ພວກເຈົ້າກໍພາກັນຜິນຫລັງໃຫ້. ແລະມະນຸດນັ້ນເປັນຜູ້ເນລະຄຸນຍິ່ງ) [ສູເຣາະຫ໌ ອິສຣ໌ອ: 67].

ດັ່ງນັ້ນ ຖ້າຫາກຜູ້ກ່າວຄົນໜຶ່ງຈາກພວກມຸຊຣິກີນ (ຜູ້ຕັ້ງພາຄີ) ໃນສະໄໝຫຼ້າ ໆ ເຫຼົ່ານີ້ ໄດ້ກ່າວວ່າ: ແທ້ຈິງເຮົາບໍ່ໄດ້ມີເຈດຕະນາວ່າ ພວກເຂົາເຫຼົ່ານັ້ນຈະໃຫ້ຄຸນປະໂຫຍດດ້ວຍຕົວຂອງພວກເຂົາເອງ, ແລະ ປົ່ນປົວຄົນປ່ວຍຂອງພວກເຮົາດ້ວຍຕົວຂອງພວກເຂົາເອງ, ຫຼື ໃຫ້ປະໂຫຍດແກ່ພວກເຮົາດ້ວຍຕົວຂອງພວກເຂົາເອງ, ຫຼື ໃຫ້ໂທດແກ່ພວກເຮົາດ້ວຍຕົວຂອງພວກເຂົາເອງ, ຫາກແຕ່ວ່າເຮົາພຽງແຕ່ຕ້ອງການການຂໍຄວາມຊ່ວຍເຫຼືອຂອງພວກເຂົາຕໍ່ອັລລໍຮ໌ໃນເລື່ອງດັ່ງກ່າວ?

ຄຳຕອບກໍຄື: ໃຫ້ກ່າວຕໍ່ເຂົາວ່າ: ແທ້ຈິງແລ້ວ ນີ້ແມ່ນຈຸດປະສົງ ແລະ ຄວາມຕ້ອງການຂອງພວກມຸຟຟາຣຶໃນຍຸກທຳອິດ, ແລະ ຄວາມຕ້ອງການຂອງພວກເຂົາບໍ່ແມ່ນວ່າບັນດາພຣະເຈົ້າຂອງພວກເຂົາເປັນຜູ້ສ້າງ ຫຼື ເປັນຜູ້ໃຫ້ປັດໃຈຍັງຊີບ, ຫຼື ໃຫ້ຄຸນປະໂຫຍດ ແລະ ໃຫ້ໂທດດ້ວຍຕົວຂອງພວກມັນເອງ, ເພາະສິ່ງດັ່ງກ່າວນັ້ນຖືກເຮັດໃຫ້ເປັນໂມຄະໂດຍສິ່ງທີ່ອັລລໍຮ໌ໄດ້ກ່າວເຖິງພວກເຂົາໄວ້ໃນອັລກຸຣອານ, ແລະ ພວກເຂົາພຽງຕ້ອງ

ການການຂໍໃຫ້ໂທດ ແລະ ຖານະຂອງພວກມັນ ເພື່ອທີ່ຈະເຮັດ ໃຫ້ພວກເຂົາເຂົ້າໃກ້ຊິດກັບອັລລໍຮ໌ຫຼາຍຍິ່ງຂຶ້ນ, ດັ່ງທີ່ພຣະອົງ ຜູ້ຊົງສູງສົ່ງ ໄດ້ກ່າວໄວ້ວ່າ:

﴿وَيَعۡبُدُونَ مِن دُونِ ٱللَّهِ مَا لَا يَضُرُّهُمۡ وَلَا يَنفَعُهُمۡ وَيَقُولُونَ هَٰٓؤُلَآءِ شُفَعَٰٓؤُنَا عِندَ ٱللَّهِ...﴾

(ແລະ ເຂົາເຫລົ່ານັ້ນໄດ້ເຄົາລົບພັກດີສິ່ງອື່ນຈາກອັລລໍຮ໌ ຊຶ່ງບໍ່ໄດ້ໃຫ້ໂທດແກ່ພວກເຂົາ ແລະ ບໍ່ໄດ້ໃຫ້ປະໂຫຍດແກ່ພວກເຂົາ ແລະ ພວກເຂົາຈະກ່າວວ່າ ພວກເຫຼົ່ານີ້ແຫລະ ຄືຜູ້ຊ່ວຍເຫຼືອເຮົາ ນະ ທີ່ອັລລໍຮ໌...) [ສູເຣາະຫ໌ ຢູນຸສ : 18], ອັລລໍຮ໌ຈຶ່ງໄດ້ຕອບໂຕ້ພວກເຂົາໃນເລື່ອງນັ້ນ ດ້ວຍພຣະດຳລັດວ່າ:

﴿...قُلۡ أَتُنَبِّـُٔونَ ٱللَّهَ بِمَا لَا يَعۡلَمُ فِي ٱلسَّمَٰوَٰتِ وَلَا فِي ٱلۡأَرۡضِۚ سُبۡحَٰنَهُۥ وَتَعَٰلَىٰ عَمَّا يُشۡرِكُونَ﴾

(ຈົ່ງກ່າວເຖີດ (ມຸຮຳມັດ) ພວກເຈົ້າຈະບອກອັລເລາະຮ໌ເຖິງສິ່ງທີ່(ພວກເຂົ້າໃຈວ່າ) ພຣະອົງບໍ່ຊົງຮັບຮູ້ໃນບັນດາຊັ້ນຟ້າ ແລະ ແຜ່ນດິນແນວນັ້ນບໍ? ພຣະອົງຊົງມະຫາບໍລິສຸດ ແລະ ຊົງສູງສົ່ງ ເໜືອສິ່ງທີ່ພວກເຂົາຕັ້ງພາຄີຂຶ້ນ)

[ສູເຣາະຫ໌ ຢູນຸສ: 18], ດັ່ງນັ້ນ ພຣະອົງຜູ້ຊົງສູງສົ່ງໄດ້ຊີ້ແຈ ງໃຫ້ເຫັນຢ່າງແຈ່ມແຈ້ງວ່າ ບໍ່ມີຜູ້ໃກ້ເກ່ຍຄົນໃດຢູ່ກັບພຣະອົ ງ ທັ້ງໃນບັນດາຊັ້ນຟ້າ ແລະ ໃນແຜ່ນດິນ ຕາມທີ່ບັນດາຜູ້ຕັ້ງ ພາຄີໄດ້ຕັ້ງໃຈເອົາໄວ້, ແລະ ສິ່ງໃດກໍຕາມທີ່ບໍ່ຢູ່ໃນຄວາມຮູ້ຂອ ງອັລລໍຮ໌ ສິ່ງນັ້ນກໍບໍ່ມີຢູ່ຈິງ; ເພາະວ່າ ແທ້ຈິງແລ້ວ ບໍ່ມີສິ່ງໃດສ າມາດຊ່ອນເລັ້ນຈາກພຣະອົງໄດ້. ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັ ດວ່າ:

﴿تَنزِيلُ ٱلۡكِتَٰبِ مِنَ ٱللَّهِ ٱلۡعَزِيزِ ٱلۡحَكِيمِ ۝١ إِنَّآ أَنزَلۡنَآ إِلَيۡكَ ٱلۡكِتَٰبَ بِٱلۡحَقِّ فَٱعۡبُدِ ٱللَّهَ مُخۡلِصٗا لَّهُ ٱلدِّينَ ۝٢ أَلَا لِلَّهِ ٱلدِّينُ ٱلۡخَالِصُۚ وَٱلَّذِينَ ٱتَّخَذُواْ مِن دُونِهِۦٓ أَوۡلِيَآءَ مَا نَعۡبُدُهُمۡ إِلَّا لِيُقَرِّبُونَآ إِلَى ٱللَّهِ زُلۡفَىٰٓ إِنَّ ٱللَّهَ يَحۡكُمُ بَيۡنَهُمۡ فِي مَا هُمۡ فِيهِ يَخۡتَلِفُونَۗ إِنَّ ٱللَّهَ لَا يَهۡدِي مَنۡ هُوَ كَٰذِبٞ كَفَّارٞ ۝٣﴾

(ນີ້ຄື ການປະທານວິງມາຂອງຄຳພີ ຈາກອັລລ໋ອ ຜູ້ຊົງເດຊານຸພາບ ພຣະຜູ້ຊົງສະຫງາດຫຼັກແຫລມ)

(ແທ້ຈິງ ເຮົາໄດ້ປະທານຄຳພີແກ່ເຈົ້າ ດ້ວຍຄວາມຈິງ, ດັ່ງນັ້ນ ເຈົ້າຈົ່ງເຄົາລົບພັກດີຕໍ່ອັລລ໋ອ ໂດຍເປັນຜູ້ຖະວາຍການເຄົາລົບຢ່າງບໍລິສຸດແດ່ພຣະອົງ (ພຽງອົງດຽວເທົ່ານັ້ນ).

(ຈົ່ງຮູ້ໄວ້ເຖີດວ່າ ສ່ຳຫຼັບອັລລ໋ອ ແລ້ວ (ບໍ່ມີພາຄີໃດ ໆ ອີກນອກຈາກ) ການເຄົາລົບພັກດີທີ່ຜ່ອງແຜ້ວບໍລິສຸດ ແລະ ບັນດາຜູ້ທີ່ຍຶດຖືສິ່ງອື່ນຈາກອັລລ໋ອ ໃຫ້ເປັນອະລີຍ໌ (ຜູ້ຄຸ້ມຄອງ) ເພື່ອເຄົາລົບພັກດີ (ພວກເຂົາຈະກ່າວວ່າ) ເຮົາບໍ່ໄດ້ເຄົາລົບພັກດີພວກເຂົາເຫລ່ານັ້ນ ເວັ້ນແຕ່ເພື່ອເຂົາເຫລ່ານັ້ນຈະເຮັດໃຫ້ເຮົາໃກ້ຊິດຕໍ່ອັລລ໋ອ ແທ້ຈິງອັລລ໋ອ ຈະຊົງຈະຕັດສິນພວກເຂົາໃນສິ່ງທີ່ພວກເຂົາຂັດແຍ້ງກັນໃນເລື່ອງນັ້ນ ແທ້ຈິງອັລລ໋ອ ຈະບໍ່ຊົງຊີ້ນຳທາງແກ່ຜູ້ກ່າວເທັດ(ຄົນຂີ້ຕົວະ) ຜູ້ບໍ່ສຳນຶກບຸນຄຸນປະຕິເສດ) [ສູເຣາະ ອັຊຊຸມັຣ: 1-3].

ແລະ ຄວາມຫມາຍຂອງສາສະໜາໃນທີ່ນີ້ແມ່ນ: ການອິບາດະ, ເຊິ່ງກ່ຳຄື: ການເຊື່ອຟັງອັລລ໋ອ ແລະ ການເຊື່ອຟັງຄຳສັ່ງຂອງພຣະອົງ -ດັ່ງທີ່ໄດ້ກ່າວມາກ່ອນຫນ້ານີ້-, ແລະ ໃນນັ້ນລວມມີ: ການຂໍວິງວອນ, ການຂໍຄວາມຊ່ວຍເຫລືອ, ຄວາມຢ້ານກົວ, ຄວາມຫວັງ, ການເຊືອດສັດ ແລະ ການບົນບານ, ເຊິ່ນດຽວກັບການລະຫມາດ, ການຖືສິນອົດ ແລະ ອື່ນໆ ຈາກສິ່ງທີ່ອັລລ໋ອ

ແລະ ຄໍຊູລຂອງພຣະອົງໄດ້ບັນຊາໄວ້. ດັ່ງນັ້ນ ພຣະອົງຈຶ່ງໄດ້ຊົງຊີ້ແຈ້ງວ່າ ການເຄົາລົບບູຊານັ້ນແມ່ນເພື່ອພຣະອົງພຽງຜູ້ດຽວ, ແລະ ມັນເປັນໜ້າທີ່ຂອງປວງບ່າວທີ່ຈະຕ້ອງມີຄວາມບໍລິສຸດໃຈຕໍ່ພຣະອົງ; ເພາະວ່າພຣະບັນຊາຂອງພຣະອົງຕໍ່ທ່ານນະບີ ﷺ ທີ່ໃຫ້ມີຄວາມບໍລິສຸດໃຈໃນການເຄົາລົບບູຊານັ້ນ, ກໍເປັນພຣະບັນຊາສຳລັບປະຊາຊາດນີ້ທັງໝົດ.

ຫຼັງຈາກນັ້ນ ອັລລໍຮ໌ ໄດ້ຊີ້ແຈງກ່ຽວກັບພວກປະຕິເສດສັດທາ ຈຶ່ງໄດ້ກ່າວວ່າ:

﴿...وَٱلَّذِينَ ٱتَّخَذُواْ مِن دُونِهِۦٓ أَوۡلِيَآءَ مَا نَعۡبُدُهُمۡ إِلَّا لِيُقَرِّبُونَآ إِلَى ٱللَّهِ زُلۡفَىٰٓ...﴾

(ແລະ ບັນດາຜູ້ທີ່ຍຶດຖືສິ່ງອື່ນຈາກອັລລໍຮ໌ໃຫ້ເປັນອະລີ (ຜູ້ຄຸ້ມຄອງ) ເພື່ອເຄົາລົບພັກດີ (ພວກເຂົາຈະກ່າວວ່າ) ເຮົາບໍ່ໄດ້ເຄົາລົບພັກດີພວກເຂົາເຫລົ່ານັ້ນ ເວັ້ນແຕ່ເພື່ອເຂົາເຫລົ່ານັ້ນຈະເຮັດໃຫ້ເຮົາໃກ້ຊິດຕໍ່ອັລລໍຮ໌) (ອັຊ-ຊຸມັຣ : 3). ອັລລໍຮ໌ຈຶ່ງໄດ້ຕອບໂຕ້ພວກເຂົາ ດ້ວຍພຣະດຳລັດວ່າ:

﴿...إِنَّ ٱللَّهَ يَحۡكُمُ بَيۡنَهُمۡ فِي مَا هُمۡ فِيهِ يَخۡتَلِفُونَۗ إِنَّ ٱللَّهَ لَا يَهۡدِي مَنۡ هُوَ كَٰذِبٞ كَفَّارٞ﴾

(ແທ້ຈິງອັລລໍຮ໌ ຈະຊົງຈະຕັດສິນພວກເຂົາໃນສິ່ງທີ່ພວກເຂົາຂັດແຍ້ງກັນໃນເລື່ອງນັ້ນ ແທ້ຈິງອັລລໍຮ໌ຈະບໍ່ຊົງຊີ້ນຳທາງແກ່ຜູ້ກ່າວເທັດ(ຄົນຂີ້ຕົວະ) ຜູ້ບໍ່ສຳນຶກບຸນຄຸນປະຕິເສດ) [ສຸເຣາະຫ໌ ອັຊຊຸມັຣ: 3], ດັ່ງນັ້ນ ອັລລໍຮ໌ໄດ້ຊົງແຈ້ງໄວ້ໃນອາຍະຫ໌ອັນຊົງກຽດນີ້ວ່າ: ບັນດາຜູ້ປະຕິເສດສັດທາບໍ່ໄດ້ເຄົາລົບພັກດີບັນດາອະລີຍ໌ອື່ນຈາກພຣະອົງ ເວັ້ນແຕ່ເພື່ອໃຫ້ຄົນເຫຼົ່ານັ້ນ ເຮັດໃຫ້ພວກເຂົາໃກ້ຊິດຕໍ່ອັລລໍຮ໌; ແລະ ນີ້ຄືຈຸດປະສົງຂອງບັນດ

ຜູ້ປະຕິເສດສັດທາທັງໃນອະດີດ ແລະ ປັດຈຸບັນ, ແລະ ອັລລໍ ໄດ້ຊົງລົບລ້າງສິ່ງດັ່ງກ່າວນັ້ນ ດັ່ງທີ່ພຣະອົງໄດ້ກ່າວວ່າ:

﴿...إِنَّ ٱللَّهَ يَحۡكُمُ بَيۡنَهُمۡ فِي مَا هُمۡ فِيهِ يَخۡتَلِفُونَۖ إِنَّ ٱللَّهَ لَا يَهۡدِي مَنۡ هُوَ كَٰذِبٞ كَفَّارٞ﴾

(...ແທ້ຈິງອັລລໍ ຈະຊົງຕັດສິນພວກເຂົາໃນສິ່ງທີ່ພວກເຂົາຂັດແຍ້ງກັນໃນເລື່ອງນັ້ນ ແທ້ຈິງອັລລໍຈະບໍ່ຊົງຊີ້ນຳທາງແກ່ຜູ້ກ່າວເທັດ (ຄົນຂີ້ຕົວະ) ຜູ້ບໍ່ສຳນຶກບຸນຄຸນປະຕິເສດ) [ສຸຕ ຣ ຫ໌ ອັຊຊຸມັຣ: 3], ດັ່ງນັ້ນ ພຣະອົງອັລລໍ ໄດ້ຊົງຊີ້ແຈງຢ່າງ ຊັດເຈນເຖິງການກ່າວອ້າງທີ່ເປັນເທັດຂອງພວກເຂົາ ທີ່ວ່າພ ຣະເຈົ້າຂອງພວກເຂົາຈະເຮັດໃຫ້ພວກເຂົາໃກ້ຊິດກັບອັລລໍ ຫຼາຍຍິ່ງຂຶ້ນ, ແລະ ຊີ້ແຈງເຖິງການກຸຟຣ (ການປະຕິເສດ) ຂອ ງພວກເຂົາໃນການທີ່ພວກເຂົາຫັນເຫການເຄົາລົບພັກດີໄປສູ່ ສິ່ງເຫຼົ່ານັ້ນ, ດ້ວຍເຫດນີ້ ທຸກຄົນທີ່ມີຄວາມສາມາດໃນການໄ ຕຕຣອງແຍກພຽງເລັກນ້ອຍກໍ່ຍ່ອມຊາບດີວ່າ ແທ້ຈິງແລ້ວກ ານກຸຟຣຂອງບັນດາຜູ້ປະຕິເສດໃນຍຸກທຳອິດນັ້ນ ແມ່ນເກີດ ຈາກການທີ່ພວກເຂົາໄດ້ຍົກຖືເອົາບັນດານະບີ, ບັນດາຄົນດີ, ຕົ້ນໄມ້ ແລະ ຫີນຜາ ແລະ ສິ່ງຖືກສ້າງອື່ນໆ; ເພື່ອເປັນຜູ້ໃກ້ເກ ຍລະຫວ່າງພວກເຂົາກັບອັລລໍ, ແລະ ຄວາມເຊື່ອຂອງພວກເ ຂົາທີ່ວ່າ ພວກເຫຼົ່ານັ້ນຕອບສະໜອງຄວາມຕ້ອງການຂອງພ ວກເຂົາ ໂດຍປາສະຈາກການອະນຸຍາດ ແລະ ຄວາມພໍພຣະໄທ ຂອງພຣະອົງ, ດັ່ງທີ່ບັນດາລັດຖະມົນຕີທູນຂໍແທນຕໍ່ບັນດາກ ະສັດ, ດັ່ງນັ້ນ ພວກເຂົາຈຶ່ງໄດ້ປຽບທຽບພຣະອົງ ກັບບັນດາກະ ສັດ ແລະ ຜູ້ນຳທັ້ງຫລາຍ. ພວກເຂົາກ່າວວ່າ: ເໝືອນດັ່ງບຸກຄົ ນທີ່ມີຄວາມຕ້ອງການຈາກກະສັດ ຫຼືຜູ້ນຳ ຍ່ອມຕ້ອງຂໍຜ່ານ

ຄົນໃກ້ຊິດ ແລະ ທີ່ປຶກສາຂອງພວກເຂົາ, ພວກເຮົາກໍເຊັ່ນກັນ ທີ່ເຂົ້າໃກ້ອັລລໍ່ຫ໌ດ້ວຍການເຄົາລົບບູຊາບັນດານະບີ ແລະ ຜູ້ເປັນທີ່ຮັກຂອງພຣະອົງ. ແລະນີ້ຄືຄວາມເຊື່ອທີ່ລົ້ມເຫລວ ແລະ ບໍ່ເປັນຈິງທີ່ສຸດ; ເພາະວ່າພຣະອົງນັ້ນບໍ່ມີສິ່ງໃດທຽບເໝືອນ, ແ ລະ ບໍ່ສາມາດນຳໄປປຽບທຽບກັບສິ່ງຖືກສ້າງຂອງພຣະອົງໄດ້, ແລະບໍ່ມີຜູ້ໃດສາມາດໃຫ້ການຊ່ວຍເຫຼືອ (ຊະຟາອະ) ຕໍ່ໜ້າ ພຣະອົງໄດ້ ເວັ້ນເສຍແຕ່ດ້ວຍການອະນຸຍາດຂອງພຣະອົງເທົ່ ານັ້ນ, ແລະພຣະອົງຈະບໍ່ອະນຸຍາດໃຫ້ຜູ້ໃດ ນອກຈາກຊາວເຕົາ ຣິດ (ຜູ້ທີ່ໃຫ້ເອກະພາບແດ່ພຣະອົງ). ແລະ ພຣະອົງຄືຜູ້ຊົງອຳ ນາດເໜືອທຸກສິ່ງ, ຜູ້ຊົງຮອບຮູ້ໃນທຸກສັບພະສິ່ງ, ແລະ ເປັນ ຜູ້ຊົງເມດຕາປານີຍິ່ງທີ່ສຸດ, ພຣະອົງບໍ່ຊົງຢ້ານກົວຜູ້ໃດ; ເພາະ ວ່າພຣະອົງຄືຜູ້ຊົງອຳນາດສູງສຸດເໜືອບ່າວຂອງພຣະອົງທັ ງ ຫລາຍ, ແລະເປັນຜູ້ບໍລິຫານຈັດການພວກເຂົາຕາມທີ່ພຣະອົ ງຊົງປະສົງ. ເຊິ່ງຕ່າງຈາກບັນດາກະສັດ ເຈົ້າຊີວິດ ແລະ ຜູ້ນຳທັ ງຫຼາຍ, ເພາະພວກເຂົາບໍ່ມີຄວາມສາມາດເໜືອທຸກສິ່ງ, ດັ່ງນັ້ ນ ພວກເຂົາຈຶ່ງຕ້ອງການຜູ້ຊ່ວຍເຫຼືອໃນສິ່ງທີ່ພວກເຂົາອາດ ຈະເຮັດບໍ່ໄດ້; ເຊັ່ນ: ເຫຼົ່າເສນາອາມາດ, ຄົນໃກ້ຊິດ ແລະ ທະຫາ ນຂອງພວກເຂົາ, ເຊັ່ນດຽວກັນນັ້ນ ພວກເຂົາຍັງຕ້ອງການຄົ ນທີ່ຈະມາແຈ້ງຄວາມຕ້ອງການຂອງຜູ້ທີ່ພວກເຂົາບໍ່ຮູ້ຈັກໃຫ້ ລາບ, ຈຶ່ງຈຳເປັນຕ້ອງມີຄົນຈາກກຸ່ມເສນາອາມາດ ແລະ ຄົນໃ ກ້ຊິດ ເພື່ອທູນຂໍຄວາມເຫັນໃຈ ແລະ ເຮັດໃຫ້ພວກເຂົາພໍໃຈ. ພຣະເຈົ້າຜູ້ຊົງຍິ່ງໃຫຍ່ນັ້ນ ບໍ່ຕ້ອງການສິ່ງໃດໆ ຈາກສັບພະສິ່ງ ທີ່ພຣະອົງສ້າງທັ້ງໝົດ, ພຣະອົງຊົງເມດຕາປານີຕໍ່ພວກເຂົາຍິ່ ງກວ່າແມ່ຂອງພວກເຂົາເອງ, ພຣະອົງຄືຜູ້ປົກຄອງທີ່ຍຸດຕິ ທຳ ທີ່ຊົງຈັດວາງທຸກສິ່ງໄວ້ໃນບ່ອນທີ່ເໝາະສົມຂອງມັນ ຕາມ

ປັນຍາ, ຄວາມຮອບຮູ້ ແລະ ອຳນາດຂອງພຣະອົງ, ດັ່ງນັ້ນ ຈຶ່ງບໍ່ສາມາດປຽບທຽບພຣະອົງກັບສິ່ງທີ່ຖືກສ້າງໄດ້ຢ່າງເດັດຂາດ. ດ້ວຍເຫດນີ້ ພຣະອົງຈຶ່ງໄດ້ອະທິບາຍໄວ້ໃນຄຳພີຂອງພຣະອົງວ່າ: ບັນດາຜູ້ຕັ້ງພາຄີໄດ້ຍອມຮັບວ່າພຣະອົງຄືຜູ້ຊົງສ້າງ, ຜູ້ຊົງສ້າງປັດໃຈ, ຜູ້ບໍລິຫານເບິ່ງແຍງ, ແລະ ພຣະອົງຄືຜູ້ທີ່ຕອບຮັບຜູ້ທີ່ຢູ່ໃນຄວາມທຸກຍາກ, ປົດເປົ່າຄວາມຊົ່ວຮ້າຍ, ໃຫ້ຊີວິດ ແລະ ໃຫ້ຕາຍ, ແລະ ການກະທຳອື່ນໆ ອີກຫລວງຫລາຍຂອງພຣະອົງ. ແລະ ແທ້ຈິງແລ້ວ ຂໍ້ຂັດແຍ່ງລະຫວ່າງບັນດາຜູ້ຕັ້ງພາຄີ ແລະ ບັນດາຣໍຊູລນັ້ນ ແມ່ນຢູ່ໃນເລື່ອງການຈົງຮັກພັກດີຕໍ່ອັລລໍຮ໌ພຽງພຣະອົງດຽວ, ດັ່ງພຣະອົງຕຣັດວ່າ:

﴿وَلَئِن سَأَلْتَهُم مَّنْ خَلَقَهُمْ لَيَقُولُنَّ ٱللَّهُ...﴾

(ແລະ ຖ້າເຈົ້າ (ມຸຮຳມັດ) ຖາມພວກເຂົາເຫຼົ່ານັ້ນວ່າ ໃຜເປັນຜູ້ສ້າງພວກເຂົາ ແນ່ນ່ອນພວກເຂົາຈະກ່າວວ່າ ອັລລໍຮ໌...) [ຊຸເຣາະຫ໌ ອັຊຊຸຄຣຸຟ : 87]

ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿قُلْ مَن يَرْزُقُكُم مِّنَ ٱلسَّمَآءِ وَٱلْأَرْضِ أَمَّن يَمْلِكُ ٱلسَّمْعَ وَٱلْأَبْصَٰرَ وَمَن يُخْرِجُ ٱلْحَىَّ مِنَ ٱلْمَيِّتِ وَيُخْرِجُ ٱلْمَيِّتَ مِنَ ٱلْحَىِّ وَمَن يُدَبِّرُ ٱلْأَمْرَ ۚ فَسَيَقُولُونَ ٱللَّهُ ۚ فَقُلْ أَفَلَا تَتَّقُونَ ﴿٣١﴾﴾

(ຈົ່ງກ່າວເຖີດ (ມຸຮຳມັດ) ໃຜເປັນຜູ້ປະທານປັດໃຈຍັງຊີບທີ່ມາຈາກຟາກຟ້າແລະແຜ່ນດິນແກ່ພວກທ່ານ ຫຼື ໃຜເປັນເຈົ້າຂອງການໄດ້ຍິນ ການເບິ່ງເຫັນ ແລະ ໃຜເປັນຜູ້ໃຫ້ມີຊີວິດຫຼັງຈາກການຕາຍ ແລະ ໃຜເປັນຜູ້ໃຫ້ຕາຍຫຼັງຈາກມີຊີວິດມາ ແລະ ໃຜເປັນຜູ້ບໍລິຫານກິດຈະການ ແລ້ວພວກເຈົ້າຈະກ່າວກັ

ນອ່າ “ອັລລ໋ອ” ດັ່ງນັ້ນຈົ່ງກ່າວເຖິດ (ມຸຮໍາມັດ) ພວກທ່ານບໍ່ຢ໋ານກຼາບ!) (ຢູນຸສ : 31), ແລະ ໂອງການອື່ນ ໆ ທີ່ມີຄວາມໝາຍທ່ານອງນີ້ຢ໋ງມີອີກຫຼາຍ.

ດັ່ງທີ່ໄດ້ກ່າວມາແລ້ວ ໃນອາຍາຕຕ່າງໆ ທີ່ຊີ້ໃຫ້ເຫັນວ່າ ຂໍ້ຂັດແຍ່ງລະຫວ່າງບັນດາຣ໋ຊູລກັບປະຊາຊາດທ້ງຫຼາຍນັ້ນ, ແທ້ຈ໋ງແລ້ວແມ່ນກ່ຽວກັບການມອບການເຄ໋ານົບພັກດີຕໍ່ອັລລ໋ອ ພຽງອ໋ງດຽວເທ່ານັ້ນ, ດັ່ງທີ່ພຣະອ໋ງໄດ້ດ໋ານັດວ່າ:

﴿وَلَقَدۡ بَعَثۡنَا فِي كُلِّ أُمَّةٖ رَّسُولًا أَنِ ٱعۡبُدُواْ ٱللَّهَ وَٱجۡتَنِبُواْ ٱلطَّٰغُوتَ...﴾

(ແລະ ໂດຍແນ່ນອນ ເຮົາໄດ້ແຕ່ງຕ້ັງຣ໋ຊູລໄປຢ້ງແຕ່ລະປະຊາຊາດ (ໂດຍຣ໋ຊູລຈະກ່າວແກ່ປະຊາຊາດນ້ັນ ໆ ວ່າ) ພວກທ່ານຈົ່ງເຄ໋ານົບພັກດີຕໍ່ອັລລ໋ອ ແລະ ຈ໋ງຫຼ້ກຫນີ ອອກຫ່າງຈາກພວກຕ໋ກູດຈະເວ້ັດຮູບປ້ັນ...) (ອັລ-ນະໜ໋ລ : 36), ແລະ ໂອງການອື່ນ ໆ ທີ່ມີຄວາມໝາຍທ່ານອງດຽວກັນ. ແລະ ພຣະອ໋ງຜູ້ຊົ່ງມະຫາບໍລິສຸດ ໄດ້ຊົ່ງຊີ້ແຈ່ງເລ່ືອງການຊະຟາອະ ໜ໋ ໄວ້ໃນຫຼາຍ ໆ ບ່ອນຈາກຄ໋າພີອັນຊົ່ງກຽດຂອ່ງພຣະອ໋ງ, ແລະພຣະອ໋ງໄດ້ຕ ຣັດວ່າ:

﴿...مَن ذَا ٱلَّذِي يَشۡفَعُ عِندَهُۥٓ إِلَّا بِإِذۡنِهِۦ...﴾

(...ບໍ່ມີໃຜສາມາດຂໍ່ໃຫ້ການຊ່ວຍເຫຼ້ືອໄດ້ ນອກເໜ້ືອຈາກພຣະອ໋ງຈະອະນຸຍາດ...) [ສູເຣາະ ໜ໋ ອັລ-ບາກ໋ເຣາະ ໜ໋:255]. ແລະ ພຣະຜູ້ຊົ່ງເດສານຸພາບໄດ້ກ່າວວ່າ:

﴿وَكَم مِّن مَّلَكٖ فِي ٱلسَّمَٰوَٰتِ لَا تُغۡنِي شَفَٰعَتُهُمۡ شَيۡـًٔا إِلَّا مِنۢ بَعۡدِ أَن يَأۡذَنَ ٱللَّهُ لِمَن يَشَآءُ وَيَرۡضَىٰٓ ٢٦﴾

(ແລະ ມີມາລາອິກະ ໜ໋ຈ໋ານວນຫຼວ່ງຫຼາຍໃນຊ້ັນຟ້າທ້ັ່ງຫລ

ານ ການຊາຟາອະຫ໌ຂອງພວກເຂົາຈະບໍ່ເກີດປະໂຫຍດອັນໃດເລີຍ ນອກຈາກຫຼັງຈາກທີ່ອັລລ໋ອ ຈະອະນຸຍາດໃຫ້ແກ່ຜູ້ທີ່ພຣະອົງຊົງປະສົງ ແລະ ຊົງພໍໃຈ) [ຊູເຣາະ ອັນນັຈມ : 26]

ແລະ ທ່ານໄດ້ກ່າວຟັນລະນາເຖິງບັນດາມະລາອິກະ ໜ໌ວ່າ:

﴿وَلَا يَشۡفَعُونَ إِلَّا لِمَنِ ٱرۡتَضَىٰ وَهُم مِّنۡ خَشۡيَتِهِۦ مُشۡفِقُونَ﴾...

(ແລະ ພວກເຂົາຈະບໍ່ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ໃດ ນອກຈາກຜູ້ທີ່ພຣະອົງຊົງພໍໃຈ (ອະນຸຍາດໃຫ້ຂໍ) ແລະ ຍ້ອນຄວາມຢ້ານກົວຕໍ່ພຣະອົງ ພວກເຂົາຈຶ່ງເນື້ອຕົ ໜ໌ສັ່ນ)

(ອັລ-ອໍາບິຍາ : 28).

ແລະ ພຣະອົງຜູ້ຊົງສູງສົ່ງ ໄດ້ຊີ້ແຈງວ່າ ພຣະອົງບໍ່ຊົງພໍພຣະໄທກັບການປະຕິເສດສັດທາຈາກບັນດາບ່າວຂອງພຣະອົງ, ສິ່ງທີ່ພຣະອົງຊົງພໍພຣະໄທຈາກພວກເຂົານັ້ນຄືການຂອບພຣະຄຸນ, ແລະ ການຂອບພຣະຄຸນນັ້ນກໍຄືການໃຫ້ເອກະພາບຕໍ່ພຣະອົງ ແລະ ການປະຕິບັດໃນການເຊື່ອຟັງພັກດີຕໍ່ພຣະອົງ, ດັ່ງທີ່ພຣະອົງ ຕະອາລາ ໄດ້ກ່າວວ່າ:

﴿إِن تَكۡفُرُواْ فَإِنَّ ٱللَّهَ غَنِيٌّ عَنكُمۡۖ وَلَا يَرۡضَىٰ لِعِبَادِهِ ٱلۡكُفۡرَۖ وَإِن تَشۡكُرُواْ يَرۡضَهُ لَكُمۡ...﴾

(ຫາກພວກເຈົ້າປະຕິເສດສັດທາ ແທ້ຈິງອັລລ໋ອ ບໍ່ຊົງເພິ່ງພາພວກເຈົ້າ ແລະ ພຣະອົງບໍ່ຊົງພໍພຣະໄທຕໍ່ການປະຕິເສດສັດທາສໍາລັບປວງຂ້າຂອງພຣະອົງ ແລະ ຫາກພວກເຈົ້າຂອບໃຈ ພຣະອົງກໍຈະຊົງພໍພຣະໄທໃນສິ່ງນັ້ນສໍາລັບພວກເຈົ້າ...)

[ຊູເຣາະ ໜ໌ ອັຊຊຸມັຣ : 7].

ລາຍງານໂດຍ ທ່ານອັລ-ບຸຄ ໍາຣີ ໃນບຶ ໍ້ມຊຸ ໍ້ເຮັຍ ໜ໌ຂອງທ່ານ ຈາ

ກທ່ານອາບູ ຮຸຣອຍເຣາะห์ ຣ.ດ.ຍ.ລ.ອ.ຮ. ເວົ້າວ່າ: ໂອ້ ທ່ານຣ.ສ.ລ.ລ.ອ.ຮ.ﷺ! ໃຜຄືຜູ້ທີ່ຈະໂຊກດີທີ່ສຸດ ທີ່ໄດ້ຮັບການຊະຟາອะห์ ຈາກທ່ານ? ທ່ານຣ.ສ.ລ.ລ.ອ.ຮ.ﷺ ໄດ້ກ່າວວ່າ:

«مَنْ قَالَ: لَا إِلَهَ إِلَّا اللهُ خَالِصًا مِنْ قَلْبِهِ».

“ຜູ້ໃດກ່ຕາມທີ່ກ່າວວ່າ: ລາອິລາหะ ອິລລັລລ.ອ.ຮ. ດ.ວ.ຍ.ຄ.ວ.າ ມ.ບ.ລ.ສ.ດ.ຈ.າ.ກ.ໃ.ຈ.ຂ.ອ.ງ.ລ.ວ” ແ.ລ.ະ ກ.ວ.ດ.ເ.ພ.ີ.ມ.ອ.ີ.ກ.ວ.ວ່.າ:

«مِنْ نَفْسِهِ».

« ຈ.າ.ກ.ຕ.ົ.ວ.ຂ.ອ.ງ.ລ.ວ »

ແ.ລ.ະ ໃ.ນ.ລ.ວ.ຍ.ງ.ານ.ທ.ີ.ຈ.ຸ.ດ.ຮ.ັ.ຍ ຈ.າ.ກ.ທ.່.ານ.ອ.ະ.ນ.ັ.ສ ຣ.ດ.ຍ.ລ.ລ.ອ.ຮ. ອ.ັ.ນ ຮ, ຈ.າ.ກ.ທ.່.ານ.ນ.ะ.ບ.ີ ﷺ ໄ.ດ.ກ.່.າ.ວ.ວ.ວ

ບໄຫວ້ ຍ່ອມເປັນສິດທິຂອງອັລລ໋ໜ່ຽງອົງດຽວ, ແລະ ບໍ່ອະນຸຍາດໃຫ້ອຸທິດສິ່ງໃດຈາກການອິບາດະຫ໌ນັ້ນໃຫ້ແກ່ຜູ້ອື່ນນອກເໜືອຈາກອັລລ໋ໜ, ບໍ່ວ່າຈະເປັນບັນດານະບີ ຫຼື ບຸກຄົນອື່ນໆ ກໍຕາມ, ແລະ ການຊະຟາອະຫ໌ນັ້ນເປັນກຳມະສິດຂອງອັລລ໋ໜ, ໂດຍກ່າວວ່າ:

﴿قُل لِّلَّهِ ٱلشَّفَٰعَةُ جَمِيعًا...﴾

(ຈົ່ງກ່າວເຖີດ ມຸຮຳມັດ ການຊະຟາອະຫ໌ທັ້ງມວນນັ້ນເປັນກຳມະສິດຂອງອັລລ໋ໜ...) [ສູເຣາະຫ໌ ອັຊ-ຊຸມັຣ : 44] ແລະ ບໍ່ມີຜູ້ໃດສົມຄວນໄດ້ຮັບສິດທິນັ້ນ ນອກຈາກຈະເປັນຫຼັງຈາກການອະນຸຍາດຂອງພຣະອົງຕໍ່ຜູ້ທີ່ຈະຂໍຄວາມຊ່ວຍເຫຼືອ, ແລະ ຄວາມພໍພຣະໄທຂອງພຣະອົງຕໍ່ຜູ້ທີ່ຖືກຮ້ອງຂໍໃຫ້, ເຊິ່ງພຣະອົງຈະບໍ່ຊົງພໍພຣະໄທສິ່ງໃດ ນອກຈາກການໃຫ້ເອກະພາບຕໍ່ພຣະອົງ -ດັ່ງທີ່ໄດ້ກ່າວມາແລ້ວ-. ບົນພື້ນຖານດັ່ງກ່າວ: ບັນດາຜູ້ຕັ້ງພາຄີຈຶ່ງບໍ່ມີສ່ວນໃນການຊາຟາອະຫ໌, ແລະ ອັລລ໋ໜ໌ໄດ້ຊີ້ແຈງເລື່ອງນີ້ໄວ້ໃນຄຳດຳຣັດຂອງພຣະອົງວ່າ:

﴿فَمَا تَنفَعُهُمۡ شَفَٰعَةُ ٱلشَّٰفِعِينَ ۝٤٨﴾

(ດັ່ງນັ້ນ ການຊ່ວຍເຫຼືອຂອງບັນດາຜູ້ຊ່ວຍເຫຼືອ ຈະບໍ່ອຳນວຍຜົນແກ່ພວກເຂົາ) [ສູເຣາະຫ໌ ມຸຣັດດິຊ: 48], ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿...مَا لِلظَّٰلِمِينَ مِنۡ حَمِيمٖ وَلَا شَفِيعٖ يُطَاعُ﴾

(...ບັນດາຜູ້ອະທຳຈະບໍ່ມີມິດສະຫາຍທີ່ໃກ້ຊິດ ແລະ ບໍ່ມີຜູ້ຊ່ວຍເຫຼືອທີ່ຈະຖືກເຊື່ອຟັງ) [ສູເຣາະຫ໌ ອັລ-ກຳຟິຣ: 18].

ເປັນທີ່ຮູ້ກັນວ່າ ຄວາມອະທຳເມື່ອກ່າວເຖິງໂດຍລວມນັ້ນຄື

ການຕັ້ງພາຄີກັບອັລລໍຮ໌, ດັ່ງທີ່ອັລລໍຮ໌ໄດ້ກ່າວວ່າ:

﴿...وَٱلۡكَٰفِرُونَ هُمُ ٱلظَّٰلِمُونَ﴾

(...ແລະ ບັນດາຜູ້ປະຕິເສດສັດທາ ແມ່ນ ບັນດາຜູ້ອະທຳ) [ສູເຣາະຫ໌ ອັລ-ບາກໍເຣາະຫ໌ : 254]. ແລະ ພຣະຜູ້ຊົງສູງສົ່ງໄດ້ ຕັດວ່າ:

﴿...إِنَّ ٱلشِّرۡكَ لَظُلۡمٌ عَظِيمٞ﴾

(...ແທ້ຈິງການຕັ້ງພາຄີນັ້ນ ຍ່ອມເປັນຄວາມອະທຳອັນໃຫ ຍ່ຫຼວງ)

[ສູເຣາະຫ໌ ລຸກມານ : 13].

ສຳລັບສິ່ງທີ່ທ່ານໄດ້ກ່າວໄວ້ໃນຄຳຖາມ: ຈາກຄຳກ່າວຂອງ ຊາວຊຸຟີບາງຄົນໃນບັນດາມັສຍິດ ແລະ ສະຖານທີ່ອື່ນໆ ທີ່ວ່າ: ໂອ້ ອັລລໍຮ໌ ຂໍພຣະອົງໄດ້ໂປດປະທານສໍລະອາດແກ່ຜູ້ທີ່ພຣະອົ ງໄດ້ເຮັດໃຫ້ລາວເປັນສາເຫດໃນການໄຂບັນດາຄວາມລັບແຫ່ ງອານຸພາບຂອງພຣະອົງ, ແລະ ເປັນການເປີດເຜີຍບັນດາລັດ ສະໝີແຫ່ງຄວາມເມດຕາຂອງພຣະອົງ, ລາວຈຶ່ງໄດ້ກາຍເປັນ ຕົວແທນແຫ່ງການຊົງຢູ່ຂອງພຣະຜູ້ອະພິບານ, ແລະ ເປັນຜູ້ ສືບທອດບັນດາຄວາມລັບສ່ວນພຣະອົງ.. ແລະ ອື່ນໆ.

ຄຳຕອບກໍຄື: ແທ້ຈິງແລ້ວຄຳເວົ້າດັ່ງກ່າວ ແລະ ຄຳເວົ້າທີ່ຄ້ າຍຄືກັນນີ້ ຖືເປັນສ່ວນໜຶ່ງຂອງການອຸປະໂຫຼກ ແລະ ການເຮັ ດເກີນຂອບເຂດ; ເຊິ່ງທ່ານນະບີ ມຸຮຳມັດ ຊ່ ລ ລ ລ ຣ ອະໄວຣ ອະສັລລັມ ຂອງພວກເຮົາໄດ້ຕັກເຕືອນເອົາໄວ້; ດັ່ງທີ່ໄດ້ມີການ ລາຍງານໂດຍອີມ່ຳມຸສລິມໃນປຶ້ມ ຊ່ ເຮັຍຫ໌ ຂອງເພິ່ນ ຈາກທ່ າ ນ ອັບດຸລລໍຮ໌ ອິບນຸ ມັສອູດ ຂໍອັລລໍຮ໌ຊົງພໍພຣະໄທຕໍ່ເພິ່ນ, ທ່ າ ນຣ໌ຊູລຸນລໍຮ໌ ຊ່ ລ ລ ລ ຣ ອະໄວຣ ອະສັລລັມ ໄດ້ກ່າວວ່າ:

«هَلَكَ الْمُتَنَطِّعُونَ» قَالَهَا ثَلَاثًا.

«ບັນດາຜູ້ທີ່ເຮັດເກີນຂອບເຂດນັ້ນໄດ້ພິນາດແລ້ວ» ທ່ານໄດ້ກ່າວຄຳນີ້ສາມຄັ້ງ.

ທ່ານອີຫມ່ຳ ອັລຄໍດຕາບີ ຂໍອັລລໍຫ໌ເມດຕາທ່ານ ໄດ້ກ່າວວ່າ: ອັລ-ມຸຕະນະຕະອ໌: ຜູ້ທີ່ເຈາະເລິກໃນສິ່ງໃດໜຶ່ງ, ຜູ້ທີ່ສ້າງຄວາມລຳບາກໃຫ້ຕົນເອງໃນການຄົ້ນຄວ້າກ່ຽວກັບມັນ; ຕາມແນວທາງຂອງກຸ່ມອະຫ໌ລຸລກະລາມ ຜູ້ທີ່ເຂົ້າໄປຫຍຸ້ງກ່ຽວໃນສິ່ງທີ່ບໍ່ແມ່ນເລື່ອງຂອງພວກເຂົາ, ຜູ້ທີ່ເຈາະເລິກໃນສິ່ງທີ່ສະຕິປັນຍາຂອງພວກເຂົາບໍ່ສາມາດເຂົ້າເຖິງໄດ້.

ແລະ ທ່ານ ອະບູ ອັລ-ສະອາດາຕ ອິບນຸ ອັລ-ອະສີຣ ໄດ້ກ່າວວ່າ: ພວກເຂົາຄື ບັນດາຜູ້ທີ່ເວົ້າຈາແບບເຈາะເລິກ ແລະ ເກີນຂອບເຂດ, ເປັນຜູ້ທີ່ເວົ້າອອກມາຈາກສ່ວນໃນສຸດຂອງລຳຄໍ, ມີທີ່ມາຈາກຄຳວ່າ ອັນ-ນັຕອ໌ ຊຶ່ງແມ່ນ ເພດານປາກສ່ວນເທິງ, ຕໍ່ມາຄຳດັ່ງກ່າວກໍຖືກນຳມາໃຊ້ກັບທຸກໆຄົນທີ່ເຈາะເລິກເກີນໄປ ທັງໃນຄຳເວົ້າ ແລະ ການກະທຳ.

ແລະ ຈາກສິ່ງທີ່ອິມ່ຳທັງສອງທ່ານ ຜູ້ເປັນອິມ່ຳດ້ານພາສາໄດ້ກ່າວມານັ້ນ, ມັນຈຶ່ງເປັນທີ່ຊັດເຈນແກ່ທ່ານ ແລະ ແກ່ທຸກຄົນທີ່ມີຄວາມເຂົ້າໃຈແມ່ນພຽງເລັກນ້ອຍກໍຕາມວ່າ: ຮູບແບບໃນການກ່າວຊໍລະອາດ ແລະ ສະລາມຕໍ່ທ່ານນະບີຂອງພວກເຮົາ ແລະ ນາຍຂອງພວກເຮົາ ຜູ້ເປັນສາດສະດາທູດຂອງອັລລໍຫ໌ ﷺ ນີ້ນັ້ນ; ຖືເປັນສ່ວນຫນຶ່ງຂອງການເຮັດເກີນຄວາມຈຳເປັນ ແລະ ການອຸດຕະລິກ່ຳທີ່ຖືກຫ້າມ. ສິ່ງທີ່ຖືກກ່ຳນົດໄວ້ສຳລັບຊາວມຸສລິມໃນເລື່ອງນີ້ກໍຄື ການສະແຫວງຫາຮູບແບບທີ່ທ່ານສາສະນະທູດ ﷺ ໄດ້ກ່ຳນົດໄວ້ ໃນການກ່າວສໍລະອາດ ແລະ ສະລ

ามແດ່ທ່ານ, ແລະໃນນັ້ນກໍເປັນການພຽງພໍແລ້ວໂດຍບໍ່ຕ້ອງ
ພິ່ງສິ່ງອື່ນໃດອີກ.

ແລະ ຫນຶ່ງໃນນັ້ນກໍຄື: ຫະດີສທີ່ບັນທຶກໂດຍອັລ-ບຸກຄ໋ຣີ ແ
ລະ ມຸສລິມ ໃນຕໍາລາ ສອງສະບັບທີ່ຊໍ່ເຮັຍຂອງເພິ່ນທັ້ງສອງ, ຈ
ຊໍ່ງລາຍງານຈາກ ທ່ານ ກະອັບ ບິນ ອຸຈເຣາະ ຣໍດີຍັລລ໋ຮຸ ອັນຮຸ,
ວ່າແທ້ຈິງ ມີບັນດາສ໋ຮາບະຫ໌ (ຂໍອັລລ໋ຫ໌ຊົງພໍພຣະໄທແກ່ພວ
ກເພິ່ນ) ໄດ້ກ່າວຖາມວ່າ: ໂອ້ ທ່ານຣ໋ຊູລລ໋ລ໋ຮ໋ເອີຍ! ອັລລ໋ຮ໋ໄດ້
ຊົງບັນຊາພວກເຮົາໃຫ້ກ່າວສ໋ລະວາດແກ່ທ່ານ; ແລ້ວພວກເຮ
າຈະກ່າວສ໋ລະວາດແກ່ທ່ານຢ່າງໃດ? ທ່ານຈຶ່ງກ່າວວ່າ:

«قُولُوا: اللَّهُمَّ صَلِّ عَلَى مُحَمَّدٍ وَعَلَى آلِ مُحَمَّدٍ كَمَا صَلَّيْتَ عَلَى إِبرَاهِيمَ وَعَلَى آلِ إِبرَاهِيمَ، إِنَّكَ حَمِيدٌ مَجِيدٌ، وَبَارِكْ عَلَى مُحَمَّدٍ وَعَلَى آلِ مُحَمَّدٍ كَمَا بَارَكْتَ عَلَى إِبرَاهِيمَ وَعَلَى آلِ إِبرَاهِيمَ إِنَّكَ حَمِيدٌ مَجِيدٌ».

(ພວກເຈົ້າຈົ່ງກ່າວວ່າ: ໂອ້ອັລລ໋ຫ໌, ຂໍພຣະອົງປະທານຄວາ
ມເມຕາແກ່ມຸຮ໋ຳມັດ ແລະ ແກ່ບໍລິວານຕະກູນຂອງມຸຮ໋ຳມັດ,
ດັ່ງທີ່ພຣະອົງໄດ້ປະທານຄວາມເມດຕາແກ່ອິບຣ໋ຮີມ ແລະ ແກ່
ບໍລິວານຕະກູນຂອງອິບຣ໋ຮີມ, ແທ້ຈິງ, ພຣະອົງແມ່ນຜູ້ຄວນ
ຖືກສັນລະເສີນ ແລະ ຜູ້ຄອບຄອງກຽດທີ່ສູງສົ່ງ. ແລະ ຂໍພຣະອ
ົງປະທານຄວາມບາຣ໋ກະຮ໋ແກ່ທ່ານມຸຮ໋ຳມັດ ແລະ ແກ່ບໍລິວານ
ຕະກູນຂອງມຸຮ໋ຳມັດ, ດັ່ງທີ່ພຣະອົງໄດ້ປະທານຄວາມບາຣ໋ກະ
ຮ໋ແກ່ອິບຣ໋ຮີມ ແລະ ແກ່ບໍລິວານຕະກູນຂອງອິບຣ໋ຮີມ, ແທ້ຈິ
ງ, ພຣະອົງແມ່ນຜູ້ຄວນຖືກສັນລະເສີນ ແລະ ຜູ້ຄອບຄອງກຽ
ດທີ່ສູງສົ່ງ)

ແລະ ໃນບັນທຶກຂອງທ່ານອີຫມ່ຳທັ້ງສອງ ຈາກລາຍງານຂ
ອງທ່ານອະບີ ຮຸໄມດ ອັສສາອິດີ -ຣໍດີຍັລລ໋ຮຸອັນຮຸ- ແທ້ຈິງພວ

ກເຂົາໄດ້ກ່າວວ່າ: «ໂອ້ ທ່ານຣໍສູລຂອງອັລລໍຮ໌! ພວກເຮົາຈະກ່າວສໍລະອາດຕໍ່ທ່ານແນວໃດ?» ທ່ານໄດ້ກ່າວວ່າ:

«قُولُوا: اللَّهُمَّ صَلِّ عَلَى مُحَمَّدٍ وَعَلَى أَزْوَاجِهِ وَذُرِّيَّتِهِ كَمَا صَلَّيْتَ عَلَى آلِ إِبرَاهِيمَ، وَبَارِكْ عَلَى مُحَمَّدٍ وَعَلَى أَزْوَاجِهِ وَذُرِّيَّتِهِ كَمَا بَارَكْتَ عَلَى آلِ إِبرَاهِيمَ، إِنَّكَ حَمِيدٌ مَجِيدٌ».

(ໂອ້ອັລລໍຮ໌, ຂໍພຣະອົງປະທານຄວາມເມຕາແກ່ມຸຮໍາມັດ ແລະ ແກ່ບັນດາພັນລະຍາ ແລະ ລູກຫຼານຂອງເພິ່ນ, ດັ່ງຄວາມເມດຕາທີ່ພຣະອົງໄດ້ປະທານໃຫ້ແກ່ບໍລິວານຕະກູນຂອງອິບຣໍຮີມ, ແລະ ຂໍພຣະອົງປະທານຄວາມບາຣໍກະຮ໌ແກ່ມຸຮໍາມັດ ແລະ ແກ່ບັນດາພັນລະຍາ ແລະ ລູກຫຼານຂອງເພິ່ນ, ດັ່ງຄວາມບາຣໍກະຮ໌ທີ່ພຣະອົງປະທານໃຫ້ແກ່ບໍລິວານຕະກູນຂອງອິບຣໍຮີມ, ແທ້ຈິງ, ພຣະອົງແມ່ນຜູ້ຄອບຖືກສັນລະເສີນ ແລະ ຜູ້ຄອບຄອງກຽດທີ່ສູງສົ່ງ)

ໃນຕໍາລາຫະດີຊ ສໍຮີຫ໌ຂອງມຸສລິມ ຈາກທ່ານ ອະບີ ມັສອູດ ອັລ-ອັນຊໍຣີ ຣໍດີຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: ທ່ານ ບະຊີຣ ບິນ ສະອັດ ໄດ້ກ່າວວ່າ: ໂອ້ ທ່ານສາດສະດາທູດຂອງອັລລໍຮ໌! ອັລລໍຮ໌ໄດ້ບັນຊາໃຫ້ພວກເຮົາກ່າວສໍລະອາດໃຫ້ແກ່ທ່ານ; ດັ່ງນັ້ນພວກເຮົາຈະກ່າວສໍລະອາດໃຫ້ແກ່ທ່ານແນວໃດ? ເພິ່ນຈຶ່ງນິ່ງໄປ ແລ້ວຈຶ່ງກ່າວວ່າ:

«قُولُوا: اللَّهُمَّ صَلِّ عَلَى مُحَمَّدٍ وَعَلَى آلِ مُحَمَّدٍ؛ كَمَا صَلَّيْتَ عَلَى آلِ إِبرَاهِيمَ، وَبَارِكْ عَلَى مُحَمَّدٍ وَعَلَى آلِ مُحَمَّدٍ؛ كَمَا بَارَكْتَ عَلَى آلِ إِبرَاهِيمَ فِي العَالَمِينَ، إِنَّكَ حَمِيدٌ مَجِيدٌ، وَالسَّلَامُ كَمَا عَلِمتُم».

"ຈຶ່ງກ່າວວ່າ: ໂອ້ອັລລໍຮ໌, ຂໍພຣະອົງປະທານຄວາມເມຕາແກ່ມຸຮໍາມັດ ແລະ ແກ່ບໍລິວານຕະກູນຂອງມຸຮໍາມັດ, ດັ່ງຄວາມ

ມດຕາທີ່ພຣະອົງໄດ້ປະທານໃຫ້ແກ່ບໍລິວານຕະກູນຂອງອິບຣ໌ຮີມ, ແລະ ຂໍພຣະອົງປະທານຄວາມບາຣ໌ກະຮ໌ແກ່ມຸຮຳມັດ ແລະ ແກ່ບໍລິວານຕະກູນຂອງມຸຮຳມັດ, ດັ່ງຄວາມບາຣ໌ກະຮ໌ທີ່ພຣະອົງໄດ້ປະທານໃຫ້ແກ່ບໍລິວານຕະກູນຂອງອິບຣ໌ຮີມໃນທ່ວໂລກ, ແທ້ຈິງ, ພຣະອົງແມ່ນຜູ້ຄວນຖືກສັນລະເສີນ ແລະ ຜູ້ຄອບຄອງກຽດທີ່ສູງສົ່ງ, ແລະ ການໃຫ້ສະລາມນັ້ນແມ່ນດັ່ງທີ່ພວກທ່ານໄດ້ຮຽນຮູ້ກັນມາ."

ສະນັ້ນ ຖ້ອຍຄຳເຫຼົ່ານີ້ ແລະ ບັນດາຖ້ອຍຄຳອື່ນໆ ທີ່ຄ້າຍຄືກັນ -ທີ່ໄດ້ຮັບການຢືນຢັນຈາກທ່ານນະບີ ﷺ- ແມ່ນສິ່ງທີ່ຊາວມຸດສະລິມຄວນນຳໃຊ້ໃນການກ່າວສໍລະອາດ ແລະ ສະລາມແດ່ ສາດສະດາທູດຂອງອັລລ໋ອ ﷻ; ເພາະວ່າທ່ານສາດສະນະທູດ ﷺ ແມ່ນຜູ້ທີ່ຮູ້ດີທີ່ສຸດໃນບັນດາມະນຸດ ເຖິງສິ່ງທີ່ເໝາະສົມທີ່ຈະຖືກນຳໃຊ້ສຳລັບກຽດສັກສີຂອງທ່ານ, ເຊັ່ນດຽວກັນທີ່ທ່ານກໍເປັນຜູ້ທີ່ຮູ້ດີທີ່ສຸດໃນບັນດາມະນຸດ ເຖິງບັນດາຖ້ອຍຄຳທີ່ຄວນຈະຖືກນຳໃຊ້ສຳລັບພຣະຜູ້ເປັນເຈົ້າຂອງລາວ.

ສ່ວນບັນດາຄຳເວົ້າທີ່ເສກສັນປັ້ນແຕ່ງ ແລະ ທີ່ອຸບປະໂຫຼກຂຶ້ນໃໝ່, ແລະ ບັນດາຄຳເວົ້າທີ່ອາດຈະພາໃຫ້ເຂົ້າໃຈໃນຄວາມໝາຍທີ່ບໍ່ຖືກຕ້ອງ; ເຊັ່ນດຽວກັບຄຳສັບຕ່າງໆ ທີ່ໄດ້ກ່າວເອ່ໃນຄຳຖາມ, ຈຶ່ງບໍ່ສົມຄວນນຳມາໃຊ້; ເນື່ອງຈາກວ່າມັນມີການເສກສັນປັ້ນແຕ່ງ, ແລະ ອາດຈະຖືກຕີຄວາມໝາຍໄປໃນທາງທີ່ບໍ່ຖືກຕ້ອງ, ພ້ອມທັງຍັງຂັດກັບບັນດາຄຳເວົ້າທີ່ທ່ານສາດສະດາຂອງອັລລ໋ອ ໄດ້ຄັດເລືອກ ແລະ ຊີ້ນຳປະຊາຊາດຂອງເພິ່ນ. ເພິ່ນເປັນຜູ້ທີ່ມີຄວາມຮູ້ທີ່ສຸດໃນບັນດາສິ່ງທີ່ຖືກສ້າງທັງຫຼາຍ, ເປັນຜູ້ທີ່ຈິງໃຈໃນການຕັກເຕືອນທີ່ສຸດ ແລະ ເປັນຜູ້ທີ່ຢູ່ຫ່າງໄກຈາກການເສກສັນປັ້ນແຕ່ງທີ່ສຸດ, ຂໍການສັນລະເສີນ ແລະ

ສັນຕິສຸກອັນປະເສີດທີ່ສຸດຈາກພະຜູ້ເປັນເຈົ້າຂອງເພິ່ນຈົ່ງປະສົບແດ່ເພິ່ນ.

ແລະ ຫລັງຈ່ຳສິ່ງທີ່ເຮົາໄດ້ກ່າວມາຈາກບັນດາຫຼັກຖານຕ່າງໆ ໃນການອະທິບາຍເຖິງຄວາມຈິງຂອງຫຼັກເຕົ້າຮິດ, ແລະ ຄວາມຈິງຂອງການຕັ້ງພາຄີ, ແລະ ຄວາມແຕກຕ່າງລະຫວ່າງພວກມຸຊຣິກິນຍຸກຕົ້ນໆ ແລະ ພວກມຸຊຣິກິນໃນສະໄໝຫຼ້າໆ ໃນບົດນີ້, ແລະ ໃນການອະທິບາຍເຖິງວິທີການກ່າວຊ່ຳລະອາດທີ່ຖືກຕາມບັນຍັດແດ່ທ່ານວ່ຳລຸວຂອງອັລລ່ຳ ຊ່ຳລ້ຳລ່ຳ ຮຸອະໄລຮິ ອະຊ້ຳລ່ຳ ນັ້ນ ຈະເປັນທີ່ພຽງພໍ ແລະ ສ້າງຄວາມກະຈ່າງແຈ້ງແກ່ຜູ້ທີ່ສະແຫວງຫາສັດຈະທຳ. ສ່ວນຜູ້ທີ່ບໍ່ມີຄວາມປາດຖະໜາໃນການຮັບຮູ້ສັດຈະທຳ; ຜູ້ນີ້ກໍເປັນຜູ້ທີ່ເຮັດຕາມອາລົມໃຝ່ຕ່ຳຂອງຕົນ, ອັລລ່ຳ ຜູ້ຊົງຍິ່ງໃຫຍ່ ແລະ ສູງສົ່ງ ໄດ້ຕຣັດໄວ້ວ່າ:

﴿فَإِن لَّمۡ يَسۡتَجِيبُواْ لَكَ فَٱعۡلَمۡ أَنَّمَا يَتَّبِعُونَ أَهۡوَآءَهُمۡۚ وَمَنۡ أَضَلُّ مِمَّنِ ٱتَّبَعَ هَوَىٰهُ بِغَيۡرِ هُدٗى مِّنَ ٱللَّهِۚ إِنَّ ٱللَّهَ لَا يَهۡدِي ٱلۡقَوۡمَ ٱلظَّٰلِمِينَ ٥٠﴾

(ຖ້າຫາກພວກເຂົາບໍ່ຕອບຮັບແກ່ເຈົ້າ ກໍ່ຈົ່ງຮູ້ໄວ້ເຖີດວ່າ ພວກເຂົາພຽງແຕ່ປະຕິບັດຕາມອາລົມໃຝ່ຕ່ຳຂອງພວກເຂົາເທົ່ານັ້ນ ແລະ ໃຜເລ່ົາຈະຫລົງທາງຍິ່ງໄປກວ່າຜູ້ທີ່ປະຕິບັດຕາມອາລົມໃຝ່ຕ່ຳຂອງເຂົາ ໂດຍປາສະຈາກການຊີ້ນ່ຳຈາກອັລລ່ຳ ແທ້ຈິງອັລລ່ຳຈະບໍ່ຊົງຊີ້ນ່ຳທາງແກ່ກຸ່ມຊົນຜູ້ອະທຳທັ້ງຫລາຍ) [ສຸເຣາะห์ ອັລກ່ຳສ໌ : 50].

ດັ່ງທີ່ພຣະອົງ (ອັລລ່ຳ) ຊົງອະທິບາຍໃນອາຍະห์ອັນປະເສີດນີ້ວ່າ: ມະນຸດທັ້ງຫຼາຍ ຕ່ຳສິ່ງທີ່ພຣະອົງໄດ້ສົ່ງມາພ້ອມກັບນະບີຂອງພຣະອົງ ຄື ມຸຮ່ຳມັດ ﷺ ຈາກບັນດາທາງນ່ຳ (ຮຸດາ) ແລະ

ສາສະໜາທີ່ເປັນຄວາມຈິງ — ຖືກແບ່ງອອກເປັນ 2 ກຸ່ມ.

ໜຶ່ງໃນນັ້ນຄື: ການຕອບສະໜອງຕໍ່ອັລລໍຮ໌ ແລະ ສາສະນະທູດຂອງພຣະອົງ.

ແລະ ຂໍ້ສອງກໍ່ຄື: ຜູ້ທີ່ຕາມອາລົມໃຜ່ຕ່ຳຂອງຕົນ; ຕໍ່ມາພຣະອົງໄດ້ຊີ້ກ່າວວ່າ ບໍ່ມີໃຜຫຼົງທາງຍິ່ງກວ່າຜູ້ທີ່ຕາມອາລົມໃຜ່ຕ່ຳຂອງຕົນ ໂດຍປາສະຈາກການນຳທາງຈາກອັລລໍຮ໌.

ສະນັ້ນ ເຮົາຈຶ່ງຂໍຕໍ່ອັລລໍຮ໌ ຜູ້ຊົງສູງສົ່ງຍິ່ງໃຫຍ່ ໃຫ້ຊົງໂປດປະທານຄວາມປອດໄພຈາກການຕາມອະລົມໃຜ່ຕ່ຳ, ແລະ ຂໍໃຫ້ພຣະອົງຊົງບັນດານໃຫ້ພວກເຮົາ ແລະ ພວກທ່ານ ພ້ອມດ້ວຍບັນດາພີ່ນ້ອງຂອງພວກເຮົາທັງໝົດ ໃຫ້ເປັນຜູ້ທີ່ຕອບຮັບຕໍ່ອັລລໍຮ໌ ແລະ ສາດສະດາທູດຂອງພຣະອົງ ﷺ, ເປັນຜູ້ທີ່ໃຫ້ຄວາມຍິ່ງໃຫຍ່ຕໍ່ບັນຍັດຂອງພຣະອົງ, ແລະ ເປັນຜູ້ທີ່ຕັກເຕືອນໃຫ້ລະວັງຈາກທຸກສິ່ງທີ່ຂັດກັບບັນຍັດຂອງພຣະອົງ ອັນໄດ້ແກ່ ບັນດາບິດອະຫ໌ ແລະ ອະໂລມໃຜ່ຕ່ຳ.. ແທ້ຈິງພຣະອົງຊົງເປັນຜູ້ໂອບອ້ອມອາລີ, ຜູ້ຊົງເມດຕາຍິ່ງ.

ຂໍອັລລໍຮ໌ ຊົງປະທານຄວາມສັນຕິຈຳເລີນແດ່ບ່າວຂອງພຣະອົງ ແລະ ຣໍຊູລຂອງພຣະອົງ, ທ່ານນະບີມຸຮຳມັດຂອງເຮົາ, ຄອບຄົວຂອງທ່ານ, ບັນດາມິດສະຫາຍຂອງທ່ານ ແລະ ບັນດາຜູ້ທີ່ຈະເດີນຮ່ອຍຕາມທ່ານດ້ວຍຄວາມດີງາມຈົນເຖິງວັນແຫ່ງການຕອບແທນ.

***

رئاسة الشؤون الدينية بالمسجد الحرام والمسجد النبوي

رسالة الحرمين

ສານຈາກສອງສະຖານທີ່ ແຫ່ງຄວາມສັກສິດ

ເນື້ອຫາຄຳແນະນຳທາງສາສະໜາ
ສຳຫຼັບຜູ້ທີ່ເດີນທາງສູ່ມັສຍິດອັລຫະຣອມ
ແລະ ມັສຍິດອັນນະບະວີ ໃນພາສາຕ່າງໆ